ກັນນີ້ ຈະນຳຜົນກະທົບໃນດ້ານອື່ນເຊັ່ນ : ການຄຸ້ມຄອງຊັບພະຍາກອນນ້ຳຮ່ວມກັນ, ການປ້ອງກັນໄພນ້ຳຖ້ວມ ແລະ ໂຄງການຕ່າງໆທີ່ໄດ້ສະເໜີເພື່ອການຍຸດຕິການຖາງປ່າເຮັດໄຮ່ ເຊັ່ນດຽວກັນກັບບັນດາໂຄງການພັດທະນາກະສິກຳໃນເຂດທົ່ງພຽງ. ໃນປະຈຸບັນມີເຂດປົກປັກຮັກສາແຫຼ່ງນ້ຳປະ ມານ 5 ລ້ານເຮັກຕາ ສ່ວນຫຼາຍເຂດດັ່ງກ່າວຈະນອນຢູ່ໃນເຂດປ່າສະຫງວນ ແລະ ເຂດຮັກສາລະບົບນິເວດ ທີ່ກຳລັງຖືກຊາວໄຮ່ບຸກລຸກ ໂດຍທີ່ໄປແລ້ວເຂດດັ່ງກ່າວ ໄດ້ໝາຍໄວ້ໃນແຜນທີ່ແຕ່ໃນພາກສະໜາມແລ້ວ ບໍ່ໄດ້ມີມາດຕະການພຽງພໍເພື່ອປົກປັກຮັກສາ ແລະ ຈັດສັນເຂດດັ່ງກ່າວ. ພວກເຮົາ ຈະອອກແຮງເສັ່ງຖົມລ້າງ ໃນການລົງທຶນຟື້ນຟູລະບົບຊົນລະປະທານ ຫຼື ໃນການສ້າງລະບົບຊົນລະປະທານໃໝ່ ຖ້າຫາກອ່າງໂຕ່ງນ້ຳທີ່ສະໜອງນ້ຳໃຫ້ແກ່ລະບົບດັ່ງກ່າວ ໃນທົ່ງພຽງຫາກບໍ່ໄດ້ ຖືກປົກປັກຮັສາ. ດັ່ງນັ້ນ, ມັນມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງ ປົກປັກຮັກສາ ແລະ ຈັດສັນບັນດາອ່າງໂຕ່ງທີ່ມີຢູ່ພ້ອມທັງລຸດຜ່ອນດິນເຊາະເຈື່ອນ ແລະ ນ້ຳຖ້ວມໄວ. ການລົງທຶນວາງມາດຕະການປົກປັກຮັກສາດັ່ງກ່າວ ຈະສ້າງຜົນຮັບອັນສູງໃຫ້ກະສິກຳຢູ່ທົ່ງພຽງ ພ້ອມກັນນັ້ນຍັງໄດ້ປ້ອງກັນ ແລະ ຮັກສາລະບົບນ້ຳໄຫຼໄປສູ່ປະເທດຕ່າງໆ ທີ່ຢູ່ໃນເຂດອ່າງນ້ຳຂອງຕອນໄຕ້.

ເຂດເນີນສູງ ແລະ ເຂດດິນພຽງໄດ້ຖືກບັນຈຸເຂົ້າໃນແຜນງານ ແລະ ໂຄງການສ້າງແຜນໃຫ້ແກ່ອ່າງໂຕ່ງຂອງແຕ່ລະສາຍນ້ຳ ໃນໂຄງການດັ່ງກ່າວຖືສຳຄັນການທົດລອງວິໄຈ ດິນ ແລະ ນ້ຳ. ເພາະວ່າຊາວກະສິກອນຍັງຂາດຄຳແນະນຳ ຕໍ່ລະບົບດິນປູກຝັງ ແລະ ວິທີປັບປຸງທີ່ດິນຂອງເຂົາເຈົ້າ.ມີດິນຫຼາຍປະເພດທີ່ເປັນດິນສົ້ມ ແລະ ມີທາດອາລູມີນຽມ. ດິນຊະນິດອື່ນມີທາດອິນຊີພື້ນຖານນ້ອຍ ແລະ ເປັນແຫຼ່ງເກີດຂອງການເຊາະເຈື່ອນ. ດັ່ງນັ້ນ, ການວິໄຈດິນຄວນເປັນໜ້າທີ່ຕົ້ນຕໍ່ນຶ່ງຂອງວຽກງານສົ່ງເສີມ. ການປະກອບທາດເສີມ ເພື່ອປັບປຸງດິນເຊັ່ນ : ທາດກາຣຊີໂດໂລໄມ ຫຼື ທາດກາວຈະສາມາດຍົກສະມັດຕະພາບການຜະລິດຂອງພືດຫຼາຍຂຶ້ນ ອີກດ້ານໜຶ່ງ ການວິໄຈນ້ຳ ກໍ່ມີຄວາມສຳຄັນເພື່ອຊາວນາທີ່ເຮັດນາແຊງ ນ້ຳຢູ່ບາງແຫ່ງອາດຈະມີພິດ ຫຼື ເຄັມເກີນໄປ. ສະພາບດັ່ງກ່າວ ຈະຕ້ອງໄດ້ຖືກປັບປຸງຮັກສາ ແລະ ການປູກພືດຈະຕ້ອງໄດ້ຖືກປັບໄປດ້ວຍ.

ໂຄງການທີ່ໄດ້ສະເໜີນັ້ນ ແມ່ນໂຄງການ " ຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳຮ່ວມກັນ " ໂຄງການນີ້ ຈະແບ່ງປັນການນຳໃຊ້ ນ້ຳ ແລະ ມີແຜນແຈກຢາຍນ້ຳເພື່ອການກະສິກຳ, ພະລັງງານ, ອຸດສະຫະກຳ ແລະ ຕົວເມືອງແຜນການແບ່ງປັນ ຈະອີງຕາມອ່າງໂຕ່ງໂດຍສະເພາະກຳລັງຂະແໜງການກະສິກຳ ແລະ ພະລັງງານ, ສ່ວນຂະແໜງອຸດສະຫະກຳ ແລະ ເຂດຕົວເມືອງຈະສາມາດນຳໃຊ້ນ້ຳໃຕ້ດິນ ໃນລະດັບໃດໜຶ່ງ. ດັ່ງນັ້ນ, ຖ້າຫາກບໍ່ມີ

ການປົກປັກຮັກສາອ່າງໂຕ່ງເປັນຢ່າງດີ ບໍລິມາດນ້ຳ ທັງຄຸນນະພາບນ້ຳ ຈະມີການປ່ຽນແປງຫຼາຍໃນແຕ່ລະດູການ ສະພາບດັ່ງກ່າວຈະສ້າງຜົນກະທົບທາງລົບຕໍ່ຂະແໜງການກະສິກຳ ແລະ ພະລັງງານໄຟຟ້ານ້ຳຕົກ. ດ້ວຍເຫດນີ້ ຈຶ່ງໄດ່ເອົາໃຈໃສ່ວຽກງານຄຸ້ມຄອງອ່າງໂຕ່ງເປັນພິເສດ.

(c) ການຄົ້ນຄ້ວາວິໃຈ

ມີຄວາມຕອ້ງການຄົ້ນຄວ້າວິໃຈໃນທຸກດ້ານ ເລີ່ມຈາກການຄົ້ນຄ້ວາໂຄງປະກອບຂອງດິນກະສິກຳເນີນສູງໄປເຖິງດິນທົ່ງນາຮັບນ້ຳຊົນລະປະທານ ພ້ອມທັງຄົ້ນຄ້ວາເບິ່ງການປູກພືດ ໃນແຕ່ລະໆດູໃສ່ດິນລົ້ມ, ດິນກາງ ແລະ ດິນເຄັມ. ໄດ້ສະເໜີໃຫ້ມີການພັດທະນາເຕັກໂນໂລຢີປົກປັກຮັກສາດິນ ແລະ ນ້ຳ " ເພື່ອຊອກຫາເຕັກໂນໂລຢີທີ່ເໝາະສົມ ເພື່ອການຄຸ້ມຄອງຈັດສັນດີ ແລະ ນ້ຳ. ໂຄງການຄົ້ນຄ້ວາວິໃຈ ແບບທົດລອງເຮັດຕົວຈິງໄປພ້ອມຈະສະໜອງຂໍ້ມູນຂ່າວສານດ້ານການນຳໃຊ້ ດິນແຕ່ລະປະເພດໃຫ້ແກ່ຍັນດາພະນັກງານສະເພາະດ້ານ ພະນັກງານສົ່ງເສີມໂດຍສະເພາະໃນເຂດເນີນສູງ, ພ້ອມນັ້ນຍັງໄດ້ສະເໜີ " ໂຄງການຄົ້ນຄ້ວາການຄຸ້ມຄອງຊົນລະປະທານ " ເພື່ອສົ່ງເສີມໃຫ້ແກ່ໂຄງການເທິງນີ້. ໂຄງການດັ່ງກ່າວ, ຈະຂະຫຍາຍກິດ ຈະການຄົ້ນຄ້ວາວະໃຈ ດ້ານການຄຸ້ມຄອງຊົນລະ ປະທານ . ໃນປັດຈຸບັນ ມີການນຳໃຊ້ເຕັກໂນໂລຢີ ປະຖົມປະຖານທີ່ນຳໄປເຖິງການນຳໃຊ້ນ້ຳແບບຟຸ່ມເຟືອຍ, ຈຳກັດການຂະຫຍາຍຕົວຂອງເນື້ອທີ່ຊົນລະປະທານ ແລະ ດູດເອົາດິນເຄັມຂຶ້ນມາໜ້າດິນ ເຮັດໃຫ້ບໍ່ສາມາດປູກຝັງໄດ້. ຈະໄດປັບປຸງເຕັກນິກເພື່ອນຳໃຊ້ນ້ຳຊົນລະປະທານໃຫ້ມີປະສິດຕິຜົນສູງຂຶ້ນ.

ໂຄງການພື້ນຟູ ແລະ ຂະຫຍາຍສະຖານີອຸຕ / ອຸທົກກະສາດ ເພື່ອການພັດທະນາກະສິກຳ ແລະ ປ້ອງກັນນ້ຳຖ້ວມ " ຈະປະກອບການພື້ນຟູຍົກລະດັບຄວາມສາມາດໃຫ້ແກ່ສະຖານີອຸຕຸນິຍົມ ທີ່ໃນປະຈຸບັນປະກອບມີອຸປະກອນທີ່ເກົ່າແກ່ ແລະ ໄຊ້ການບໍ່ໄດ້. ຊາວກະສິກອນຕ້ອງການຂໍ້ມູນພະຍາກອນອາກາດ ແລະ ສະພາຍນ້ຳຖ້ວມຢ່າງສັດເຈນ ໂດຍທັນການເພື່ອຊ່ວຍເຫຼືອການວາງແຜນກິດຈະກຳຜະລິດຂອງເຂົາເຈົ້າ.

(d) ມາດຕະການປ້ອງກັນສິ່ງແວດລ້ອມ

ອົງການວິທະຍາສາດ ແລະ ສິ່ງແວດລ້ອມ ( STEA ) ມີຄວາມຕ້ອງການຊ່ວຍເຫຼືອດ້ານ : ການຊຸກຍູ້ສ້າງສາມາຄົມຄຸ້ມຄອງດິນໃນຊຸມຊົນ, ປັບປຸງການເກັບກຳຂໍ້ມູນດ້ານສິ່ງແວດລ້ອມທີ່ກ່ຽວພັນກັບກະສິກຳ, ໃຫ້ການຊ່ວຍເຫຼືອໃນການສ້າງສາ ແລະ ປະຕິບັດຂໍ້ກຳນົດກົດ

ລະບຽບດ້ານສິ່ງແວດລ້ອມກະສິກຳ, ປ່າໄມ້ ແລະ ການປະມົງ ແລະ ການຊ່ວຍເຫຼືອໃນການສ້າງສາ ແລະ ປະຕິບັດຂໍ້ກຳນົດກົດລະບຽບດ້ານສິ່ງແວດລ້ອມກ່ຽວກັບການປຸງແຕ່ງກະສິກຳ, ອຸດສະຫະກຳກະເສດ ແລະ ອຸດສະຫະກຳພື້ນບ້ານ. ດັ່ງນັ້ນ, ຈຶ່ງໄດ້ສະເໜີໂຄງການ " ຊ່ວຍເຫຼືອໃຫ້ແກ່ອົງການວິທະຍາສາດ ແລະ ສິ່ງແວດລ້ອມເພື່ອສົ່ງເສີມພັດທະນາສິ່ງແວດລ້ອມ ເປັນມິດດ້ານກະສິກຳ ". ເພື່ອຮັບປະກັນໃຫ້ມີສິ່ງແວດລ້ອມທີ່ດີ ໃນການຜະລິດລະດັບຟາມ ແລະ ກິດຈະກຳອື່ນໆ ໃນຊົນນະບົດພ້ອມທັງຄວາມສຳຄັນ ໃນການກວດກາຕິດຕາມ ສະພາບສິ່ງແວດລ້ອມໃນຕົວເມືອງ ແລະ ຂອງກິດຈະກຳອຸດສະຫະກຳຕ່າງໆ. ຖ້າບໍ່ໄດ້ກວດກາຕິດຕາມສະພາບແວດລ້ອມຢ່າງຖືກຕ້ອງ ການປະຕິບັດກິດຈະກຳຜະລິດ ແລະ ປຸງແຕ່ງກະສິກຳບາງອັນຈະນຳໄປເຖິງການກະທົບຕໍ່ສິ່ງແວດລ້ອມ ຢ່າງຮ້າຍແຮງ ທີ່ບໍ່ພຽງແຕ່ທຳລາຍເຂດເນື້ອທີ່ອັນໄກ້ເທົ່ານັ້ນ ແຕ່ສາມາດທຳລາຍສະພາບໃນເຂດພື້ນທີ່ ຫຼືໃນທົ່ວໂລກກໍ່ໄດ້.

ທຸກໆກະຊວງ ຈະຕ້ອງໄດ້ສ້າງຂໍ້ກຳນົດໃນການສຶກສາສິ່ງແວດລ້ອມ ໃນຂະແໜງການຂອງຕົນເອັງໃຫສຳເລັດໃນເດືອນມີນາ 2002 ພ້ອມນັ້ນຈະຕ້ອງໄດ້ສະເໜີໂຄງການພົວພັນກັບສິ່ງແວດລ້ອມ ທີ່ກຳລັງປະຕິບັດກັນຢູ່ໃຫ້ອົງການວິທະຍາສາດ ແລະ ສິ່ງແວດລ້ອມ. ກະຊວງກະສິກຳປ່າໄມ້ ໄດ້ສັງລວມໂຄງການກ່ຽວກັບສິ່ງແວດລ້ອມ ແລະ ຕ້ອງການການ ຊ່ວຍເຫຼືອໃນການຂຽນຂໍ້ກຳນົດດ້ານສິ່ງແວດລ້ອມ ໃຫ້ຂະແໜງຂອງຕົນ. ດັ່ງນັ້ນ, ຈະຕ້ອງໄດ້ສ້າງໂຄງການ ເພື່ອຊ່ວຍກະຊວງກະສິກຳ. ກິດ ຈະການທີ່ໄດ້ສະເໜີພາຍໃຕ້ການສຶກສາແຜນແມ່ບົດສະບັບນີ້ ແມ່ນການວິເຄາະສະພາບຜົນກະທົບ ຕໍ່ສິ່ງແວດລ້ອມເບື້ອງຕົ້ນ (IEE ) ແລະ ສຶກສາເບິ່ງໂຄງການທີ່ຕ້ອງການການໃດ້ປະຕິບັດ. ການສຶກສາຜົນກະທົບຕໍ່ສິ່ງແວດລ້ອມລະອຽດ ກ່ອນຈະໄດ້ຮັບໃບຢັ້ງຢືນຄວາມປອດໄພດ້ານສິ່ງແວດລ້ອມ. ກະຊວງກະສິກຳປ່າໄມ້ ແລະ ອົງການໃຫ້ທຶນຈະເປັນຜູ້ພັດທະນາໂຄງການຫຼາຍໂຄງການ ໃນອານາຄົດ ໂຄງການດັ່ງກ່າວຈະຕ້ອງໄດ້ວິເຄາະຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນ. ອົງການວິທະຍາສາດ ແລະ ສິ່ງແວດລ້ອມຈະມາດຊ່ວຍຍເຫຼືອກະຊວງກະສິກຳດ້ານນີ້.

(3) **ຂັ້ນຕອນການປະຕິບັດ**

ໃນ 8 ໂຄງການ ທີ່ໄດ້ສະເໜີມາຂ້າງເທິງນີ້ມີ 4 ໂຄງການທີ່ຈະປະຕິບັດໃນໄລຍະອັນໄກ້ ແລະ ມີ 4ໂຄງການທີ່ຈະປະຕິບັດໃນໄລຍະອັນໄກ້.

ຍຸດທະສາດການປະຕິບັດໃນເວລາອັນໄກ້ນີ້ ປະກອບມີການເສີມສ້າງຄວາມເຂັ້ມແຂງຕໍ່ກິດຈະການທີ່ກຳລັງປະຕິບັດ ແລະ ມີ 4 ໂຄງການທີ່ໄດ້ນຳສະເໜີໃຫ້ປະຕິບັດໃນທີ່ນີ້.

- ໂຄງການວາງແຜນນຳໃຊ້ ແລະ ແບ່ງປັນທີ່ດິນ, ຈົດທະບຽນທີ່ດິນ.
- ໂຄງການຈັດເຂດຜະລິດກະສິກຳ, ຄຸ້ມຄອງດິນປູກຝັງ ແລະ ພັດທະນາລະບົບຟາມ.
- ໂຄງການຈັດສັນແຫຼ່ງນ້ຳ
- ໂຄງການຟື້ນຟູ ແລະ ຍົກລະດັບສະຖານີອຸຕຸນິຍົມອຸທົກກະສາດ ເພື່ອພັດທະນາກະສິກຳ ແລະ ປ້ອງກັນນ້ຳຖ້ວມ

ໂຄງການທີ່ກ່າວມາຂ້າງເທິງນີ້ມີຄວາມສຳຄັນໃນການຊຸກຍູ້ກິດຈະກຳກະສິກຳອື່ນໆ ອີກທີ່ໄດ້ສະເໜີປະຕິບັດໃນໄລຍະດຽວກັນ. ໂຄງການທີ່ສະເໜີປະຕິບັດໃນໄລຍະອັນຍາວມີ :

- ໂຄງການຄຸ້ມຄອງຊັບພະຍາກອນນ້ຳຮ່ວມກັນ
- ໂຄງການຄົ້ນຄ້ວາເຕັກໂນໂລຢີດ້ານການປົກປັກຮັກສາດິນ ແລະ ນ້ຳ
- ໂຄງການຄົ້ນຄ້ວາວິໄຈຄຸ້ມາຄອງຊົນລະປະທານ
- ໂຄງການພັດທະນາສິ່ງແວດລ້ອມກະສິກຳແບບເປັນມິດ

ບັນດາໂຄງການ ທີ່ກ່າວມາຂ້າງເທິງນີ້ ກໍ່ມີຄວາມສຳຄັນເຊັ່ນດຽວກັນ ແຕ່ໄດ້ຖືກຈັດໄປປະຕິບັດຕາມຫຼັງ 10 ປີ ຍ້ອນການຂາດເຂີນພະນັກງານທີ່ມີຄວາມສາມາດ.

(4) ຜົນຮັບທີ່ຄາດຄະເນໄວ້

ໄດ້ຄາດຄະເນຜົນຮັບດັ່ງລຸ່ມນີ້ ສະເພາະຍຸດທະສາດປະຕິບັດໄລຍະສັ້ນ ແລະ ໄລຍະກາງ

- ເຂດເນື້ອທີ່ຮັບຜິດຊອບຂອງບ້ານ ຂອງຄອບຄົວໄດ້ຖືກແບ່ງປັນ, ໄດ້ມີການວາງແຜນນຳໃຊ້ທີ່ດິນຕາມຄວາມເໝາະສົມຂອງເຂດທີ່ດິນບ້ານ, ໂດຍມີການແບ່ງດິນແບ່ງປ່າຕາມຄວາມຕ້ອງການ ແລະ ຕາມຂໍ້ກຳນົດກົດລະບຽບ ຂອງລັດ, ການແບ່ງດິນໄດ້ກາຍປັນບາດກ້າວອັນຈຳເປັນເພື່ອການຈົດທະບຽນທີ່ດິນ ແລະ ອອກໃບຕາດິນ ແລະ ໄດ້ກາຍເປັນບາດກ້າວອັນຈຳເປັນເພື່ອປັບປຸງຜົນຜະລິດກະສິກຳ ແລະ ຍຸດຕິການຖາງປ່າເຮັດໄຮ່ ແລະ ໄດ້ມມີແຜນການອະນຸລັກປົກປັກຮັກສາປ່າໄມ້ແບບຊຸມຊົນ.
- ໄດ້ສ້າງແຜນທີ່ຈັດປະເພດດິນ ແລະ ເຂດຜະລິດກະສິກຳພ້ອມທັງສະຖິຕິລະອຽດໃຫ້ແກ່ເມືອງ, ແຂວງ, ເຂດຫຼາຍແຂວງ ແລະ ເຂດທົ່ວປະເທດ. ແຜນທີ່ດັ່ງກ່າວຈະຖືກນຳໃຊ້ໃນການວາງແຜນນຳໃຊຊ້ທີ່ດິນດ ຄຸ້ມຄອງທີ່ດິນ ແລະ ພັດທະນາລະບ ົບຟາມ.ແຜນທີ່ຈະໄດ້ຖືກສ້າງຂື້ນບົນພື້ນຖານ ແຜນທີ່ການນຳໃຊ້ທີ່ດິນທີ່ມີແລ້ວ ຈະສາມາດຕິດຕາມການປ່ຽນແປງເຂດນຳໃຊ້ທີ່ດິນໃນແຕ່ລະໄລຍະ ໃນແຕ່ລະເມືອງ, ແຂວງ, ເຂດຫຼາຍແຂວງ ແລະ ໃນທົ່ວປະເທດ ພ້ອມທັງນຳເອົາຂໍ້ມູນ ໄປລົມທຽບ ແລະ ປັບປຸງຂໍ້ມູນການສຳຫຼວດກະສິກຳທົ່ວປະເທດ.

- ໄດ້ມີການຄຸ້ມຄອງການເຮັດໄຮ່ດີກ່ວາເກົ່າໃນເຂດເນີນສູງ ມີການກວດກາຕິດຕາມການໄຫຼຂອງແມ່ນ້ຳສາຍຕ່າງໆ( ຕະຫຼອດປີ ) ມີການປ້ອງກັນໄພນ້ຳຖ້ວມ ແລະ ລຸດຜ່ອນສະພາບດິນເຊາະເຈື່ອນ. ຜົນຮັບສຸດທ້າຍ ແມ່ນການຟື້ນຟູ ແລະ ຍົກລະດັບສະຖານີອຸຕຸນິຍົມ ເພື່ອໃຫ້ສາມາດໃນການຄຸ້ມຄອງປ້ອງກັນນ້ຳຖ້ວມ, ຄຸ້ມຄອງແຫຼ່ງນ້ຳ ແລະ ປັບປຸງການຈັດການຟາມ.
- ຜົນຮັບໄລຍະຍາວ ທີ່ມາຈາກການປະຕິບັດ 4 ໂຄງການທີ່ໄດ້ສະເໜີນັ້ນແມ່ນການສະໜອງນ້ຳໃຊ້ໃຫ້ຍືນນານ ( ໃຊ້ຊັບພະຍາກອນແຫຼ່ງນ້ຳຮ່ວມກັນ ) ນຳໃຊ້ທີ່ດິນແບບບໍ່ມີຜົນກະທົບ ຕໍ່ສິ່ງແວດລ້ອມ ( ໂດຍການຊ່ວຍເຫຼືອຈາກອົງການວິທະຍາສາດ ແລະ ສິ່ງແວດລ້ອມ ) ແລະ ການປົກປັກຮັກສາ ດິນ ແລະ ນ້ຳ ( ຜ່ານການນຳໃຊ້ເຕັກໂນໂລຢີໃໝ່ ) ແລະ ການຄຸ້ມຄອງນຳໃຊ້ນ້ຳຊົນລະປະທານ ທີ່ດີຂື້ນ ( ຜ່ານການບຄົ້ນຄ້ວາວິໃຈການຄຸ້ມຄອງຊົນລະປະທານ ).

6.3 **ສະຖາບັນ ແລະ ການຈັດຕັ້ງ.**

(1) **ຈຸດປະສົງຂອງການພັດທະນາ.**

ການບໍລິການການສົ່ງເສີມໃຫ້ແກ່ຊາວນາ ແມ່ນເຮັດບໍ່ໄດ້ດີເທົ່າທີ່ຄວນ ເພາະວ່າຂາດການລະດົມ ແລະ ທຶນ. ທຸກໆກິດຈະກຳການຄ້າເປັນຕົ້ນ ຢາປ້ອງກັນພະຍາດສັດ ແລະ ການຜະລິດລູກປາ ແລະ ອື່ນໆ ຈະມີປະສິດທິຜົນຫຼາຍກ່ວາ ຖ້າວ່າດຳເນີນການດ້ວຍພາກສ່ວນເອກະຊົນ. ບົດບາດຂອງລັດຖະບານ ຈະຕ້ອງໃຫ້ການສະໜັບສະໜູນແກ່ການບໍລິການ ແກ່ຊາວນາ ແລະ ການບໍລິໂພກໃນລາຄາທີ່ຕ່ຳ. ປະຊາຊົນຈະເປັນຕົວສະແດງຫຼັກໃນເສດຖະກິດຕະຫຼາດ. ຄວນຈຳໄວ້ວ່າ ລັດຖະບານຕ້ອງສຸມໃສ່ກິດຈະກຳ ການສະໜອງທີ່ເປັນແກ່ນສານການສະໜັບສະໜູນ ການບໍລິການເຖິງພື້ນທີ່ ບ່ອນທີ່ບໍ່ເປັນທີ່ດຶງດູດທາງດ້ານການເງິນຂອງພາກສ່ວນເອກະຊົນ.

ບົດບາດຂອງລັດຖະບານສຳລັບການກະສິກຳ ໃນເສດຖະກິດຕະຫຼາດ ຈະຕ້ອງໃຫ້ການສະໜັບສະໜູນການບໍລິການ, ໃນລາຄາຕ່ຳແກ່ພາກສ່ວນເອກະຊົນເປັນຕົ້ນ ຊາວນາ ແລະຜູ້ຊົມໃຊ້ທີ່ ຈະແມ່ນຜູ້ຫຼິ້ນບົດບາດຫຼັກໃນ ເສດຖະກິດຕະຫຼາດ. ຍ້ອນແນວນັ້ນ, ການພັດທະນາຈຸດປະສົງ ຂອງການພັດທະນາສະຖາບັນ ແລະ ການຈັດຕັ້ງແມ່ນ: I) ສ້າງຕັ້ງສິ່ງຊ່ວຍສ້າງບັນຍາກາດ ແກ່ການປະຕິບັດການຂອງກົນໄກຕະຫຼາດ ໃນຂະແໜງການກະສິກຳ; ii) ເພື່ອປັບປຸງໂຄງສ້າງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຕ່າງໆທີ່ຂຶ້ນກັບຢູ່ລະດັບແຂວງ ແລະ ເມືອງ ສຳລັບປ່ຽນແປງການບໍລິຫານການຈັດຕັ້ງຢ່າງມີປະສິດທິຜົນ.

(2) **ຍຸດທະສາດ ໃນການພັດທະນາ.**

ວຽກດັ່ງຕໍ່ລົງໄປນີ້ ແມ່ນ ຍຸດທະສາດການພັດທະນາ ໃນກໍລະນີການປັບປຸງສະຖາບັນ ແລະ ການຈັດຕັ້ງ.

(a) ການສ້າງຄວາມເຂັ້ມແຂງການຄຸ້ມຄອງ ແລະ ຄວາມອາດສາມາດ ໃນການປະຕິບັດການ ຂອງກະຊວງກະສິກໍາ ແລະ ປ່າໄມ້.

ການຄຸ້ມຄອງຕົວຈິ່ງ ແລະ ຄວາມອາດສາມາດໃນການປະຕິບັດການຂອງ ກະຊວງກະສິກໍາ ແລະ ປ່າໄມ້ ແມ່ນຍັງອ່ອນ ແລະ ຕ້ອງການການຊຸກຍູ້ເພີ່ມເຕີມ ໃນກໍລະນີປັບປຸງສະຖາບັນ ການຈັດຕັ້ງໃຫ້ເຂັ້ມແຂງ ແລະ ການພັດທະນາຊັບພະຍາກອນມະນຸດ. ກະຊວງກະສິກໍາ ແລະປ່າໄມ້ ຈະຕ້ອງໄດ້ສືບຕໍ່ສ້າງຄວາມເຂັ້ມແຂງ ແລະ ຊ່ວຍປັບປຸງປ່ຽນແປງຈາກການຈັກຕັ້ງຄວບຄຸມ ແລະ ບັນຊາໄປເປັນການຈັດຕັ້ງທີ່ອໍານວຍຄວາມສະດວກ ເພື່ອຊຸກຍູ້ພັດທະນາກະສິກໍາ ແລະ ປ່າໄມ້ ໄປຕາມການວິວັດຂອງເສດຖະກິດຕະຫຼາດ. ເພື່ອດໍາເນີນຕາມຈຸດປະສົງຫຼັກດັ່ງກ່າວນີ້ ຄວາມອາດສາມາດຂອງກະຊວງຈະຕ້ອງໄດ້ຮັບການປັບປຸງໃຫ້ເຂັ້ມແຂງ ໃນແງ່ຂອງການຄຸ້ມຄອງ, ການວາງແຜນ, ການປະສານງານ, ການຄົ້ນຄ້ວາ, ເງື່ອນໄຂການຊ່ວຍເຫຼືອ ແລະ ການປະຕິບັດ, ແລະ ເພື່ອຊຸກຍູ້ການສົ່ງເສີມກະສິກໍາ ເພື່ອຮັບຜິດຊອບຕໍ່ຄວາມຕ້ອງການຂອງຊາວນາ. ໃນການເຮັດການກະສິກໍາປະສົມປະສານ. ການພັດທະນາສະຖາບັນຕົ້ນຕໍຂອງໂຄງການນີ້ ຈະຕ້ອງໄດ້ປັບປຸງຂັ້ນຕອນການບໍລິຫານ ແລະ ການຄຸ້ມຄອງ, ຄວາມອາດສາມາດດ້ານການວາງແຜນ ແລະ ສະຖິຕິ, ການຄຸ້ມຄອງການພັດທະນາຊັບພະຍາກອນມະນຸດຕາມກົມ ແລະ ອົງການຕ່າງໆລະດັບສູນກາງ, ແຂວງ ແລະ ລະດັບເມືອງ. ກ່ຽວຂ້ອງກັບການພັດທະນາຊັບພະຍາກອນມະນຸດ ແລະ ສົ່ງເສີມກະສິກໍາ, ມີຄວາມຈໍາເປັນຈັດຕັ້ງຂຶ້ນ ແລະ ພັດທະນາອົງການສົ່ງເສີມກະສິກໍາແຫ່ງຊາດຂຶ້ນ (NAFEA) ພາຍໃຕ້ ໂຄງສ້າງດ້ານໜ້າທີ່ ແລະ ການຈັດຕັ້ງຂອງກະຊວງ. ການສ້າງຕັ້ງ ແລະ ພັດທະນາການຈັດຕັ້ງລັກສະນະນີ້ໄດ້ສືບຕໍ່ສັງລວມໄວ້ໃນຂໍ້ 7.3. ໂຄງການທີ່ສະເໜີຕ່າງໆມີດັ່ງຕໍ່ໄປນີ້:

- ສ້າງຄວາມເຂັ້ມແຂງ ດ້ານການປະຕິບັດການ ການຄຸ້ມຄອງ ແລະ ການບໍລິຫານຂອງການປັບປຸງຂັ້ນຕອນ ການຄຸ້ມຄອງ ແລະ ການບໍລິຫານສໍາລັບກົມ, ອົງການຕ່າງໆອ້ອມຂ້າງກະຊວງກະສິກໍາ ແລະ ປ່າໄມ້.

- ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ ການວາງແຜນ ແລະ ສະຖິຕິຂອງກະຊວງກະສິກຳ ແລະ ປ່າໄມ້ ດ້ວຍການພັດທະນາການສ້າງແຜນການແຕ່ລຸ່ມຫາເທິງ ແລະ ລະບົບການຄຸ້ມຄອງຂໍ້ມູນຂ່າວສານ ຈາກຄວາມຕ້ອງການກະສິກຳ ແລະ ປ່າໄມ້ເມືອງຫາ ກະຊວງກະສິກຳ ແລະ ປ່າໄມ້, ແລະ ດ້ວຍການແນະນຳເຕັກໂນໂລຊີໃໝ່ ສຳລັບການເກັບກຳຂໍ້ມູນ.
- ສ້າງຄວາມເຂັ້ມແຂງການຄຸ້ມຄອງພັດທະນາຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍສ້າງສູນພັດທະນາຊັບພະຍາກອນມະນຸດສຳລັບການວາງແຜນ ແລະ ປະສານງານກິດຈະກຳ ພັດທະນາຊັບພະຍາກອນມະນຸດ, ດ້ວຍການປັບປຸງພື້ນຖານຂໍ້ມູນ ການຈັດຕັ້ງບຸກຄົນ, ດ້ວຍການຝຶກອົບຮົມ ໜ້າວຽກລະອຽດ ສຳລັບໜ້າທີ່ທັງໝົດ ແລະ ດ້ວຍການພັດທະນາ ແຜນພັດທະນາຕຳແໜ່ງງານ.

(b) ສ້າງຄວາມເຂັ້ມແຂງ ການປະຕິບັດການຄຸ້ມຄອງ ແລະ ຄວາມອາດສາມາດຂອງການວາງແຜນຂອງພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

ໃນແງ່ຂອງຊັບພະຍາກອນມະນຸດ ແລະ ການພັດທະນາສະຖາບັນການຈັດຕັ້ງ, ເງື່ອນໄຂຂອງພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ແມ່ນຫຼໍ່ແຫຼມກ່ວາ. ແຜນສານເພື່ອແກ້ໄຂຄວາມບໍ່ສະໝໍ່າສະເໝີ ຂອງການແຈກຢາຍພະນັກງານດ້ວຍການແບ່ງປັນພະນັກງານຄືນໃໝ່ ຢູ່ທັງພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ວຽກດັ່ງກ່າວນີ້ຈະໄດ້ຮັບຜົນສຳເລັດຖ້າວ່າ ການຈັດວາງງົບປະມານໃຫ້ມີຢ່າງພຽງພໍ ສຳລັບລາຍຈ່າຍ ເພື່ອຈັດຕັ້ງປະຕິບັດການຈັດຕັ້ງເຫຼົ່ານີ້.

ຢູ່ລະດັບເມືອງ ແລະ ແຂວງ, ໂຄງການນີ້ຈະຂະຫຍາຍກິດຈະກຳ ການພັດທະນາສະຖາບັນການຈັດຕັ້ງຂອງກະຊວງກະສິກຳ ແລະ ປ່າໄມ້ ຫາແຂວງ. ເປັນສິ່ງທີ່ສຳຄັນທີ່ວ່າຂັ້ນຕອນ ແລະ ລະບົບທີ່ໄດ້ພັດທະນາໂດຍກະຊວງກະສິກຳ ແລະປ່າໄມ້ ໃຫ້ປະຕິບັດໄດ້ ແລະ ທົດລອງໄດ້ຢູ່ຂັ້ນພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ທີ່ພົວພັນກັບນະໂຍບາຍກະຈາຍອຳນາດ, ຍັງມີຕ້ອງຮຽກຮ້ອງຕ້ອງການສ້າງຄວາມເຂັ້ມແຂງຄວາມສາມາດຄຸ້ມຄອງງົບປະມານ ແລະ ການເງິນຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກໍຄື ຄວາມອາດສາມາດໃນການວາງແຜນ ແລະ ການຄຸ້ມຄອງໂຄງການພັດທະນາຕ່າງໆ ຊຶ່ງໂຄງການທັງໝົດ ໃນຕໍ່ໜ້າຈະຕ້ອງໄດ້ຮັບຈັດຕັ້ງປະຕິບັດ ຢູ່ພາຍໃຕ້ການຈັດຕັ້ງເຫຼົ່ານີ້. ໂຄງການດັ່ງກ່າວນີ້ຈະລວມມີການພັດທະນາ ສະຖາບັນການຈັດຕັ້ງຄ້າຍຄືດັ່ງລຸ່ມນີ້:

- ສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານ ແລະ ການປະຕິບັດການຄຸ້ມຄອງຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ດ້ວຍການສຸມໃສ່ການຄຸ້ມຄອງເງິນ ແລະ ການຄຸ້ມຄອງໂຄງການ.
- ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ ໃນການວາງແຜນ ແລະ ສະຖິຕິຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍການພັດທະນາ ແລະ ທົດລອງພາກສະໜາມ ການສ້າງແຜນການ ແລະ ລຸ່ມຫາເທິງ ແລະ ລະບົບການຄຸ້ມຄອງຂໍ້ມູນຂ່າວສານ ພັດທະນາໂດຍກະຊວງກະສິກຳ ແລະ ປ່າໄມ້.
- ສ້າງຄວາມເຂັ້ມແຂງ ການຄຸ້ມຄອງການພັດທະນາຊັບພະຍາກອນມະນຸດ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ່ເມືອງ.

(c) ປັບປຸງສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ໃຫ້ເຂັ້ມແຂງ.

ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ສ້າງຕັ້ງຂຶ້ນໃນປີ 2000 ເພື່ອຄົ້ນຄ້ວາວຽກງານກະສິກຳ ແລະ ປ່າໄມ້ ດ້ວຍການຮວມເອົາສູນຄົ້ນຄ້ວາທີ່ກ່ຽວຂ້ອງຢູ່ພາຍໃຕ້ແຕ່ລະກົມ. ຜົນຈາກການຄົ້ນຄ້ວາຂອງສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ແມ່ນເປັນສິ່ງທີ່ສຳຄັນໃນການເລັ່ງເສດຖະກິດຕະຫຼາດ ໃນຂະແໜງການກະສິກຳ. ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ມີບັນຫາຫຼາຍຢ່າງທີ່ແຕກຕ່າງກັນ ໃນແງ່ຂອງຊັບພະຍາກອນມະນຸດ, ການປະສົມປະສານບ້ານ ຂອງບັນດາສູນຄົ້ນຄ້ວາທີ່ກ່ຽວຂ້ອງ ແລະ ສິ່ງອຳນວຍຄວາມສະດວກໃນການຄົ້ນຄ້ວາ ນັບແຕ່ໄດ້ຮັບການສ້າງຕັ້ງຂຶ້ນເປັນຕົ້ນມາ. ຍ້ອນແນວນັ້ນສິ່ງສຳຄັນເພື່ອຈັດຕັ້ງປະຕິບັດ: (I) ສ້າງຄວາມເຂັ້ມແຂງລະບົບການປະສານງານ ແລະ ການຕິດຕໍ່ພົວພັນ ລະຫວ່າງສູນຄົ້ນຄ້ວາ ແລະ ຕິດຕັ້ງລະບົບເຕັກໂນໂລຊີຂ່າວສານຂໍ້ມູນ (IT), (ii) ສ້າງຄວາມເຂັ້ມແຂງຄວາມອາດສາມາດໃນການຄົ້ນຄ້ວາ, (III) ປັບປຸງສະພາບແວດລ້ອມຂອງການຄົ້ນຄ້ວາ, ແລະ (iv) ສ້າງຄວາມເຂັ້ມແຂງການປະສານງານ ການຄົ້ນຄ້ວາກັບຕ່າງປະເທດ.

(d) ສ້າງລະບຽບທີ່ພົວພັນເຖິງການກະສິກຳ ແລະ ການປັບປຸງລະບົບການກວດກາໃຫ້ເຂັ້ມແຂງ.

ກົດລະບຽບ ແລະ ລະບົບການກວດກາຈະຕ້ອງໄດ້ພັດທະນາ ຖ້າຫາກວ່າລະບົບເໝາະສົມພົວພັນກັບການກະສິກຳ ຍັງບໍ່ທັນໄດ້ສ້າງຂຶ້ນ. ດັ່ງຕໍ່ລົງໄປນີ້ ແມ່ນສິ່ງທີ່ຕ້ອງການໃນຂົງເຂດນີ້. ເຖິງຢ່າງໃດກໍ່ຕາມລະບົບການກວດກາຈະຕ້ອງງ່າຍດາຍເທົ່າທີ່ຈະເປັນໄປໄດ້ເພື່ອຫຼີກລຽງການສ້າງສິ່ງກີດ ຂວາງການຂະຫຍາຍທຸລະກິດເອກະຊົນ.

- ຂໍ້ກຳນົດກົດລະບຽບ ແລະ ລະບົບການກວດກາທີ່ພົວພັນກັບການປ້ອງກັນພືດ.

- ຂໍ້ກຳນົດກົດລະບຽບ ແລະ ລະບົບການກວດກາທີ່ພົວພັນກັບເຄມີກະສິກຳ ຢາປາບສັດຕູ ແລະ ພະຍາດພືດ.
- ລະບົບການກວດກາ ຫຼື ໃບຢັ້ງຢືນ ສຳລັບແນວພັນພືດໃໝ່ ແລະ ຂະແໜງຕ່າງໆ ແລະ ອື່ນໆ.

(e) ໃນໄລຍະກາງຫາໄລຍະຍາວ, ຕ້ອງເປັນດັ່ງນີ້ i) ອອກດຳລັດທີ່ຈຳເປັນ ຫຼື ທົບທວນ ການຄວບຄຸມເປັນການຮັບປະກັນການທຳທຸລະກິດເສລີຖືກົດໝາຍ, ມີທັງອຸດສາຫະກຳພືດ, ສັດ, ປ່າໄມ້ ແລະ ອຸດສາຫະກຳການປະມົງ, ແລະ ii) ແນະນຳຄືນຕໍ່ພະນັກງານຈາກການບໍລິການຂອງລັດ ທີ່ພົວພັນກັບຄວາມຕ້ອງການເສດຖະກິດຕະຫຼາດ.

(3) ຂັ້ນຕອນປະຕິບັດ.

ການປະຕິບັດຍຸດທະສາດພັດທະນາຂ້າງເທິງຈະຕ້ອງ ເຮັດຕາມຂັ້ນຕອນເປັນແຕ່ລະບາດກ້າວ. ຕ້ອງໃຫ້ບຸລິມະສິດແກ່ການພັດທະນາສະຖາບັນການຈັດຕັ້ງ ແລະ ການສ້າງຄວາມເຂັ້ມແຂງ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ເພື່ອປັບປຸງສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ໃຫ້ເຂັ້ມແຂງ, ທີ່ເຫັນວ່າເປັນພື້ນຖານບັນຫາສຳຄັນ ສຳລັບການພັດທະນາ ແລະ ການປະຕິບັດໂຄງການກະສິກຳ ແລະ ປ່າໄມ້ອື່ນໆ.

ໃນໄລຍະກາງ, ການປະຕິບັດ ຈະຕ້ອງເລັ່ງໃສ່ການສ້າງຂໍ້ກຳນົດກົດລະບຽບ ທີ່ພົວພັນ ເຖິງການກະສິກຳ ແລະ ສ້າງຄວາມເຂັ້ມແຂງລະບົບການກວດກາ. ເຖິງຢ່າງໃດກໍຕາມຂໍ້ກຳນົດກົດລະບຽບ ແລະ ລະບົບການກວດກາທີ່ພົວພັນເຖິງການປ້ອງກັນພືດ ຈະຕ້ອງເຮັດແຕ່ຫົວທີ ເພາະມັນເປັນແກ່ນສານ ສ້າງເງື່ອນໄຂລ່ວງໜ້າສຳລັບການສົ່ງອອກຜະລິດຕະພັນກະສິກຳ. ໃນການພົວພັນຕໍ່ການຈັດຕັ້ງເປັນຈຳນວນຫຼາຍ ແລະ ພະນັກງານກ່ຽວຂ້ອງ, ໂຄງການສ້າງຄວາມເຂັ້ມແຂງ ຂອງພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຈະຕ້ອງເບິ່ງໃຫ້ເປັນໄລຍະກາງຫາໄລຍະຍາວ ໃນການປະຕິບັດຍຸດທະສາດ. ເຖິງຢ່າງໃດກໍຕາມ, ພາຍໃຕ້ການພັດທະນາ ສະຖາບັນການຈັດຕັ້ງ ແລະ ສ້າງຄວາມເຂັ້ມແຂງຂອງກະຊວງກະສິກຳ ແລະ ປ່າໄມ້, ໂຄງການທົດລອງຈະຕ້ອງໄດ້ແນະນຳໃຫ້ນຳໃຊ້ຢູ່ໃນແຂວງ ແລະ ເມືອງບຸລິມະສິດ ເພື່ອເລັ່ງຂັ້ນຂະບວນການກະຈາຍອຳນາດ.

(4) ຄາດຄະເນໝາກຜົນຈະໄດ້ຮັບ.

ແຜນການສຳລັບການພັດທະນາສະຖາບັນການຈັດຕັ້ງ ແລະ ຄາດຄະເນຜົນການສ້າງຄວາມເຂັ້ມແຂງ, ເພື່ອຍົກສະຖາບັນການຈັດຕັ້ງ ແລະ ການປະຕິບັດການສ້າງແຜນການຂອງກະ

ຊວງກະສິກຳ ແລະ ປ່າໄມ້ ແລະ ອົງການກ່ຽວຂ້ອງຕ່າງໆ. ຜົນທີ່ຈະໄດ້ຮັບຈະເປັນລັກສະນະດັ່ງນີ້:

- ຄວາມເຂັ້ມແຂງ ຂອງສະຖາບັນການຈັດຕັ້ງຂອງກະຊວງກະສິກຳ ແລະ ປ່າໄມ້, ຫ້ອງການ, ກົມແຜນການ ແລະ ກົມຈັດຕັ້ງ.
- ຄວາມເຂັ້ມແຂງ ຂອງສະຖາບັນການຈັດຕັ້ງ ຂອງພະແນກບໍລິຫານຂອງກົມວິຊາການທັງໝົດ.
- ຄວາມເຂັ້ມແຂງຂອງສະຖາບັນການຈັດຕັ້ງ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ພ້ອມດ້ວຍຂະແໜງບໍລິຫານ.
- ຄວາມເຂັ້ມແຂງຂອງສະຖາບັນການຈັດຕັ້ງ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ໜ່ວຍບໍລິຫານ.
- ສ້າງຕັ້ງໄດ້ໂຄງການ ຝຶກອົບຮົມ ພາຍໃນດ້ານການບໍລິການ ສຳລັບພະນັກງານກົມ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ປະມານຄູຝຶກວິຊາການຈັດຕັ້ງ ແລະ ການວາງແຜນ 20 ຄົນ.
- ພະນັກງານກົມປະມານ 160 ໄດ້ຮັບການຝຶກອົບຮົມ ແລະ ຕຽມພ້ອມ.
- ພະນັກງານພະແນກກະສິກຳ ແລະ ປ່າໄມ້ປະມານ 145 ຄົນ ໄດ້ຮັບການຝຶກອົບຮົມ ແລະ ຕຽມພ້ອມ.
- ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ປະມານ 846 ຄົນ ໄດ້ຮັບການຝຶກອົບຮົມ ແລະ ຕຽມພ້ອມ.

ແຜນການສ້າງຄວາມເຂັ້ມແຂງຂອງສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ຄາດວ່າຈະເຮັດໃຫ້; I) ຊຸກຍູ້ສະໜັບສະໜູນ ປະສິດທິຜົນຂອງການຄົ້ນຄ້ວາ, ii) ປັບປຸງຄຸນນະພາບຂອງການຄົ້ນຄ້ວາ, ແລະ iii) ປັບປຸງພະນັກງານດ້ານວິຊາການ ແລະ ການບໍລິຫານຈຳນວນ 360 ຄົນ ຂອງພະນັກງານສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້.

ກິດຈະກຳຫຼາຍຢ່າງທີ່ແຕກຕ່າງກັນທັງໝົດ ຈະຕ້ອງສ້າງລະບົບການກວດກາ ພາຍໃຕ້ຂໍ້ກຳນົດກົດລະບຽບທີ່ເໝາະສົມ, ຄາດຄະເນຜົນທີ່ຈະໄດ້ຮັບມີດັ່ງນີ້:

- ຕະຫຼາດສົ່ງອອກກະສິກຳ ຈະຂະຫຍາຍຜ່ານການຊຸກຍູ້ຂອງຄວາມເຊື່ອໝັ້ນ ຂອງຜູ້ນຳເຂົ້າກະສິກຳ

- ພືດໄດ້ຮັບການປ້ອງກັນແມງໄມ້ ຫຼື ພະຍາດເກີດມາຈາກປະເທດອື່ນ,
- ຊາວນາ ສາມາດເຂົ້າຫາປັດໃຈ ຂາເຂົ້າກະສິກຳ ອັນເໝາະສົມໃນແງ່ຂອງຄຸນນະພາບ ປະລິມານ ແລະ ຄວາມປອດໄພ.

## 6.4 ການພັດທະນາຊັບພະຍາກອນມະນຸດ.

### (1) ຈຸດປະສົງຂອງການພັດທະນາ.

ຈຸດປະສົງຂອງການພັດທະນາຊັບພະຍາກອນມະນຸດ ໃນໄລຍະຍາວຄື:

- ເພື່ອເຮັດໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຈັດຕັ້ງຕາມສາຍຂະແໜງການທ້ອງຖິ່ນມີພະນັກງານວິຊາການ ແລະ ການບໍລິຫານທີ່ ມີຄວາມຮູ້ຄວາມສາມາດ.
- ເພື່ອເຮັດໃຫ້ຄວາມສາມາດສະໜັບສະໜູນການບໍລິການ ແກ່ຊຸມຊົນຊາວນາ ແລະ ບັນດາບໍລິສັດ ໃນການພັດທະນາກະສິກຳ ແບບຍືນນານ ພາຍໃຕ້ການວິວັດທະນາການ ຂອງເສດຖະກິດຕະຫຼາດ.

ເພື່ອໃຫ້ບັນລຸຈຸດປະສົງໄລຍະຍາວດັ່ງກ່າວຂ້າງເທິງ, ຈຸດປະສົງອັນຮີບດ່ວນມີຄື:

- ປັບປຸງໂຄງສ້າງ ແລະ ສ້າງຄວາມເຂັ້ມແຂງແກ່ຄວາມອາດສາມາດການບໍລິຫານ, ການຄຸ້ມຄອງ ແລະ ການວາງແຜນຂອງກົມ ແລະ ອົງການຕ່າງໆຂອງກະຊວງກະສິກຳ ແລະ ປ່າໄມ້, ແລະ ການບໍລິການກະສິກຳ ແລະ ປ່າໄມ້ ຂອງແຂວງ ແລະ ເມືອງ ໃນການພົວພັນການກະຈາຍອຳນາດຂອງນະໂຍບາຍເສດຖະກິດຕະຫຼາດ (ອີງຕາມຂໍ້ 6.2).
- ສ້າງຄວາມເຂັ້ມແຂງການບໍລິການການສົ່ງເສີມ ກະສິກຳ ແລະ ປ່າໄມ້ ດ້ວຍການສ້າງຄວາມເຂັ້ມແຂງຂອງສະຖາບັນ ຂອງການຈັດຕັ້ງກະຊວງກະສິກຳ ແລະ ປ່າໄມ້ລະດັບເມືອງ, ແຂວງ ແລະ ລະດັບສູນກາງ.
- ພັດທະນາການຝຶກອົບຮົມ ເປັນທາງການ ແລະ ການສຶກສາ ທາງດ້ານ ກະສິກຳ-ປ່າໄມ້ ຊົນລະປະທານທີ່ມີແລ້ວ ເພື່ອສ້າງພະນັກງານ ວິຊາການສະເພາະດ້ານ ແລະ ນັກວິສະວະກອນຊົນລະປະທານ ວິສະວະກອນກະສິກຳ, ວິສະວະກອນປ່າໄມ້ ແລະ ພະນັກງານວິຊາການຊັ້ນສູງ.
- ຊຸກຍູ້ຊວນເຊື່ອ ແກ່ນັກຮຽນໃນໂຮງຮຽນ ໃນການອານຸລັກທຳມະຊາດ ແລະ ສິ່ງແວດລ້ອມກໍຄືການເຮັດກະສິກຳ ແບບຍືນນານ.

ບັນດາປັດໃຈທີ່ຕ້ອງໄດ້ເອົາໃຈໃສ່ ທີ່ມີຜົນສະທ້ອນ ຕໍ່ການບັນລຸຜົນສຳເລັດ ຂອງຈຸດປະສົງດັ່ງກ່າວຂ້າງເທິງ ຈະຕ້ອງໄດ້ພິຈາລະນາ ແລະ ປະຕິບັດດັ່ງລຸ່ມນີ້:

- ປັບປຸງຄືນການລົງທຶນຂອງລັດ ແລະ ເພີ່ມການແບ່ງປັນງົບປະມານ ໃຫ້ແກ່ກິດຈະກໍາການສົ່ງເສີມ, ໂດຍສະເພາະແລ້ວ ແມ່ນກິດຈະກໍາໃນພາກສະໜາມ, ອີງຕາມຄວາມຮຽກຮ້ອງຕ້ອງການ ໃນການບັນລຸຈຸດປະສົງ.
- ສ້າງຄວາມເປັນເອກະພາບພາຍໃນອົງການຕ່າງໆ ທີ່ພົວພັນກັນ ໃນການປະຕິບັດນະໂຍບາຍ ການກະຈາຍອໍານາດ ແລະ ແຜນງານຕ່າງໆຂອງກະຊວງກະສິກໍາ ແລະ ປ່າໄມ້.
- ຈັດແບ່ງພະນັກງານຄືນ ເພື່ອປັບປຸງການແບ່ງປັນພະນັກງານ ທີ່ບໍ່ສະໝໍ່າສະເໝີລະຫວ່າງສູນກາງ ແລະ ທ້ອງຖິ່ນ.

(2) **ຍຸດທະສາດການພັດທະນາ.**

ຍຸດທະສາດການພັດທະນາ ເພື່ອພັດທະນາຊັບພະຍາກອນມະນຸດມີດັ່ງຕໍ່ໄປນີ້:

(a) **ສ້າງຄວາມເຂັ້ມແຂງການບໍລິການການສົ່ງເສີມກະສິກໍາ ແລະ ປ່າໄມ້.**

ຢູ່ລະດັບສູນກາງ, ກອງສົ່ງເສີມກະສິກໍາ ແລະ ປ່າໄມ້ ແຫ່ງຊາດ [1](NAFEA) ຈະໄດ້ຮັບການສ້າງຕັ້ງຂຶ້ນເພື່ອປະສານ, ສ້າງແຜນ ແລະ ປະຕິບັດກິດຈະກໍາ ການສົ່ງເສີມກະສິກໍາ ແລະ ປ່າໄມ້ທັງໝົດ ຕາມໜ້າທີ່ຂອງກະຊວງກະສິກໍາ ແລະ ປ່າໄມ້. ໜ່ວຍຝຶກອົບຮົມການສົ່ງເສີມສູນກາງ (CETU) ຂຶ້ນກັບ NAFEA ຈະຕ້ອງໄດ້ຮັບການສ້າງຕັ້ງຂຶ້ນ. CETU ຈະໄດ້ປະສານການຈັດຕັ້ງປະຕິບັດ ດ້ານກະສິກໍາປ່າໄມ້ ໃນທຸກໆແຂວງ, ຖອນເອົາພະນັກງານ ແລະ ຊ່ຽວຊານທີ່ມີຈາກກົມຕ່າງໆ ຂອງກະຊວງກະສິກໍາ ແລະ ປ່າໄມ້. CETU ຈະຕ້ອງຮັບຜິດຊອບກະກຽມແຜນການ ການຝຶກອົບຮົມ ແລະ ການສົ່ງເສີມ ໂດຍສົມທົບກັບພະແນກການກະສິກໍາ ແລະ ປ່າໄມ້ແຂວງ ແລະ ສູນຝຶກອົບຮົມການສົ່ງເສີມກະສິກໍາ ແລະ ປ່າໄມ້ຢູ່ໃນແຕ່ລະພາກ (RAFETC).

ຢູ່ລະດັບແຂວງ, ໜ່ວຍຝຶກອົບຮົມການສົ່ງເສີມຂອງແຂວງຈະໄດ້ສ້າງຕັ້ງຂຶ້ນ ຢູ່ຕາມພະແນກກະສິກໍາ ແລະ ປ່າໄມ້ແຂວງ. ຈະປະກອບ ດ້ວຍພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງມາຈາກຂະແໜງການທີ່ມີ (ປູກຝັງ, ລ້ຽງສັດ/ການປະມົງ, ປ່າໄມ້ ແລະ ຊົນລະປະທານ). ບົດບາດຂອງໜ່ວຍຝຶກອົບຮົມການສົ່ງເສີມຂອງແຂວງ ຈະໄດ້ປະສານງານກັບໂຄງການການສົ່ງເສີມຂອງບັນດາເມືອງຂອງແຂວງ ແລະ ເພື່ອຈັດຕັ້ງການຝຶກອົບຮົມ ຂອງພະນັກງານເມືອງ. ພະນັກງານໜ່ວຍຝຶກອົບຮົມການສົ່ງເສີມຂອງແຂວງ ຈະຕ້ອງໄດ້ຮັບການຝຶກດ້ານ

---

[1] ຂໍ້ຕົກລົງກະຊວງກະສິກໍາ ແລະ ປ່າໄມ້ ເລກທີ່ 0306/ກປ.ຈຕ.2001 ລົງວັນທີ 4/4/2001 ສໍາລັບການສ້າງຕັ້ງກອງສົ່ງເສີມ ກະສິກໍາ ແລະ ປ່າໄມ້.

ການສົ່ງເສີມ ຈາກໜ່ວຍຝຶກອົບຮົມການສົ່ງເສີມສູນກາງ ແລະ RAFETC ແລະ ຈະໄດ້ຮັບຜົດຊອບອົບຮົມ ໃຫ້ແກ່ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

ຢູ່ລະດັບເມືອງ, ໂຄງການ ການຝຶກອົບຮົມທີ່ມີຈຸດປະສົງ ເພື່ອຍົກລະດັບຄວາມຮູ້ດ້ານວິຊາການ ແລະ ຄວາມຮູ້ດ້ານການສົ່ງເສີມຂອງພະນັກງານວິຊາການຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຈະຕ້ອງໄດ້ຮັບການພັດທະນາ. ແຜນການຈະຝຶກອົບຮົມຈະໄດ້ເລັ່ງໃສ່ ພະນັກງານເມືອງ ເພື່ອເຮັດໃຫ້ເຂົາເຈົ້າກາຍເປັນພະນັກງານວິຊາການຮອບດ້ານຢ່າງມີປະສິດທິຜົນ, ການເປັນພະນັກງານສົ່ງເສີມ ລະບົບກະສິກຳທົ່ວໄປ (FSEW). ໃນການປະສານສົມທົບກັບໂຄງການ ປັບປຸງສູນຝຶກອົບຮົມ RAFETC, FSEW ຈະຕ້ອງໄດ້ຮັບການຝຶກອົບຮົມຄວາມຮູ້ວິຊາການຫຼາຍຢ່າງປະສົມກັນ ທີ່ຕ້ອງການ ເພື່ອຊຸກຍູ້ລະບົບກະສິກຳໃນ ແຕ່ລະວິຊາການ.

(b) ການພັດທະນາ ການຝຶກອົບຮົມພາຍໃນກົມກອງ/ພະແນກການ ແລະ ການຝຶກອົບຮົມຊາວນາກ່ຽວກັບການກະສິກຳ ແລະ ປ່າໄມ້.

ການສົ່ງເສີມກະສິກຳຈະໄດ້ຮັບການພັດທະນາ ຢູ່ພາຍໃຕ້ແຜນການແຫ່ງຊາດຂອງກະຊວງກະສິກຳ ແລະ ປ່າໄມ້ ກັບການສ້າງຕັ້ງ NAFEA ແລະ ອົງການກ່ຽວຂ້ອງຢູ່ລະດັບແຂວງ ແລະ ເມືອງ. ຢູ່ແຕ່ລະເມືອງ ໜ່ວຍສົ່ງເສີມຂອງເມືອງ ຢູ່ໃນ ຫ້ອງການກະສິກຳ ເມືອງ ຈະໄດ້ຮັບການສ້າງຕັ້ງ ແລະ ແຕ່ງຕັ້ງ. ໜ່ວຍສົ່ງເສີມຂອງເມືອງຈະໄດ້ຮັບການຝຶກອົບຮົມໃນສອງດ້ານພື້ນຖານ: ການຈັດຕັ້ງປະຕິບັດການພັດທະນາບ້ານ ແລະ ການວາງແຜນ ແລະ ວິຊາການການວາງແຜນ ເປັນພະນັກງານລະບົບການຟາມທົ່ວໄປ, ທີ່ຈະເຮັດໃຫ້ແນວຄວາມຄິດ ຂອງລະບົບຟາມ ເປັນລະບົບລວມ, ຫຼາຍກ່ວາ ການເປັນຟາມທີ່ມີກິດຈະກຳການຜະລິດບໍ່ກ່ຽວພັນກັນ. ໂຄງການ ການຝຶກອົບຮົມການວາງແຜນພັດທະນາບ້ານຂອງ RAFETC ຈະຕ້ອງໄດ້ສ້າງຕັ້ງຂຶ້ນບົນພື້ນຖານ ເພື່ອພັດທະນາວິທີການການສົ່ງເສີມ ເພື່ອສ້າງຄວາມເຂັ້ມແຂງ ການບໍລິການການສົ່ງເສີມກະສິກຳ ແລະ ປ່າໄມ້.

ການຝຶກອົບຮົມແກ່ຊາວນາຈະເປັນນຶ່ງ ໃນກິດຈະກຳຫຼັກຂອງ RAFECT ການຝຶກອົບຮົມໄລຍະສັ້ນ ສຳລັບຊາວນາຕ້ອງເປັນໄປຕາມຄວາມຕ້ອງການ ແຕ່ລະທ້ອງຖິ່ນ. ເຖິງຢ່າງໃດກໍ່ຕາມ ການຈັດການຝຶກອົບຮົມ ດ້ານການຈັດການຟາມຢ່າງປົກກະຕິ ຈະຕ້ອງຮວມທັງພື້ນຖານຄວາມຮູ້ດ້ານການປູກຝັງ ແລະ ການລ້ຽງສັດນັ້ນຈະຕ້ອງໄດ້ສ້າງຂຶ້ນ. ຊຸດຝຶກອົບຮົມພິເສດ ສຳລັບຊາວນາກໍ່ຈະຕ້ອງໄດ້ສ້າງຂຶ້ນເໝືອນກັນ ແລະ ຈະກວມເອົາ ຫົວຂໍ້ທີ່ແຕກຕ່າງ

ກັນ (ເຂົ້າ, ພືດຕ່າງໆ, ສັດລ້ຽງເອື້ອງ, ສັດປີກ, ການປະມົງ, ກະສິກຳ - ປ່າໄມ້, ການຄຸ້ມຄອງເຄື່ອງປ່າຂອງດົງ, ການປຸງແຕ່ງກະສິກຳ, ການຕະຫຼາດ ໆລໆ) ແລະ ຄວາມຕ້ອງການທ້ອງຖິ່ນແຕກຕ່າງກັນ.

ຍຸດທະສາດນຶ່ງ ສຳລັບການພັດທະນາຄວາມອາດສາມາດ ການບໍລິການການສົ່ງເສີມ ຈະຕ້ອງໄດ້ພັດທະນາລະບົບການສົ່ງເສີມໃນທິດ ດ້ານການເງິນການຕະຫຼາດແບບຍືນນານຂອງຕົນເອງ. ຍ້ອນແນວນັ້ນແນວຄິດຂອງ ສູນສົ່ງເສີມ ແລະ ຝຶກອົບຮົມ RAFETC - FVS ຈະຕ້ອງໄດ້ພັດທະນາ ສູນການເງິນຂອງຕົນເອງ, ທີ່ຈະສ້າງລາຍຮັບແກ່ເຂົາເຈົ້າ ດ້ວຍຄ່າການຝຶກອົບຮົມ ແລະ ການບໍລິການ.

ຂັ້ນຕອນວິທີການ ປະຕິບັດຈະໄດ້ພັດທະນາສຳລັບການພັດທະນາ ແລະ ປະຕິບັດກິດຈະກຳສະເພາະຕ່າງໆຂ້າງເທິງ. ພາບຂອງການພັດທະນາຈະໄດ້ພັດທະນາ ປັບປຸງສູນສົ່ງເສີມ ແລະ ຝຶກອົບຮົມ (RAFTECs) 03 ແຫ່ງ ໂຮງຮຽນວິຊາຊີບກະສິກຳ (FVS) 6 ແຫ່ງ ຕາມເຂດພູມສາດຊີວະວິທະຍາສາດ 6 ເຂດ ໃນຊ່ວງໄລຍະທີ່ນຶ່ງ ແລະ ທີສອງ ແລະ ເພື່ອພັດທະນາໃຫ້ມີ FVS ສຳລັບແຕ່ລະແຂວງໃນໄລຍະອັນໃກ. ຊ່ວງໄລຍະທີ່ນຶ່ງ ຂອງໂຄງການຈະພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ 3 RAFECTs ແລະ 3 FVS ໃນແຂວງຫຼວງພະບາງ (ຊຽງເງິນ AFETC), ໃນແຂວງວຽງຈັນ (ຫີນເຫີບ-ປາກແຈ້ງ VARDP) ແລະໃນແຂວງສະຫວັນນະເຂດ (ເຊໂປນ AFETC). ຊ່ວງໄລຍະທີ່ສອງຈະຂະຫຍາຍຮູບແບບ ຂອງ FVS ເຂົ້າໄປໃນເຂດອື່ນ 3 ເຂດ ໂດຍພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ 3FVSs ໃນຫຼວງນ້ຳທາ (ນ້ຳທາ-ເມືອງສິງ), ໃນແຂວງຫົວພັນ (ເມືອງຫ້ຽມ) ແລະ ໃນແຂວງຈຳປາສັກ (ປາກຊ່ອງ). ຊ່ວງໄລຍະທີ່ 3 ຈະພັດທະນາໂຮງຮຽນວິຊາຊີບກະສິກຳ ແຂວງໃນ 11 ແຂວງທີ່ຍັງເຫຼືອ.

(c) ຍົກລະດັບຄວາມອາດສາມາດ ການສຶກສາວິຊາການດ້ານກະສິກຳ ແລະ ປ່າໄມ້ໃຫ້ເຂັ້ມແຂງ.

ໂຄງການທີ່ໄດ້ສະເໜີຈະຊຸກຍູ້ ການປັບປຸງຄືນໂຄງສ້າງ ຂອງໂຄງການການສຶກສາ ໂຮງຮຽນວິຊາການຊັ້ນກາງ ແລະ ປັບປຸງອາຄານສະຖານທີ່ຕາມຄວາມຮຽກຮ້ອງຕ້ອງການ ເພື່ອພັດທະນາການສຶກສາວິຊາການ ດ້ານກະສິກຳ ແລະ ປ່າໄມ້ ຢູ່ພາຍໃຕ້ວິໄສທັດຂອງຂະແໜງການກະສິກຳ. ອົງປະກອບຫຼັກຂອງໂຄງການຈະໄດ້ພັດທະນາ ຫຼັກສູດການຮຽນສຳລັບ 4 ໂຮງຮຽນຊັ້ນກາງ (ປາກເຊືອງ-ຫຼວງພະບາງ, ເມືອງໃໝ່-ບໍລິຄຳໄຊ, ນາແກ-ສະຫວັນ

ນະເຂດ ແລະ ປາກເຊແຂວງຈຳປາສັກ) ຊຶ່ງຈະກວມເອົາ 4 ວິຊາຫຼັກ ເຊັ່ນ: ວິຊາປູກຝັງ, ລ້ຽງສັດ/ການປະມົງ/ສັດຕະວະແພດ, ປ່າໄມ້ ແລະ ຊົນລະປະທານ. ການພັດທະນາຫຼັກສູດໃໝ່ຈະເປັນໄປຕາມ, ພັດທະນາບົດຮຽນ ແລະ ປຶ້ມແບບຮຽນ ສຳລັບວິຊາຫຼັກຕ່າງໆໃໝ່; ພັດທະນາຫ້ອງທົດລອງພືກສາສາດ, ຫ້ອງທົດລອງສັດຕະວະແພດ, ຫ້ອງທົດລອງດິນ ແລະ ຫ້ອງທົດລອງອື່ນໆ, ສະເພາະດ້ານຫຼັກສູດ ແລະ ວິຊາຮຽນ; ແລະ ພັດທະນາເຄື່ອງມື, ອຸປະກອນ ແລະ ເຄື່ອງຊ່ວຍການສິດສອນຕ່າງໆ. ການພັດທະນາໂຮງຮຽນກະສິກຳຈະເປັນສິ່ງສຳຄັນນຶ່ງ ສຳລັບພາກປະຕິບັດໃໝ່ ແລະ ຫຼັກສູດການທັນສູ່ຕະຫຼາດ. ການພັດທະນາໂຮງຮຽນກະສິກຳ ແລະ ປ່າໄມ້ຈະຮວມທັງການກໍ່ສ້າງສະຖານທີ່ຝຶກອົບຮົມ, ລະບົບຊົນລະປະທານ, ທົ່ງຫຍ້າສຳລັບລ້ຽງສັດ, ການລ້ຽງປາ, ກະສິກຳ - ປ່າໄມ້, ຕົ້ນໄມ້ໃຫ້ໝາກ, ຟາມລ້ຽງໝູ, ຟາມລ້ຽງໄກ່ ໆລໆ... ຂຶ້ນກັບສະຖານທີ່. ຟາມກໍ່ຈະໄດ້ຮັບໃຊ້ ເປັນໂຮງຮຽນ ແລະ ສະຖານທີ່ຝຶກຫັດສຳລັບຊາວນາເໝືອນກັນ.

ໂຄງການຍົກລະດັບນາຍຄູ/ຄູຝຶກ ຈະໄດ້ເລີ່ມຕົ້ນໄປຕາມຄວາມຕ້ອງການ ການຍົກລະດັບຄວາມອາດສາມາດການສິດສອນ ແລະ ລະດັບການສຶກສາຂອງຄູ ແລະ ຄູຝຶກ ພາຍໃຕ້ຫຼັກສູດໃໝ່. ໂຄງການຈະມີຮວມທັງທຶນການສຶກສາໃນຕ່າງປະເທດ ສຳລັບນາຍຄູ/ຄູຝຶກ ແລະ ການຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ ຂອງການຝຶກອົບຮົມຢູ່ມະຫາວິທະຍາໄລແຫ່ງຊາດ ໃນຮູບຂອງທັງເຮັດທັງຮຽນ (OTJ) ຢູ່ໂຮງຮຽນ.

ວິທີການຈັດໄລຍະ ແມ່ນ ໃຊ້ສຳລັບພັດທະນາ ເພື່ອປະຕິບັດໂຄງການ. ການພັດທະນາຮູບແບບຫຼັກສູດ ແລະ ໂຄງການຍົກລະດັບຄູ ຈະເລີ່ມຕົ້ນກ່ອນ ແລະ ຈະຕາມດ້ວຍການປັບປຸງໂຮງຮຽນປາກເຊືອງ AFTS ແລະ ໂຮງຮຽນປາກເຊ AFTS . ຫຼັງຈາກສຳເລັດໂຄງການການຍົກລະດັບນາຍຄູ ການປັບປຸງໂຮງຮຽນເມືອງໃໝ່ ແລະ ນາແກ AFCTS ຈະໄດ້ເລີ່ມຕົ້ນໃນຊ່ວງຕໍ່ໄປ.

(d) ປັບປຸງໂຮງຮຽນຊັ້ນກາງຊົນລະປະທານ.

ນັບແຕ່ປີ 1996, ລັດຖະບານ ສປປລາວ ປະຕິບັດໂຄງການບຸລິມະສິດຊົນລະປະທານ, ທີ່ສາມາດເພີ່ມຂຶ້ນທົບເຄິ່ງຂອງເນື້ອທີ່ທົດຊົນລະປະທານທົ່ວປະເທດຈາກ 156,000 ເຮັກຕາ ເປັນ 295,000 ເຮັກຕາໃນປີ 2000. ຄວາມຕ້ອງການດ້ານວິຊາການຊົນລະປະທານ ກໍ່ເຫັນວ່າ ມີຢູ່ໃນພາກສ່ວນເອກະຊົນເໝືອນກັນ ໃນແງ່ຂອງການກໍ່ສ້າງ ແລະ ການຕິດຕັ້ງກົນຈັກ ແລະ ການນຳໃຊ້ ແລະ ໃນພາກສ່ວນຊຸມຊົນ (ກຸ່ມນຳໃຊ້ນ້ຳ) ໃນແງ່ຂອງການຄຸ້ມຄອງນ້ຳ,

ການສ້ອມແປງ ແລະ ນຳໃຊ້ລະບົບຊົນລະປະທານ, ແລະ ການສ້ອມແປງ ແລະ ນຳໃຊ້ກົນໄກ. ດ້ວຍການພິຈາລະນາເບິ່ງຄວາມຕ້ອງການເພື່ອສຶກສາ ແລະ ຝຶກອົບຮົມວິຊາການຊົນລະປະທານໃຫ້ຫຼາຍຂຶ້ນ. ກະຊວງກະສິກຳ ແລະ ປ່າໄມ້ໄດ້ຕົກລົງສ້າງຕັ້ງສູນຝຶກອົບຮົມຊົນລະປະທານທ່າງ່ອນ ຢູ່ພາຍໃຕ້ກົມຊົນລະປະທານສູນຝຶກອົບຮົມນີ້ ໃນຂັ້ນຕອນຕໍ່ມາໄດ້ຖືກຍົກຂຶ້ນເປັນໂຮງຮຽນຊົນລະປະທານຂັ້ນກາງໃນປີ 1999.

ໂຄງການທີ່ໄດ້ສະເໜີມານັ້ນ ຈະສ້າງໂຄງການສຶກສາຂອງໂຮງຮຽນ ແລະ ປັບປຸງເຄຫະສະຖານສູນຝຶກອົບຮົມຊົນລະປະທານທ່າງ່ອນ ຕາມຄວາມຮຽກຮ້ອງຕ້ອງການ ເພື່ອພັດທະນາການສຶກສາຊົນລະປະທານຂັ້ນກາງພາຍໃນ ທັດສະນະວິໄສ ຂອງຂະແໜງການກະສິກຳ. ອົງປະກອບຫຼັກຂອງໂຄງການຈະໄດ້ຮວບລວມພັດທະນາຫຼັກສູດ ສຳລັບໂຮງຮຽນ. ວຽກດັ່ງກ່າວຈະຕ້ອງເຮັດດັ່ງຕໍ່ລົງໄປນີ້; ພັດທະນາປຶ້ມບົດຮຽນສິດສອນ ແລະ ປຶ້ມຕຳລາຮຽນສຳລັບວິຊາຫຼັກຕ່າງໆ; ພັດທະນາຫ້ອງທົດລອງຕາມສາຍວິຊາສະເພາະ ໃນຫຼັກສູດ ແລະ ວິຊາຮຽນ; ພັດທະນາເຄື່ອງມື, ອຸປະກອນ ແລະ ເຄື່ອງຊ່ວຍໃນການສິດສອນ; ແລະ ພັດທະນາກົນໄກການສະມະນາ ແລະ ຟາມຂອງໂຮງຮຽນ. ໂຄງການຍົກລະດັບຄູ/ຄູຝຶກ ຈະໄດ້ເລີ່ມຕົ້ນເຮັດຕາມຮຽກຮ້ອງຕ້ອງການ ເພື່ອຍົກລະດັບຄວາມອາດສາມາດການສອນ ແລະ ລະດັບການສຶກສາຂອງນາຍຄູ ແລະ ຄວາມຕ້ອງການຂອງຄູຝຶກ ພາຍໃຕ້ຫຼັກສູດໃໝ່.

(e) ປັບປຸງຄວາມອາດສາມາດ ຂອງການສຶກສາມະຫາວິທະຍາໄລກະສິກຳ ແລະ ປ່າໄມ້ ໃຫ້ເຂັ້ມແຂງ.

ພັດທະນາໂຄງການຍ່ອຍສາຂາພາກວິຊາກະສິກຳນາບົງ ຈະໄດ້ສືບຕໍ່ ແລະ ປະຕິບັດຕາມໂຄງການຝຣັ່ງ ໃຫ້ການສະໜັບສະໜູນປັດຈຸບັນ ສຳລັບໂຄງການການສ້າງຄວາມເຂັ້ມແຂງແກ່ສະຖາບັນ ແລະ ຄວາມສາມາດໃນການສອນຂອງພາກວິຊາ. ພັດທະນາສາຂາພາກວິຊາປ່າໄມດົງໂດກ ຈະຕ້ອງໄດ້ປະຕິບັດຕາມໂຄງການໃຫ້ທຶນຊ່ວຍເຫຼືອຈາກເຢຍລະມັນ ສຳລັບການຊຸກຍູ້ການສຶກສາດ້ານປ່າໄມ້ຢູ່ພາກວິຊາ. ສາຂາພາກວິຊາ ວິສະວະກອນຊົນລະປະທານຕາດທອງ ຈະຕ້ອງໄດ້ເຮັດການພັດທະນາຫຼັກສູດ, ຄວາມອາດສາມາດໃນການສອນ ແລະ ຊັບພະຍາກອນມະນຸດ. ຍ້ອນວ່າຢູ່ໃນລະດັບການສຶກສາ ແລະ ຂາດພະນັກງານຈົບເໜືອຂັ້ນສູງ ຈຶ່ງຄາດວ່າລະດັບຂັ້ນປະລິນຍາໂທວິສະວະກອນຊົນລະປະທານ ຈະໄດ້ສ້າງຂຶ້ນໃນຕໍ່ໜ້າ.

ໃນການພົວພັນໃນການສ້າງ ພະນັກງານຊ່ຽວຊານສະເພາະດ້ານແກ່ ກະຊວງກະສິກຳ ແລະ ປ່າໄມ້ ໂຄງການພິເສດໃນການກຽມປະລິນຍາໂທ ຈະຕ້ອງໄດ້ສ້າງຕັ້ງຂຶ້ນ ສຳລັບວິຊາວິທະຍາສາດ ດ້ານການປູກຝັງ ແລະ ລ້ຽງສັດຢູ່ນາບົງ. ໂຄງການພິເສດນີ້ຈະຕ້ອງ ໄດ້ເຮັດການປະສານພົວພັນ ກັບມະຫາວິທະຍາໄລ ແລະ ສະຖາບັນທີ່ກ່ຽວຂ້ອງໃນຕ່າງປະເທດ. ໂຄງການຂໍວຕໍ່ຍົກລະດັບພະນັກງານຊັ້ນສູງ ເຂົ້າລະບົບປະລິນຍາຕຣີ (B.Sc) ຈະຕ້ອງໄດ້ສ້າງຕັ້ງຂຶ້ນຕາມຄວາມຮຽກຮ້ອງຕ້ອງການ ເພື່ອຍົກລະດັບພະນັກງານ ຢູ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ.

(f) ການພັດທະນາການສຶກສາກະສິກຳ ແລະ ປ່າໄມ້ ໃນໂຮງຮຽນປະຖົມ ແລະ ມັດທະຍົມ.

ປະຊາຊົນຂອງ ສປປລາວ ໄດ້ດຳເນີນການກະສິກຳ ໄດ້ນຳໃຊ້ເງື່ອນໄຂທຳມະຊາດຊ່ວຍ. ຍ້ອນແນວນັ້ນສິ່ງສຳຄັນ ເພື່ອເຮັດໃຫ້ຄວາມສະດວກ ໃນການນຳໃຊ້ເງື່ອນໄຂທຳມະຊາດໄດ້ຢ່າງຍືນນານ ແລະ ເອົາໃຈໃສ່ ສະເພາະຊວນເຊື້ອ ໃນດ້ານສິ່ງແວດລ້ອມ ແລະ ວິຊາກະສິກຳ ຂອງໂຮງຮຽນປະຖົມ ແລະ ມັດທະຍົມຕັ້ງຢູ່ເຂດຊົນນະບົດ ຈະຕ້ອງໄດ້ເລີ່ມຕົ້ນໃນຊ່ວງໄລຍະຕໍ່ໄປ.

(3) ຂັ້ນຕອນປະຕິບັດ.

ການປະຕິບັດຍຸດທະສາດດັ່ງກ່າວຂ້າງເທິງ ຈະຕ້ອງໄດ້ເຮັດເປັນແຕ່ລະບາດກ້າວ. ບຸລິມະສິດຈະຕ້ອງໃຫ້ແກ່ການພັດທະນາລະບົບການສົ່ງເສີມຮອບດ້ານແຫ່ງຊາດ ແລະ ໃຫ້ແກ່ການບໍລິການການຝຶກອົບຮົມຂອງພະນັກງານເມືອງ ແລະ ຊາວນາ. ໃນໄລຍະກາງ ແລະ ໄລຍະຍາວ, ການຈັດຕັ້ງປະຕິບັດຈະຕ້ອງໄດ້ສ້າງຄວາມເຂັ້ມແຂງ ຄວາມອາດສາມາດດ້ານການສຶກສາກະສິກຳ ແລະ ປ່າໄມ້. ເຖິງຢ່າງໃດກໍຕາມ, ການພັດທະນາຫຼັກສູດ ແລະ ວິຊາຮຽນໃໝ່ ສຳລັບໂຮງຮຽນຊັ້ນກາງກະສິກຳ ແລະ ປ່າໄມ້ ຈະຕ້ອງເປັນບຸລິມະສິດ.

ໃນການພົວພັນກັບການຈັດຕັ້ງ ແລະ ພະນັກງານເປັນຈຳນວນຫຼວງຫຼາຍ ກ່ຽວຂ້ອງກັບຍຸດທະສາດ ການພັດທະນາການສົ່ງເສີມຮອບດ້ານແຫ່ງຊາດ ດ້ວຍວິທີເປັນໄລຍະ ຈະຕ້ອງໄດ້ປະຕິບັດ ສຳລັບພັດທະນາລະບົບການສົ່ງເສີມຂອງແຂວງ ແລະ ເມືອງ. ຈຶ່ງແນະນຳໃຫ້ປະຕິບັດ ແຜນການໃນ 3 ໄລຍະກັບແຂວງ ແລະ ເມືອງ ຕາມບຸລິມະສິດ ທີ່ໄດ້ຮັບການຄັດເລືອກສຳລັບແຕ່ລະໄລຍະ.

(4) ຄາດຄະເນເງິນ.

ຄາດຄະເນເງິນຂອງໂຄງການ ດ້ານການພັດທະນາຊັບພະຍາກອນມະນຸດມີຄື:

- ຄູຝຶກຂອງໜ່ວຍຝຶກອົບຮົມ ການສົ່ງເສີມສູນກາງ 20 ຄົນ, ຄູຝຶກຊ່ຽວຊານ ສະເພາະດ້ານຂອງໜ່ວຍຝຶກອົບຮົມການສົ່ງເສີມຂັ້ນແຂວງ 150 ຄົນ ແລະ ຝຶກ ແລະ ປຸກລະດົມພະນັກງານສົ່ງເສີມຊາວນາ ໄດ້ປະມານ 1,000 ຄົນ.
- ພະນັກງານສົ່ງເສີມຊາວນາປະມານ 1,000 ໄດ້ຮັບການຝຶກອົບຮົມ ພາຍໃຕ້ການຈັດຝຶກອົບຮົມ ພະນັກງານສົ່ງເສີມຊາວນາທົ່ວໄປ.
- ພະນັກງານຮັກສາລະບຽບການ ຂອງຫ້ອງກະສິກຳ ແລະ ປ່າໄມ້ເມືອງປະມານ 2,000 ຄົນ ໄດ້ຮັບການຝຶກອົບຮົມຈາກຊຸດຈັດຝຶກອົບຮົມ ດ້ານການຮັກສາລະບຽບການ.
- ຊາວນາປະມານ 8,000 ຄົນ ໄດ້ຮັບການຝຶກອົບຮົມ ພາຍໃຕ້ໂຄງການຝຶກອົບຮົມແກ່ຊາວນາປົກກະຕິຂອງ AFETC - FVS,
- ນັກຮຽນປະມານ 440 ຄົນຕໍ່ປີ ຈະໄດ້ຮັບໃບປະກາດສະນິຍະບັດຈາກການສຶກສາວິຊາສະເພາະກະສິກຳ ແລະ ປ່າໄມ້ ຢັ້ງຢືນໂດຍກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງສຶກສາ, ແລະ
- ນັກຮຽນປະມານ 90 ຄົນຕໍ່ປີ ຈະໄດ້ຮັບປະກາດສະນິຍະບັດ ດ້ານວິຊາສະເພາະຊົນລະປະທານ ຢັ້ງຢືນກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງສຶກສາ.

## 6.5 ການປູກຝັງ.

### (1) ຈຸດປະສົງຂອງການພັດທະນາ.

ສຳລັບການພັດທະນາຂະແໜງການຍ່ອຍປູກຝັງ, ຈຸດປະສົງຂອງການພັດທະນາແມ່ນສ້າງຕັ້ງຂຶ້ນ ສຳລັບເຂດກະສິກຳສອງເຂດທີ່ແຕກຕ່າງກັນໃນ ສປປລາວ. ອັນທີນຶ່ງ ແມ່ນເຂດທົ່ງພຽງ ແລະ ອັນສອງແມ່ນສຳລັບເຂດດິນຄ້ອຍຊັນ, ບົນພື້ນຖານ ຍຸດທະສາດວິໄສທັດຂອງລັດຖະບານ ສຳລັບຂະແໜງການກະສິກຳ.

<u>ພື້ນທີ່ເຂດທົ່ງພຽງ.</u>

- ເພື່ອປັບປຸງ ຫຼື ເລັ່ງບາດກ້າວການປ່ຽນແປງ ຂອງຕະຫຼາດ ໃນຂະແໜງການກະສິກຳລຽບຕາມແມ່ນ້ຳຂອງດ້ວຍການ (I) ແນະນຳ ແລະ ຂະຫຍາຍການປູກພືດປະສົມປະສານລວມທັງພືດສິນຄ້າ (ii) ແນະນຳ ແລະ ຂະຫຍາຍການເຮັດກະເສດສຸມ ກັບການລ້ຽງສັດ ແລະ ລ້ຽງປາ ແລະ (iii) ຊຸກຍູ້ການປູກພືດຕ່າງໆ.
- ເພື່ອຄ້ຳປະກັນສະບຽງອາຫານ ໃຫ້ພຽງພໍກັບຄວາມຕ້ອງການເພີ່ມຂຶ້ນຂອງພົນລະເມືອງ ກໍຄືການເພີ່ມຂຶ້ນຂອງພົນລະເມືອງໃນຕົວເມືອງ ຍ້ອນການຍົກຍ້າຍມາຈາກເຂດຊົນນະບົດ.

ບັນຫານີ້ແມ່ນ ແກ້ໄດ້ສ່ວນໃຫຍ່ດ້ວຍການປັບປຸງ ທົວໜ່ວຍຜະລິດຕະພາບເຂົ້າຕໍ່ເຮັກຕາ ແລະ ຂະຫຍາຍເນື້ອທີ່ປູກເຂົ້າລະດູແລ້ງ.

- ປັບປຸງການປູກພືດຕ່າງໆ ເພື່ອຊຸກຍູ້ ແລະ ສ້າງລາຍຮັບກະສິກຳນີສະຖຽນລະພາບ ດ້ວຍການປັບປຸງພັນຂອງການຄົ້ນຄ້ວານຳໃຊ້, ເຮັດການສາທິດຢູ່ທີ່ງຂອງປະຊາຊົນ, ໃຫ້ຂໍ້ມູນດ້ານ ການຕະຫຼາດທີ່ເຊື່ອຖືໄດ້ ຜ່ານການຝຶກອົບຮົມ ແລະ ລະບົບການສົ່ງເສີມອັນເໝາະສົມ.

ດິນຄ້ອຍຊັນ.

- ເລັ່ງການຮວມເອົາເຂດເນື້ອທີ່ດິນຄ້ອຍຊັນ ເຂົ້າໃນເສດຖະກິດຕະຫຼາດ ດ້ວຍການ (I) ປັບປຸງເສັ້ນທາງຈາກຟາມຫາຕະຫຼາດ, (ii) ເລັ່ງການມີສ່ວນຮ່ວມໃນການແບ່ງດິນ, (iii) ປະຕິບັດການສົ່ງເສີມຕາມຄວາມຕ້ອງການຂອງຊາວນາ ລວມມີການຄົ້ນຄ້ວານຳໃຊ້. ການທົດລອງ ແລະ ການສາທິດຢູ່ໃນທີ່ງຂອງຊາວກະສິກອນ (iv) ແນະນຳ ແລະ ຂະຫຍາຍ ການເງິນຊົນນະບົດ, ແລະ (v) ສົ່ງຂໍ້ມູນຂ່າວສານດ້ານຕະຫຼາດ.
- ສ້າງແຫຼ່ງລາຍຮັບໃນຫຼາຍດ້ານ ແລະ ຊຸກຍູ້ການສ້າງລາຍຮັບດ້ວຍການ (I) ເຮັດຟາມແບບຮອບດ້ານ, (ii) ພັດທະນາການກະເສດ - ປ່າໄມ້, (iii) ແນະນຳ ແລະ ຂະຫຍາຍເຄື່ອງປ່າຂອງດົງ, ແລະ (iv) ແນະນຳ ແລະ ຂະຫຍາຍການເຮັດຟາມປະສົມການລ້ຽງສັດ ແລະ ລ້ຽງປາ.
- ຊຸກຍູ້ການຮັກສາສິ່ງແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນນານດ້ວຍການ (I) ຈັດຕັ້ງປະຕິບັດ ການມີສ່ວນຮ່ວມ ແລະ ການຄຸ້ມຄອງນຳໃຊ້ດິນແບບຍືນນານ, (ii) ຢຸດຕິການຖາງປ່າເຮັດໄຮ່ເລື່ອນລອຍ, (iii) ຢຸດຕິການເຮັດໄຮ່ປູກເຂົ້າ, ແລະ (iv) ແນະນຳວິທີການ ຄຸ້ມຄອງຊັບພະຍາກອນທຳມະຊາດແບບຊຸມຊົນ.

(2) ຍຸດທະສາດການພັດທະນາ

ບົນພື້ນຖານຈຸດປະສົງຂອງການພັດທະນາດັ່ງກ່າວຂ້າງເທິງ, ຍຸດທະສາດຂອງການພັດທະນາ ສຳລັບການພັດທະນາການປູກຝັງ ແມ່ນໄດ້ສ້າງຂຶ້ນ ສຳລັບການພັດທະນາແຕ່ລະດ້ານ, ເຊັ່ນ: ຄ້ຳປະກັນສະບຽງອາຫານໃນທົ່ງພຽງ, ຜະລິດກະສິກຳເປັນສິນຄ້າເຂດທົ່ງພຽງ, ການປູກພືດໃນເຂດຄ້ອຍຊັນ ແລະ ອື່ນໆ. ຍຸດທະສາດຂອງແຕ່ລະດ້ານໄດ້ອະທິບາຍດັ່ງລຸ່ມນີ້:

(a) ເຂດທົ່ງພຽງ

1) ຄ້ຳປະກັນສະບຽງອາຫານ (ເຂົ້າ).

ເພື່ອຮັບປະກັນ ການຄ້ຳປະກັນສະບຽງອາຫານ, ຍຸດທະສາດດັ່ງລຸ່ມນີ້ນຳໃຊ້ເຂົ້າໃນເຂດທົ່ງພຽງ.

- ຈະມີຄວາມຕ້ອງການຈຳນວນນຶ່ງ ເພື່ອພັດທະນາທົ່ງນາໃໝ່ (ລວມມີ ນາຮັບນ້ຳຊົນລະປະທານ) ໂດຍສະເພາະ ໃນຊ່ວງໄລຍະ 10 ປີຕໍ່ໜ້າ. ການເພີ່ມຂຶ້ນຂອງການບໍລິໂພກເຂົ້າ, ທີ່ຄຽງຄູ່ໄປກັບການເຕີບໂຕຂອງພົນລະເມືອງ, ສາມາດເພີ່ມຂຶ້ນໄດ້ດ້ວຍການເພີ່ມທົວໜ່ວຍຜະລິດຕະພາບ. ມາດຕະການສຳລັບເພີ່ມຜະລິດຕະພາບ ລວມມີ; I) ກຳນົດ ແລະ ແຈກຢາຍແນວພັນເຂົ້າປັບປຸງ ທີ່ເໝາະສົມກັບເງື່ອນໄຂສະເພາະພື້ນທີ່; ii) ສ້າງຄວາມເຂັ້ມແຂງການບໍລິການການສົ່ງເສີມ ເພື່ອປັບປຸງການປູກຝັງ ແລະ ເຕັກໂນໂລຊີການຄຸ້ມຄອງນ້ຳ ແລະ iii) ສະໜອງສິນເຊື່ອຫຼາຍຂຶ້ນ ເພື່ອນຳໄປຊື້ປັດໃຈຂາເຂົ້າກະສິກຳ.
- ອີກດ້ານນຶ່ງຂະຫຍາຍເນື້ອທີ່ປູກເຂົ້າລະດູແລ້ງ ຄາດວ່າຈະຢູ່ໃນອັດຕາຂະຫຍາຍຕົວ 10% ລະຫວ່າງປີ 2000 - 2010. ແລະ ໄລຍະ 2011 - 2020 ຕາມລຳດັບ. ຂະໜາດເນື້ອທີ່ລະດູແລ້ງ (ປະມານ 91,800 ເຮັກຕາ) ຍ້ອນແນວນັ້ນຈະເພີ່ມຂຶ້ນປະມານ 20% ເຖິງ 112,000 ເຮັກຕາໃນປີ 2020. ຕົວເລກນີ້ຍັງນ້ອຍກ່ວາເນື້ອທີ່ທີ່ດໄດ້ໃນລະດູແລ້ງທີ່ມີໃນປັດຈຸບັນ (ປະມານ 197,000 ເຮກຕາ) ທີ່ຢູ່ພາຍໃຕ້ລະບົບຊົນລະປະທານທີ່ມີໃນປັດຈຸບັນ. ດັ່ງນັ້ນຈຶ່ງຊີ້ໃຫ້ເຫັນວ່າ ເນື້ອທີ່ທີດຊົນລະປະທານລະດູແລ້ງທີ່ມີພຽງພໍໃນປັດຈຸບັນ, ແລະການຂະຫຍາຍຊົນລະປະທານຈະຕ້ອງສົ່ງເສີມ ການປັບປຸງປົວແປງລະບົບຊົນລະປະທານທີ່ມີ ແລະ ແນະນຳການຄຸ້ມຄອງໃຊ້ນ້ຳຊົນລະປະທານອັນເໝາະສົມ.
- ເພື່ອຄ້ຳປະກັນສະບຽງອາຫານຈາກ ທັດສະນະດັ່ງກ່າວຂ້າງເທິງ, ກົມປູກຝັງຈະຕ້ອງປະຕິບັດ "ປັບປຸງລະບົບການຂະຫຍາຍແນວພັນເຂົ້າ" ແລະ ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ຕ້ອງຈັດຕັ້ງປະຕິບັດ "ໂຄງການຄົ້ນຄ້ວາເຂົ້າແຫ່ງຊາດ". ມາດຕະການອື່ນທີ່ຈະຕ້ອງໄດ້ດຳເນີນການສຳລັບການຄ້ຳປະກັນສະບຽງອາຫານໂດຍຂະແໜງການຍ່ອຍຕ່າງໆ ແມ່ນໄດ້ອະທິບາຍໃນຫົວຂໍ້ຍ່ອຍອື່ນ, ເຊັ່ນ ການຈັດຕັ້ງ ແລະ ສະຖາບັນການຈັດຕັ້ງການພັດທະນາຊັບພະຍາກອນມະນຸດ, ຊົນລະປະທານ, ການເງິນຊົນນະບົດ.

2). ການກະສິກຳເປັນສິນຄ້າ.

ສຳລັບເລັ່ງການກະສິກຳເປັນສິນຄ້າໃນເຂດທົ່ງພຽງ, ຍຸດທະສາດດັ່ງຕໍ່ລົງໄປນີ້ຈະໄດ້ນຳໃຊ້.

- ຊາວນາເກືອບທັງໝົດສະແດງໃຫ້ເຫັນເຖິງການ ກ່ຽວພັນກັບການຄ້ຳປະກັນສະບຽງອາຫານສູງກ່ວາ ການໃຊ້ແນວພັນພືດໃໝ່ ໃນເຂດພື້ນທີ່ຕ່ຳຢູ່ທົ່ງພຽງ. ໃນພາກປະຕິບັດຕົວຈິງ, ຊາວນາຮຸ່ນໃຫມ່ທີ່ຕ້ອງການດິນ ແລະ ຜະລິດອາຫານຂອງເຂົາເຈົ້າຈະຂະຫຍາຍເນື້ອທີ່ປູກເຂົ້າ. ຍິ່ງໄປກ່ວານັ້ນ, ຊາວນາມີປະສົບການອັນຈຳກັດຕໍ່ການປູກພືດອື່ນນອກຈາກເຂົ້າ ແລະ ອີງ

ຕາມຄວາມຮູ້ສຶກດ້ານຄວາມສ່ຽງທີ່ຈະຕາມມາ. ໃນກໍລະນີ້ ການຜະລິດເກີນຄວາມຕ້ອງການ ອາດເກີດຂຶ້ນໄດ້. ເພື່ອຫຼີກລ່ຽງສະພາບດັ່ງກ່າວນັ້ນກໍຄືການຊຸກຍູ້ສ້າງລະບົບກະສິກຳ, ການປູກພືດຫລາຍແນວແບບປະສົມປະສານ ຈະຕ້ອງໄດ້ສົ່ງເສີມໂດຍສະເພາະໃນເນື້ອທີ່ປູກເຂົ້າທົ່ງພຽງ.

- ດັ່ງທີ່ກ່າວໃນຂໍ້ການຄ້ຳປະກັນ ກັບສະບຽງອາຫານຂ້າງເທິງນັ້ນ, ຄວາມແຕກຕ່າງລະຫວ່າງເນື້ອທີ່ນາ ແລະ ເນື້ອທີ່ຊົນລະປະທານ ໃນລະດູແລ້ງແມ່ນມີແລ້ວ ໃນປັດຈຸບັນ 105.000 ເຮັກຕາ, ແລະ ການຄາດຄະເນຮອດປີ 2010 ແມ່ນ 95.000 ເຮັກຕາ ແລະ 85.000 ເຮັກຕາ ໃນປີ 2020, ຖ້າຫາກວ່າບໍ່ໄດ້ສ້າງຊົນລະປະທານໃໝ່. ເນື້ອທີ່ທີ່ບໍ່ໄດ້ປູກເຂົ້າຄວນໃຊ້ເຂົ້າໃນການປູກພືດປະສົມປະສານເທົ່າທີ່ເປັນໄປໄດ້. ຍ້ອນແນວນັ້ນເນື້ອທີ່ເປົ້າໝາຍຂອງພືດປະສົມປະສານມີປະມານ 80.000 ເຮັກຕາ. ພືດທີ່ເປັນທ່າແຮງພືດລົ້ມລຸກ, ໄມ້ໃຫ້ໝາກ, ຜັກ, ພືດອຸດສາຫະກຳ ສຳລັບເປັນພືດທີ່ປະສົມປະສານໄດ້ສະເໜີໄວ້ຂໍ້ຍ່ອຍ 3.2.5.
- ວຽກຄົ້ນຄ້ວາຜ່ານມາຕໍ່ກັບການປູກພືດສວນ ແລະ ພືດອຸດສາຫະກຳແມ່ນມີຈຳກັດທີ່ສຸດນອກຈາກການຄົ້ນຄ້ວາກາເຟ. ອີກດ້ານໜຶ່ງ ວິທີການການຄົ້ນຄ້ວາ ທົດລອງແນວພັນພືດຊະນິດໃໝ່ ແລະ ການພັດທະນາການນຳໃຊ້ເຕັກໂນໂລຊີ ການປູກພືດແບບປະສົມປະສານ ແມ່ນມີໜ້ອຍໃນປັດຈຸບັນ. ເພື່ອການປູກພືດປະສົມປະສານ, ການພັດທະນາການດັດປັບເຕັກໂນໂລຊີ ເປັນຄວາມຕ້ອງການອັນຮີບດ່ວນ ແລະ ແກ່ນສານ NAFRI ຈະຕ້ອງດຳເນີນແຜນການຄົ້ນຄ້ວາຫຼາຍສິ່ງຫຼາຍຢ່າງ. ໄດ້ພິຈາລະນາວ່າ ພື້ນທີ່ເປັນແກ່ນສານ ສຳລັບການປະສົມປະສານດັ່ງໄດ້ກ່າວໄວ້ໃນຂໍ້ 4.1.5, ໂຄງການທີ່ໄດ້ສະເໜີມີ "ໂຄງການຄົ້ນຄ້ວາເຕັກໂນໂລຊີການປູກກາເຟ', ໂຄງການເຕັກໂນໂລຊີການປູກຜັກ","ໂຄງການຄົ້ນຄ້ວາເຕັກໂນໂລຊີປູກໄມ້ໃຫ້ໝາກ", ແລະ ໂຄງການຄົ້ນຄ້ວາ ການປູກພືດເນີນສູງ",
- ຄຽງຄູ່ໄປກັບການພັດທະນາເຕັກໂນໂລຊີ ທີ່ດຳເນີນໂດຍ NAFRI, ການເຮັດສາທິດໃນແປງຂະໜາດນ້ອຍ ແລະ ສາມາດຄຸ້ມຄອງໄດ້ດ້ວຍການນຳໃຊ້ຊະນິດທົດລອງ ແລະ/ຫຼື ການດັບປັບເຕັກໂນໂລຊີ ຕໍ່ພືດປະສົມປະສານ ຄວນສ້າງຂຶ້ນ ພາຍໃຕ້ການຄຸ້ມຄອງຢ່າງເຕັມສ່ວນ ຫຼື ການຊີ້ນຳຂອງພະນັກງານສົ່ງເສີມຂອງລັດ. ແນ່ນອນຊະນິດພັນທີ່ທົດລອງ ແລະ/ຫຼື ເຕັກໂນໂລຊີດັດປັບໄດ້ຮັບການພັດທະນາ ແລ້ວໂດຍ NAFRI ຫຼື ປະເທດໃກ້ຄຽງອື່ນໆຄວນເອົາມານຳໃຊ້. ຫຼັງຈາກນັ້ນຊາວນາສາມາດເຫັນຄວາມເປັນໄປໄດ້ດ້ານເຕັກນິກກ່ອນ ແລະ ຄວາມດຶງດູດດ້ານການເງິນຂອງພືດປະສົມປະສານ. ຈາກໝາກຜົນທີ່ໄດ້ຮັບນັ້ນຊາວນາຈະຄ່ອຍໆປະລະການລົບຫຼີກຄວາມສ່ຽງຂອງເຂົາເຈົ້າຜ່ານການສັງເກດ ຈາກແປງສາທິດ. ອີງຕາມການສາທິດດັ່ງກ່າວ ຊາວນາບາງຄົນຈະເລີ່ມປູກພືດປະສົມປະສານ ບົນ

ພື້ນຖານຄວາມຮູ້ທີ່ເຂົາເຈົ້າເຫັນກັບຕາໃນໜານແປງສາທິດ. ສຳລັບການຊຸກຍູ້ລະດັບເຕັກນິກ, ຈຶ່ງໃຫ້ຄຳເຫັນວ່າແປງສາທິດເຫຼົ່ານີ້ສາມາດນຳໃຊ້ ສຳລັບຝຶກອົບຮົມພະນັກງານສົ່ງເສີມຂອງທ້ອງຖິ່ນ ແລະ ຊາວນາ ບົນພື້ນຖານຂອງ "ການສອນດ້ວຍການສະແດງໃຫ້ເຫັນ" ຫຼື "ທັງຮຽນທັງເຮັດ".

- ສ້າງແປງສາທິດ ແລະ ຝຶກອົບຮົມແມ່ນອົງປະກອບອັນສຳຄັນ ຂອງໂຄງການສົ່ງເສີມຊຸກຍູ້ພືດເປັນສິນຄ້າ. ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຈະປະຕິບັດໂຄງການຜະລິດພືດສິນຄ້າ ລວມມີ "ໂຄງການທົດລອງກະສິກຳປະສົມປະສານເຂດພູພຽງ","ໂຄງການສົ່ງເສີມການຜະລິດແບບຍືນນານ","ໂຄງການສົ່ງເສີມພືດສົ່ງອອກ" ແລະ "ໂຄງການສົ່ງເສີມໄມ້ໃຫ້ໝາກ". ອີກເພີ່ມເຕີມ, ການລ້ຽງມ້ອນ ນຳໃຊ້ໃບມອນ, ກໍສົ່ງເສີມເໝືອນກັນເປັນ "ການພັດທະນາການລ້ຽງມ້ອນ" ແລະ "ໂຄງການຊ່ວຍເຫຼືອພາກເອກະຊົນສຳລັບການຜະລິດໃໝ່(ຂະໜາດໃຫຍ່)",ຈົນເຖິງຂະນະນີ້ວັດຖຸດິບເກືອບທັງໝົດສຳລັບອຸດສາຫະກຳຕ່ຳແສ່ນໄດ້ນຳເຂົ້າມາ ສປປ ລາວ.
- ມີການລາຍງານວ່າມີການຂາດແຄນແນວພັນປັບປຸງ ແລະ ເບັ້ຍໄມ້ຕ່າງໆສຳລັບການສົ່ງເສີມປູກພືດປະສົມປະສານ. ກໍລະນີດັ່ງກ່າວນີ້ເປັນຍ້ອນການຂາດບໍລິສັດ ແນວພັນເອກະຊົນ ແລະ ແນວພັນນຳເຂົ້າລາຄາສູງ. ເພື່ອແກ້ໄຂຂໍ້ຈຳກັດທາງດ້ານແນວພັນນີ້, ລັດຖະບານອາດມີຄວາມຕ້ອງການສະແດງຄວາມຮັບຜິດຊອບ ສຳລັບການພັດທະນາສະໜອງແນວພັນພື້ນຖານສຳລັບບາງພືດ. ພາກເອກະຊົນຈະຕ້ອງການປະຕິບັດ ຂະຫຍາຍແນວພັນພື້ນຖານເຫຼົ່ານີ້ເພື່ອເຮັດໃຫ້ລັດຖະບານເຂົ້າແຊກແຊງຕ່ຳທີ່ສຸດໃນຕະຫຼາດເສດຖະກິດ. ໃນການຕິດພັນດັ່ງກ່າວນີ້ກົມປູກຝັງ ແລະ NAFRI ຈະປະຕິບັດໂຄງການ"ພັດທະນາເຕັກໂນໂລຊີແນວພັນພື້ນຖານ".
- ການປູກພືດປະສົມປະສານ ແລະ ຄວບຄູ່ກັນກັບ ການປູກຝັງກັບການລ້ຽງສັດ ແລະ ການປະມົງດັ່ງກ່າວຂ້າງເທິງນັ້ນ ມີຄວາມຕ້ອງການແຮງງານຫຼາຍກ່ວາ ເພື່ອດູແລພາກສະໜາມຢ່າງເໝາະສົມ. ໃນຕໍ່ໜ້າ, ອີກດ້ານນຶ່ງ ການເຮັດກະສິກຳຮອບດ້ານໃນລະດັບໃຫຍ່ຈະເຮັດໃຫ້ເປັນການຊຸກຍູ້ ແລະ ສ້າງລາຍຮັບກະສິກຳມີສະຖຽນລະພາບ. ໃນສະພາບດັ່ງກ່າວນີ້, ການເຮັດຟາມນຳໃຊ້ກົນຈັກຈະມີຄວາມຈຳເປັນໃນການຫລຸດຜ່ອນມູນຄ່າການຜະລິດ ແລະ ເພີ່ມປະສິດທິຜົນຂອງວຽກ. ສຳລັບການເຮັດຟາມນຳໃຊ້ກົນຈັກ, NAFRI ຈະປະຕິບັດ"ໂຄງການຄົ້ນຄ້ວາຟາມລະບົບກົນຈັກ" ແລະ" ທົດລອງບັນທັດຖານການປະຕິບັດການຂອງກົນຈັກກະສິກຳ"; "ໂຄງການຄົ້ນຄ້ວາເຕັກໂນໂລຊີ ຟາມຮອບດ້ານ" ແມ່ນມີຄວາມຕ້ອງການເໝືອນກັນເພື່ອຊຸກຍູ້ການກະສິກຳໃນລະດັບໃຫຍ່.

(b) ດິນເຂດຄ້ອຍຊັນ

ເພື່ອນຳໃຊ້ເສດຖະກິດຕະຫລາດເຂົ້າໃນພື້ນທີ່ຄ້ອຍຊັນ, ຍຸດທະສາດດັ່ງຕໍ່ລົງໄປນີ້ຈະໄດ້ນຳໃຊ້.

- ການຜະລິດເຂົ້າໃນເຂດເນີນສູງທັງໝົດ ແລະ ດຳເນີນດ້ວຍການເຮັດໄຮ່. ເພື່ອຢຸດເຊົາການແຜ່ກະຈາຍ ຮວມທັງການ ເພື່ອຜະລິດຕະພາບຂອງການປູກເຂົ້າເຂດເນີນສູງ ແລະ ການສົ່ງເສີມສ້າງລາຍຮັບກະສິກຳອື່ນແມ່ນບັນຫານຶ່ງທີ່ສຳຄັນໃນສປປ ລາວ. ໃນວຽກດັ່ງກ່າວນີ້ NAFRI ຕ້ອງປະຕິບັດໂຄງການ "ຄົ້ນຄ້ວາເຂົ້າແຫ່ງຊາດ". ໂດຍທົ່ວໄປແລ້ວເຂດເນື້ອທີ່ຄ້ອຍຊັນ ໄດ້ນຳເຂົ້າຈາກທົ່ງພຽງ ຍ້ອນຜົນຜະລິດຕ່ຳຂອງເຂົ້າໃນເຂດເນີນສູງ. ການສຸກເສີນການຂາດເຂົ້າກິນມັນເກີດຂຶ້ນໃນເຂດຄ້ອຍຊັນ ແລະການຄ້ຳປະກັນສະບຽງອາຫານ ແມ່ນເປັນບັນຫາສຳຄັນຫຼາຍກ່ວາເຂດຮາບພຽງ. ຍ້ອນແນວນັ້ນ, "ການຂາດເຂົ້າກິນສຳລັບຈຸດປະສົງສຸກເສີນ" ຈະຕ້ອງສະເໜີໃນເຂດຄ້ອຍຊັນທີ່ຫ່າງໄກ.
- ການຢຸດຕິການເຮັດໄຮ່ເລື່ອນລອຍຈະຕ້ອງໄດ້ຮັບຜົນສຳເລັດ ບໍ່ສະເພາະແຕ່ ດ້ວຍການໃຊ້ມາດຕະການຍົກຜະລິດຕະພາບເຂົ້າເຂດເນີນສູງເທົ່ານັ້ນ. ມາດຕະການອັນສຳຄັນຈະຮວມທັງກິດຈະກຳການຄົ້ນຄ້ວາ ແລະ ສົ່ງເສີມ ເພື່ອນປ່ຽນເນື້ອທີ່ໄຮ່ເລື່ອນລອຍມາເປັນດິນກະສິກຳແບບຄົງທີ່. ຈາກຈຸດຢືນດັ່ງກ່າວນີ້, ວຽກຄົ້ນຄ້ວາຈະຕ້ອງໄດ້ປັບປຸງໃຫ້ເຂັ້ມແຂງ ເພື່ອການກຳນົດລະບົບການປູກພືດ ແລະ ເຕັກໂນໂລຊີການປູກຝັງທີ່ນຳໃຊ້ໄດ້ແຕ່ເຂດເຮັດໄຮ່ຫຼັກແຫຼ່ງ. ວຽກຄົ້ນຄ້ວາຕ້ອງກວມເນື້ອທີ່ຂອງການຜະລິດເພີ່ມເຕີມຢ່າງກ້ວາງຂວາງແກ່ເຂົ້າເນີນສູງ, ຯລຯ ພືດລົ້ມລຸກອື່ນໆ, ໄມ້ໃຫ້ໝາກ (ໄມ້ກິນໝາກ) ແລະ ການລ້ຽງສັດທັງໝົດ. ບູລິມະສິດຕ້ອງໃຫ້ແກ່ການເພີ່ມຂຶ້ນດ້ານລາຍຮັບກະສິກຳ NAFRI ຕ້ອງຈັດຕັ້ງປະຕິບັດໂຄງການຄົ້ນຄ້ວາກະສິກຳຮອບດ້ານເຂດເນີນສູງ.
- ນອກຈາກວຽກຄົ້ນຄ້ວາຂ້າງເທິງ, ການສ້າງຄວາມເຂັ້ມແຂງການສົ່ງເສີມ ແລະ ການບໍລິຫານສິນເຊື່ອແມ່ນມີຄວາມຈຳເປັນການຢຸດຕິການເຮັດໄຮ່ເລື່ອນລອຍ ມີສະຖຽນລະພາບໃນລັກສະນະຮອບດ້ານ. ກ່ຽວກັບການບໍລິຫານແຕ່ກ່ອນ, ການເຜີຍແຜ່ເຕັກໂນໂລຊີທີ່ໄດ້ຮັບການພັດທະນາແລ້ວ ຈາກກິດຈະກຳ ຄົ້ນຄ້ວາໄລຍະຜ່ານມາຈະມີບູລິມະສິດ. ໂຄງການສົ່ງເສີມການປູກພືດຂອງພືດຫຼາຍຊະນິດແມ່ນນຳໃຊ້ໄດ້ສູງເໝືອນກັນຢູ່ເຂດຄ້ອຍຊັນ, ໂດຍສະເພາະພືດເນີນສູງ, ໄມ້ໃຫ້ໝາກ ແລະ ການລ້ຽງມ້ອນ.
- ເຖິງແມ່ນວ່າບັນຫານີ້ບໍ່ເປັນການແຊູມຄົມຈາກມຸມມອງຄ້ຳປະກັນສະບຽງແຫ່ງຊາດ, ເນື້ອທີ່ຮັບຊຸນລະປະທານໃໝ່ພັດທະນາ ໃນເຂດພື້ນທີ່ຄ້ອຍຊັນຈະໄດ້ຮັບບູລິມະສິດສູງສຳລັບການຢຸດຕິເຮັດໄຮ່ເລື່ອນລອຍ. ວຽກນີ້ຈະໄດ້ ຮັບການຊຸກຍູ້ສົ່ງເສີມ, ແຕ່ວ່າຫຼັງຈາກນຳມາພິ

ຈາລະນາຄວາມເປັນໄປໄດ້ທາງດ້ານເສດຖະກິດເທົ່ານັ້ນ. ວຽກນີ້ຈະໄດ້ນຳມາກ່າວໃນພາກຂະແໜງການຍ່ອຍຊົນລະປະທານ

(c) ອື່ນໆ

ລະບົບການການສົ່ງເສີມ ແມ່ນພື້ນຖານສຳລັບການປະຕິບັດໂຄງການການປູກຝັງດັ່ງໄດ້ກ່າວໄວ້ໃນຂ້າງເທິງ. ໃນແງ່ຂອງສະຖາບັນການຈັດຕັ້ງ ແລະ ຊັບພະຍາກອນມະນຸດທີ່ພົວພັນກັບການບໍລິການການສົ່ງເສີມ ທີ່ໄດ້ບັນລະຍາຍໃນຂໍ້ 6.2 ແລະ 6.3 ຕາມລຳດັບ. ວັດຖຸການສົ່ງເສີມກໍຈຳເປັນເໝືອນກັນ ແລະ ກົມປູກຝັງ ກໍໄດ້ກະກຽມແລ້ວເຊັ່ນ ວັດຖຸອຸປະກອນການສົ່ງເສີມ. ເຖິງຢ່າງໃດກໍຕາມ, ການປັບປຸງ ແມ່ນມີຄວາມຕ້ອງການໃນອານາຄົດ, ນັບແຕ່ການຄົ້ນຄ້ວານຳໃຊ້ ແລະ ຜົນຂອງການສາທິດ ຈະຕ້ອງມີຫຼັກການຈັດຕັ້ງປະຕິບັດຫຼາຍໆໂຄງການ. ຍ້ອນແນວນັ້ນຈຶ່ງສະເໜີວ່າກົມປູກຝັງ ແລະ NAFRI ຕ້ອງປະຕິບັດໂຄງການ "ໂຄງການເຜີຍແຜ່ເຕັກໂນໂລຊີກະສິກຳ" ເພື່ອຊຸກຍູ້ການບໍລິການການສົ່ງເສີມຢ່າງມີປະສິດທິຜົນ. ຫຼັງຈາກຈັດຕັ້ງປະຕິບັດໂຄງການຕ່າງໆທີ່ພົວພັນກັບການປູກຝັງ, ໂອກາດຂອງສັນຍາຟາມກັບການປຸງແຕ່ງກະສິກຳ ຫຼື ມີກາງອາດຈະຂະຫຍາຍອອກ.ຖ້າດັ່ງນັ້ນແລ້ວ "ສັນຍາຂອງຟາມໃນພື້ນທີ່ສຸມ" ຈະໄດ້ເຮັດເພື່ອຂະຫຍາຍຊ່ອງຂອງຕະຫລາດ ສຳລັບພືດອຸດສາຫະກຳກໍຄືລາຍຮັບຂອງຟາມມີສະຖຽນລະພາບ.

(3) ການຈັດຕັ້ງປະຕິບັດ

ທັງໝົດ 23 ໂຄງການທີ່ສະເໜີ ສຳລັບການພັດທະນາຂະແໜງປູກຝັງ ການປະຕິບັດແຜນການຂອງໂຄງການທີ່ໄດ້ສະເໜີ, ຮວມທັງກິດຈະກຳຕ່າງໆທີ່ຕາມມາຊ່ວງໄລຍະ 2001-2020 ຈະໄດ້ສ້າງເປັນໄລຍະ ໄລຍະ. ການປະຕິບັດແຜນການອອກເປັນສາມຊ່ວງ, ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ.

ຍຸດທະສາດໄລຍະສັ້ນ, ລະບົບການປູກຝັງຕ່າງໆທີ່ມີໃນປັດຈຸບັນຕ້ອງໄດ້ປັບປຸງຕາມໂຄງການທີ່ໄດ້ເຮັດຢ່າງຕໍ່ເນື່ອງ ຫຼື ໄລຍະຜ່ານມາ. ວຽກດັ່ງກ່າວນີ້ພົວພັນເຖິງການຜະລິດເຂົ້າລວມມີ "ປັບປຸງລະບົບການຂະຫຍາຍພັນເຂົ້າ", "ໂຄງການຄົ້ນຄ້ວາເຂົ້າແຫ່ງຊາດ" ແລະ "ໂຄງການຄົ້ນຄ້ວາກະສິກຳເນີນສູງຮອບດ້ານ". ນອກຈາກການຜະລິດເຂົ້າແລ້ວ "ໂຄງການການພັດພະນາການລ້ຽງມ້ອນ" ,ແລະ "ໂຄງການການສົ່ງເສີມການທົດລອງກະສິກຳ" ກໍໄດ້ຮັບການພິຈາລະນາເປັນໂຄງການເພື່ອຂະຫຍາຍຈາກຄວາມພະຍາຍາມຜ່ານມາ.

ວິທີການພື້ນຖານເພື່ອພັດທະນາກະສິກຳເປັນສິນຄ້າ ໃນເຂດທີ່ງພຽງກເປັນຂໍ້ແນະນຳໃຫ້ຢູ່ໃນຊ່ວງນີ້ເໝືອນກັນ. ຈາກມຸມມອງນີ້, ໂຄງການຄົ້ນຄ້ວາທີ່ພົວພັນກັບການປູກພືດປະສົມປະສານເກືອບທັງໝົດແມ່ນ ຕ້ອງການພື້ນຖານ, ນັບແຕ່ການເຮັດສາທິດບໍ່ສາມາດປະຕິບັດໄດ້ໂດຍປາສະຈາກຜົນຂອງການນຳໃຊ້. ຍ້ອນແນວນັ້ນ, "ໂຄງການຄົ້ນຄ້ວາເຕັກໂນໂລຊີການປູກກາເຟ", "ໂຄງການຄົ້ນຄ້ວາເຕັກໂນໂລຊີການປູກກາເຟ", "ໂຄງການຄົ້ນຄ້ວາເຕັກໂນໂລຊີການປູກຜັກ", ໂຄງການຄົ້ນຄ້ວາເຕັກໂນໂລຊີການປູກໄມ້ໃຫ້ໝາກ", "ໂຄງການຄົ້ນຄ້ວາເຕັກໂນໂລຊີການປູກພືດເນີນສູງ "ຈະຕ້ອງປະຕິບັດໃນຊ່ວງໄລຍະນີ້". ຄຽງຄູ່ກັບການຄົ້ນຄ້ວານີ້, ໂຄງການປັບປຸງຄວາມເຂັ້ມແຂງສະຖາບັນການຈັດຕັ້ງຂອງ NAFRI ຈະຕ້ອງໄດ້ປະຕິບັດ ເພື່ອເພີ່ມປະສິດທິຜົນ ແລະ ຄຸນນະພາບຂອງການຄົ້ນຄ້ວາ, ຍັງສະເໜີຕື່ມອີກວ່າໂຄງການດ້ານ "ພັດທະນາເຕັກໂນໂລຊີແນວພັນພື້ນຖານ" ຈະໄດ້ປະຕິບັດຢູ່ຊ່ວງໄລຍະເບື້ອງຕົ້ນ, ເພາະວ່າ ການຂາດແນວພັນປັບປຸງ ແມ່ນນຶ່ງໃນບັນຫາຂໍ້ກຸມແຈສຳຄັນການຊຸກຍູ້ປູກພືດປະສົມປະສານ, ແລະ ຈະໃຊ້ເວລາສຳລັບພັດທະນາແນວພັນພື້ນຖານ.

ຍຸດທະສາດໄລຍະກາງ, ຜົນຂອງການຄົ້ນຄ້ວາທີ່ໄດ້ພັດທະນາໃນຊ່ວງໄລຍະທີ່ I ຈະຕ້ອງນຳໃຊ້ຢູ່ລະດັບສະໜາມ ສຳລັບການສາທິດແກ່ຊາວນາ. ໃນສາຍພົວພັນດັ່ງກ່າວນີ້, ໂຄງການສົ່ງເສີມດັ່ງກ່າວຈະຕ້ອງໄດ້ປະຕິບັດຄື: "ໂຄງການປູກພືດປະສົມປະສານ", "ໂຄງການປູກພືດອ້ອມຊານເມືອງ, "ໂຄງການສົ່ງເສີມການປູກພືດສົ່ງອອກ", ແລະ ໂຄງການສົ່ງເສີມການປູກໄມ້ໃຫ້ໝາກ. ສຳລັບການປະຕິບັດໂຄງການ/ແຜນການຂ້າງເທິງນັ້ນ, ໂຄງສ້າງການສົ່ງເສີມຈາກສູນກາງຫາລະດັບພາກສະໜາມຈະເປັນແກ່ນສານ: ຂໍ້ທີ່ຄວນເອົາໃຈໃສ່ຄືວ່າການຄຸ້ມຄອງນ້ຳຊົນລະປະທານ ແລະ ສະໜອງສິນເຊື່ອໃຫ້ຫຼາຍຂຶ້ນ ສຳລັບຊື້ຂາເຂົ້າກະສິກຳ ເປັນສິ່ງສຳຄັນເໝືອນກັນ. ຍ້ອນແນວນັ້ນ, ໂຄງການກ່ຽວຂ້ອງຈະແນະນຳໃຫ້ເຮັດກ່ອນປີ 2005 ແລະ ໂຄງການສົ່ງເສີມຕ່າງໆຈະແນະນຳໃຫ້ເຮັດ ຂຶ້ນກັບຄວາມຄືບໜ້າຂອງໂຄງການ. ເພື່ອຊຸກຍູ້ປະສິດທິຜົນຂອງການບໍລິການການສົ່ງເສີມ, "ໂຄງການເຜີຍແຜ່ເຕັກໂນໂລຊີກະສິກຳ" ຈະເລີ່ມຕົ້ນລິງມືໃນຊ່ວງໄລຍະນີ້.

ໂຄງການພື້ນຖານເກືອບທັງໝົດ ສຳລັບການຄ້ຳປະກັນສະບຽງອາຫານ ແລະ ການປູກຝັງປະສົມປະສານ ຈະເລີ່ມຕົ້ນເປັນຍຸດທະສາດໄລຍະສັ້ນ ແລະ ໄລຍະກາງ. ຍຸດທະສາດໄລຍະຍາວ ເລັ່ງໃສ່ການຄ້ຳປະກັນສະບຽງອາຫານ ໃຫ້ມີສະຖຽນລະພາບ ແລະ ຂະຫຍາຍກະສິກຳເປັນສິນຄ້າທີ່ກ້າວໜ້າ ດ້ວຍການເຮັດກະສິກຳກົນຈັກ ແລະ ກະສິກຳຕາມສັນຍາ. "ໂຄງການຊ່ວຍເຫຼືອພາກເອກະຊົນ ສຳລັບການຜະລິດໃໝ່ (ຂະໜາດໃຫຍ່)", "ໂຄງການ

ຄົ້ນຄວ້າລະບົບກະສິກຳກົນຈັກ", "ບັນທັດຖານການທົດລອງການປະຕິບັດການ ຂອງກົນຈັກກະສິກຳ", "ໂຄງການຄົ້ນຄ້ວາເຕັກໂນໂລຊີກະເສດຮອບດ້ານ (ເຮັດຟາມຮອບດ້ານ)", "ເຮັດຟາມສັນຍາໃນເຂດກະເສດສຸມ" ຈະໄດ້ເລີ່ມເຮັດເປັນຍຸດທະສາດໄລຍະຍາວ.

(4) ຄາດຄະເນຜົນໄດ້ຮັບ.

ໝາກຜົນດັ່ງຕໍ່ລົງໄປນີ້ຄາດວ່າຈະໄດ້ຮັບ ດ້ວຍການພັດທະນາການປູກຝັງ

<u>ພື້ນທີ່ເຂດທົ່ງພຽງ.</u>

- ລະບົບການຂະຫຍາຍພັນເຂົ້າຈະສຳເລັດໃນປີ 2010 ແລະ ຊາວນາ 100% ຈະນຳໃຊ້ແນວພັນເຂົ້າປັບປຸງໃນປີ 2020.
- ເປົ້າໝາຍການເຂົ້າຫາການບໍລິການການສົ່ງເສີມ ແລະ ການເງິນຊົນນະບົດ ກໍຄື ການຊຸກຍູ້ປະສິດທິຜົນຂອງຊົນລະປະທານຈະໄດ້ກ່າວ ໃນຂະແໜງການຍ່ອຍອື່ນ,
- ເນື້ອທີ່ດັ່ງຕໍ່ລົງໄປນີ້, ຄາດໝາຍຜະລິດຕະພາບ ແລະ ຜົນຜະລິດ ສຳລັບເຂົ້ານາ ແລະ ເຂົ້າລະດູແລ້ງຈະໄດ້ບັນລຸເປົ້າໝາຍ ໃນປີ 2010 ແລະ 2020,

ຕາຕະລາງ 6.1 ເນື້ອທີ່ເປົ້າໝາຍ, ຜະລິດຕະພາບຂອງນາ ແລະ ນາແຊງ (ລະດູແລ້ງ)

| ລາຍການ | | | ປີ 2000 | ປີ 2010 | ປີ 2020 |
|---|---|---|---|---|---|
| ເຂົ້ານາປີ | ເນື້ອທີ່ | ຮ.ຕ | 475,560 | 475,500 | 475,500 |
| | ຜະລິດຕະພາບ | ໂຕນ/ຮ.ຕ | 3.27 | 4.30 | 4.50 |
| | ຜົນຜະລິດ | ໂຕນ | 1,552,800 | 2.046,655 | 2,139,750 |
| ເຂົ້ານາແຊງ | ເນື້ອທີ່ | ຮ.ຕ | 91,800 | 101,800 | 111,980 |
| | ຜະລິດຕະພາບ | ຕ/ຮ.ຕ | 4.25 | 5.49 | 6.00 |
| | ຜົນຜະລິດ | ຕ | 390,150 | 559,256 | 671,880 |

- ເນື້ອທີ່ປູກຝັງນອກຈາກເຂົ້າໃນລະດູແລ້ງຈະມີ 20% (40,000 ເຮັກຕາ) ຂອງເນື້ອທີ່ຊົນລະປະທານໃນປີ 2010 ແລະ 40% (80,000 ເຮັກຕາ) ໃນປີ 2020.
- ຫຼາຍກ່ວາ 70% ຂອງຜົນຜະລິດກາເຟທັງໝົດ ຈະມີຄຸນນະພາບເປັນທີ່ຮັບໄດ້ຈາກສາກົນໃນປີ 2010,
- ຊາວນາ 100%, ທີ່ໄດ້ເຂົ້າສູ່ສູນຝຶກອົບຮົມດ້ານລ້ຽງມ້ອນ, ຈະນຳໃຊ້ຕົວມ້ອນພັນປັບປຸງ, ໄດ້ຮັບການຝຶກອົບຮົມດ້ານເຕັກນິກ ແລະ ນຳໃຊ້ໂຮງລ້ຽງມ້ອນປັບປຸງ ໃນປີ 2020.

<u>ດິນຄ້ອຍຊັນ.</u>

- ແນວພັນປັບປຸງ ແລະ ຜົນຈາກການຄົ້ນຄ້ວານຳໃຊ້ ຈະໄດ້ຮັບການພັດທະນາສຳລັບເຂົ້າເບີນສູງ,
- ເປົ້າໝາຍຕໍ່ການເຂົ້າສູ່ການບໍລິການສົ່ງເສີມ, ການເງິນຊົນນະບົດ ແລະ ຕະຫຼາດຈະໄດ້ອະທິບາຍໃນຂະແໜງການຍ່ອຍອື່ນ.
- ເນື້ອທີ່ດັ່ງຕໍ່ລົງໄປນີ້, ຜະລິດຕະພາບ ແລະ ຜົນຜະລິດຂອງເຂົ້າເບີນສູງ ຈະບັນລຸເປົ້າໝາຍໃນປີ 2010 ແລະ 2020.

ຕາຕະລາງ 6.2 ເນື້ອທີ່ເປົ້າໝາຍ, ຜະລິດຕະພາບ ແລະ ຜົນຜະລິດຂອງເຂົ້າເບີນສູງ.

| ລາຍການ | | | ປີ 2000 | ປີ 2010 | ປີ 2020 |
|---|---|---|---|---|---|
| ເຂົ້າເບີນສູງ | ເນື້ອທີ່ | ຮ.ຕ | 152,100 | 110,000 | 110,000 |
| | ຜະລິດຕະພາບ | ຕ/ຮ.ຕ | 1.70 | 1.70 | 2.00 |
| | ຜົນຜະລິດ | ຕ | 258,750 | 187,000 | 220,000 |

- ແຫຼ່ງລາຍຮັບຈະມີຫຼາຍແຫຼ່ງດ້ວຍການເຮັດຟາມປະສົມປະສານ ຮວມມີໄມ້ໃຫ້ໝາກ, ຜັກ ແລະ ຜົນຜະລິດພືດເບີນສູງ, ແລະ
- ແຫຼ່ງລາຍຮັບດ້ານອື່ນ ລວມມີເຄື່ອງປ່າຂອງດົງ ແລະ ກະເສດ-ປ່າໄມ້ ປະສົມປະສານໃນເຂດຄ້ອຍຊັນ ຈະອະທິບາຍໃນຂະແໜງການຍ່ອຍ "ການຍຸດຕິການເຮັດໄຮ່ເລື່ອນລອຍ".

## 6.6 ການລ້ຽງສັດ ແລະ ການປະມົງ.

### 6.6.1 ການລ້ຽງສັດ

(1) ຈຸດປະສົງຂອງການພັດທະນາການລ້ຽງສັດ.

ການລ້ຽງສັດບໍ່ພຽງແຕ່ຫຼິ້ນບົດບາດຕົ້ນຕໍໃນລະບົບຟາມເຊັ່ນແຮງລາກແກ່ ແລະ ແຫຼ່ງຝຸ່ນຄອກ, ແຕ່ກໍເປັນນຶ່ງທີ່ເປັນທີ່ໄດ້ປຽບໃນການຜະລິດສິນຄ້າ ຂອງກະສິກຳປະສົມປະສານ ຢູ່ທັງເຂດທົ່ງພຽງ ແລະ ເຂດຄ້ອຍຊັນ. ມີທ່າແຮງອັນໃຫຍ່ຫຼວງຢູ່ເໝືອນກັນ ສຳລັບການເພີ່ມຜົນຜະລິດ ດ້ວຍການປັບປຸງສຸຂະພາບສັດ, ອາຫານສັດ ແລະ ແນວພັນສັດ, ປະມານ 90% ຂອງການລ້ຽງສັດປະຈຸບັນ ຊຶ່ງລ້ຽງໂດຍຜູ້ລ້ຽງຂະໜາດນ້ອຍ, ພວກລ້ຽງສັດບໍ່ແມ່ນຊາວນາກະສິກອນລ້ຽງສັດຕະຫຼອດເວລາ ແລະ ຜົນຜະລິດຈາກສັດຂອງເຂົາເຈົ້າແມ່ນຕ່ຳ ພາຍໃຕ້ລະບົບການໃຫ້ອາຫານປັດຈຸບັນ. ເຖິງຢ່າງໃດກໍຕາມ ການລ້ຽງສັດແມ່ນເປັນແຫຼ່ງລາຍຮັບອັນສຳຄັນ ສຳລັບເຂົາເຈົ້າ. ອີກດ້ານນຶ່ງຍັງທົ່ງຫຍ້າທຳມະຊາດ ທີ່ບໍ່ໄດ້ນຳໃຊ້ເປັນຈຳນວນຫຼາຍ ບ່ອນທີ່ການພັດທະນາການລ້ຽງສັດຂະໜາດໃຫຍ່ ດ້ວຍການລົງທຶນຕ່ຳ ທີ່ເປັນໄປໄດ້ດ້ວຍການນຳໃຊ້ການຄຸ້ມຄອງດ້ວຍເຕັກໂນໂລຊີທັນສະໄໝສຳລັບການຜະລິດ ແລະ ເກັບມ້ຽນອາຫານສັດ.

ດ້ວຍເງື່ອນໄຂທີ່ອຳນວຍຄວາມສະດວກເຫຼົ່ານີ້, ກົມລ້ຽງສັດໄດ້ຄາດຫວັງຈຸດປະສົງໄວ້ໃນລະດັບອັນກ້ວາງຂວາງ; ເພີ່ມລາຍຮັບຂອງຊາວນາ, ສະໜອງໂປຣຕີນຈາກສັດໃຫ້ແກ່ຊຸມຊົນໃນຕົວເມືອງ, ຊຸກຍູ້ເສດຖະກິດແຫ່ງຊາດດ້ວຍການ ເພີ່ມການສົ່ງອອກສັດ ແລະ ປຸງແຕ່ງເປັນສິນຄ້າດ້ວຍມູນຄ່າເພີ່ມສູງ. ນອກຈາກນັ້ນ ການລ້ຽງສັດຈະຂຸດຄົ້ນຊັບພະຍາກອນດິນທີ່ບໍ່ໄດ້ນຳໃຊ້ ເປັນທົ່ງຫຍ້າ ສຳລັບນຳໃຊ້ຢ່າງມີປະສິດທິຜົນ. ສັດທີ່ເປັນຫຼັກແຫຼ່ງສຳລັບພັດທະນາການລ້ຽງສັດ ແມ່ນໃຫຍ່ງົວລາດ ແລະ ຄວາຍ ແລະ ສັດນ້ອຍຄືໝູ ແລະ ສັດປີກ. ຜົນຜະລິດສັດຈະເພີ່ມຂຶ້ນທັງການສ້າງຄວາມເຂັ້ມແຂງໃຫ້ຊາວນາກະສິກອນລ້ຽງສັດຂະໜາດນ້ອຍ ແລະ ຊຸກຍູ້ຊາວນາກະສິກອນ ແລະ ບໍລິສັດລ້ຽງສັດຂະໜາດໃຫຍ່.

ເປົ້າໝາຍການຜະລິດຮອດປີ 2020 ແມ່ນບົນພື້ນຖານຕົວເລກສະເໜີໂດຍກົມລ້ ຽງສັດ ແລະ ການປະມົງ ໂດຍອີງຕາມວິໄສທັດຂອງກະຊວງກະສິກຳ ແລະ ປ່າໄມ້ 2020 ດັ່ງສະແດງໃຫ້ເຫັນຕາຕະລາງ 6.3. ຕົວເລກເຫຼົ່ານີ້ ແມ່ນນຳມາພິຈາລະນາໃນເງື່ອນໄຂປັດຈຸບັນ ແລະ ສາມາດບັນລຸໄດ້ດ້ວຍການປະຕິບັດມາດຕະການ ການປັບປຸງ ແລະ ແຜນການ/ໂຄງການຕ່າງໆໄດ້ສະເໜີໃນການສຶກສາໃນຄັ້ງນີ້.

ຕາຕະລາງ 6.3 ການພັດທະນາການລ້ຽງສັດຄາດໝາຍໃນປີ 2020

| ສັດລ້ຽງ | ປີ 2000 | | ປີ 2020 | |
|---|---|---|---|---|
| | ຈຳນວນໂຕນ | ຜົນຜະລິດ(ໂຕນ) | ຈະນວນໂຕນ | ຜົນຜະລິດໂຕນ |
| ຄວາຍ | 1,028,000 | 16,600 | 1,527,000 | 24,706 |
| ງົວ | 1,145,000 | 16,400 | 3,672,000 | 52,700 |
| ໝູ | 1,325,000 | 27,650 | 2,393,000 | 51,406 |
| ສັດປີລວມ | 15,494,000 | 18,340 | 52,829,000 | 78,167 |
| ຊີ້ນລວມ | | 76,990 | | 204,958 |
| ໄຂ່ | | 10,000 | | 40,793 |
| ນົມ | | 270 | | 1,202 |

ແຫຼ່ງຂໍ້ມູນ: ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້.

(2) ຍຸດທະສາດ ສຳລັບການພັດທະນາການລ້ຽງສັດ.

ຊາວກະສິກອນຂະໜາດນ້ອຍລ້ຽງສັດ ຍັງແມ່ນຜູ້ລ້ຽງສັດສ່ວນໃຫຍ່ທີ່ລ້ຽງສັດຕົ້ນຕໍ. ເພີ່ມຜົນຜະລິດຂອງເຂົາເຈົ້າ, ມາດຕະການຫຼາຍຢ່າງສຳລັບການປັບປຸງຕ້ອງໄດ້ດຳເນີນ: ຮັບປະກັນສຸຂະພາບສັດ; ປັບປຸງການເກືອອາຫານສັດ ແບບພື້ນເມືອງ ແລະ ລະບົບການຄຸ້ມຄອງ; ນຳໃຊ້ນ້ຳໃຕ້ດິນຢ່າງມີປະສິດທິຜົນ; ແນະນຳໃຊ້ພືດອາຫານສັດ; ຮັບປະກັນອາຫານສັດໃນ

ລະດູແລ້ງ; ນຳໃຊ້ເສດເຫຼືອຈາກການປູກຝັງໃຫ້ມີປະສິດທິຜົນ; ປັບປຸງການຄຸ້ມຄອງທົ່ງຫຍ້າທຳມະຊາດ ທີ່ກຳລັງນຳໃຊ້; ແລະ ປັບປຸງແນວພັນສັດ. ສຳລັບການເພີ່ມຜົນຜະລິດຂອງການລ້ຽງສັດຂະໜາດໃຫຍ່, ມາດຕະການການປັບປຸງທີ່ຄືກັນ ກັບການລ້ຽງສັດຂະໜາດນ້ອຍຈະຕ້ອງປັບເຂົ້ານຳໃຊ້ເໝືອນກັນ, ໂດຍສະເພາະເລັ້ງໃສ່ອາຫານທີ່ມີຄຸນນະພາບ ແລະ ປອດໄພ, ການຄຸ້ມຄອງການອານາໄມການລ້ຽງສັດທົ່ວໄປ ແລະ ປັບປຸງຄອກສັດ.

ການຄອບຄອງສັດໃຫຍ່ສະເລ່ຍ (ງົວ/ຄວາຍ) ລ້ຽງເກືອອາຫານໂດຍຊາວກະສິກອນຈະຕ້ອງເພີ່ມຂຶ້ນເຖິງປະມານ 16 ຈາກປັດຈຸບັນ 8 (4.8 ງົວ ແລະ 3.1 ຄວາຍ). ການລ້ຽງສັດນີ້ຈະມີລາຍຮັບອັນດີ ສຳລັບຊາວກະສິກອນລ້ຽງສັດຂະໜາດນ້ອຍດ້ວຍການສົ່ງຂາຍງົວສອງຫາສາມໂຕຕໍ່ປີ. ເພື່ອແກ້ຄວາມຕ້ອງການເພີ່ມຂຶ້ນດ້ານອາຫານສັດ, ທົ່ງຫຍ້າທຳມະຊາດຈະຕ້ອງແບ່ງດິນນຳໃຊ້ອອກເປັນສອງຊະນິດ: ພື້ນທີ່ເກັບກ່ຽວຫຍ້າ ແລະ ເນື້ອທີ່ປ່ອຍໃຫ້ກິນຕາມທຳມະຊາດ. ຫຍ້າຢືນຕົ້ນຈະຕ້ອງໄດ້ເກັບກ່ຽວໃນຊ່ວງໄລຍະທີ່ພໍເໝາະ ແລະ ເກັບມ້ຽນເປັນຫຍ້າບົ່ມສຳລັບລະດູແລ້ງ. ບ່ອນເກັບມ້ຽນ (silo) ເປັນຂຸມຂຸດແບບງ່າຍໆໃນໃຕ້ດິນ ແລະ ມ້ຽນຫຍ້າໄວ້ໃນຂຸມໃຊ້ແຜນຢາງຫໍ່ຫຸ້ມ ແລະ ດິນປົກ. ເສດເຫຼືອຈາກການປູກຝັງເຊັ່ນຕົ້ນເຟືອງ ແມ່ນເກັບຮັກສາຢ່າງເໝາະສົມໂດຍບໍ່ໄດ້ເອົາຈາກທົ່ງນາ. ນອກຈາກນັ້ນ, ພືດອາຫານສັດອື່ນໆກໍ່ຕ້ອງຄ່ອຍໆແນະນຳໃຫ້ໃຊ້ເທື່ອລະເລັກລະນ້ອຍ. ລະບົບອາຫານສັດປະເພດນີ້ຈະເຮັດເພື່ອເພີ່ມຈຳນວນສັດຂຶ້ນ, ປ້ອງກັນການລົດນ້ຳໜັກລະຫວ່າງລະດູແລ້ງ ແລະ ໄດ້ຂາຍໄວກວ່າ, ຜົນສຸດທ້າຍກໍ່ເປັນການປັບປຸງຄຸນນະພາບຂອງຊີ້ນ. ພາຍໃຕ້ລະບົບສັດອາຫານເຫຼົ່ານີ້, ພວກຊາວກະສິກອນລ້ຽງສັດຂະໜາດນ້ອຍຄາດວ່າຈະມີງົວປະມານ 4 ລ້ານຕົວ ແລະ ຄາດໝາຍຄວາຍ 5 ລ້ານໂຕ.

ສຳລັບການລ້ຽງສັດຂະໜາດໃຫຍ່, ບໍລິມາດອາຫານສັດເບື້ອງຕົ້ນຈະຕ້ອງຈຳກັດເຖິງປະມານ 50 ໂຕ ເພື່ອປະຫຍັດມູນຄ່າການລົງທຶນເບື້ອງຕົ້ນ. ເຂົາເຈົ້າອາດປັບປຸງສະຖານທີ່ ແລະ ທົ່ງຫຍ້າທີລະເລັກລະນ້ອຍ, ແລະ ເພີ່ມຈຳນວນໂຕສັດຂຶ້ນ.ຈຳນວນສັດຈະຕ້ອງເພີ່ມຂຶ້ນຄຽງຄູ່ກັບການປຸງອາຫານສັດ ແລະ ເຕັກນິກການຄຸ້ມຄອງສຳລັບເປົ້າໝາຍ 300 ຫາ 500 ໂຕ. ເພື່ອຮັບປະກັນອາຫານສັດໃນລະດູແລ້ງ, ຫຍ້າທີ່ເຕີບຕົວໃນຊ່ວງລະດູຝົນຕ້ອງໄດ້ເກັບມ້ຽນ ແລະ ເກັບຮັກສາໄວ້ໃນຂຸມບົ່ມ. ອາຫານສັດໃນລະດູແລ້ງສ່ວນໃຫຍ່ຈະມາຈາກຫຍ້າບົ່ມ, ແລະ ມາຈາກທົ່ງຫຍ້າເປັນການເພີ່ມເຕີມ. ບ່ອນມ້ຽນຫຍ້າໃນກໍລະນີດັ່ງກ່າວນີ້ຈະເປັນຂຸມຊະນິດຄອນກຣີດ ເພື່ອຄວາມຈຳເປັນຂອງບໍລິມາດອາຫານສັດຂະໜາດໃຫຍ່, ປະສິດທິຜົນໃນການເຮັດວຽກສູງ, ຫຼຸດຜ່ອນການສ້ອມແປງ ແລະ ຄ່າແຮງງານ. ເປົ້າໝາຍໃນຈຳນວນ 5 ລ້ານ ຈະຕ້ອງບັນລຸໄດ້ດ້ວຍລະບົບດັ່ງກ່າວນີ້.

ເປົ້າໝາຍການຜະລິດລວມຂ້າງເທິງລວມທັງຟາມງົວນົມ. ເຖິງແມ່ນ ຄວາມຕ້ອງການຜົນຜະລິດນົມມີຈຳນວນໜ້ອຍໃນປັດຈຸບັນ ແລະ ເກືອບທັງໝົດນຳເຂົ້າມາຈາກໄທ, ຄວາມຕ້ອງການພາຍໃນຄາດວ່າຈະເພີ່ມຂຶ້ນໃນອານາຄົດ. ງົວນົມຈະຕ້ອງເພີ່ມຂຶ້ນໃນນີ້. ຟາມງົວນົມຈະໄດ້ລ້ຽງຕາມເຂດອ້ອມແອ້ມຕົວເມືອງໃຫຍ່ສຳລັບເງື່ອນໄຂການຕະຫລາດ. ໂຮງງານປຸງແຕ່ງນົມຈະຕ້ອງເປັນຂະໜາດນ້ອຍດ້ວຍບໍລິມາດການຜະລິດສາມ ໂຕນຕໍ່ວັນ ທີ່ພຽງພໍກັບຄວາມຕ້ອງການໃນປີ ປະມານ 1.200 ໂຕນ, ແລະ ການປຸງແຕ່ງຜະລິດຕະພັນນົມຕ້ອງຈຳກັດຢູ່ໃນການອະເຊື້ອ ນ້ຳມັນເບີ ແລະ ນົມສົ້ມ.

ສຳລັບໝູ ແລະ ສັດປີກ ຄາດໝາຍຂອງການຜະລິດຈະຕ້ອງບັນລຸໂດຍການລ້ຽງແບບພື້ນເມືອງຂະໜາດນ້ອຍ ກໍຄືການຜະລິດເປັນຈຳນວນຫຼາຍລ້ຽງໃນຂະໜາດໃຫຍ່. ສຳລັບການລ້ຽງແບບພື້ນເມືອງຂະໜາດນ້ອຍ, ຈຳນວນໝູສະເລ່ຍຕໍ່ຟາມມີ 4 ໂຕ ແລະ ຈະເພີ່ມຂຶ້ນເຖິງ 6 ໂຕ, ແລະ ຈຳນວນສັດປີກຈະເພີ່ມຂຶ້ນຈາກ 19 ເຖິງ 60. ຜົນຕາມມາ, ຊາວນາຂະໜາດນ້ອຍຈະລ້ຽງໝູ 2.4 ລ້ານໂຕ ແລະ ສັດປີກ 27 ລ້ານໂຕ: ການລ້ຽງສັດຂະໜາດນີ້ສາມາດເກີດເປັນຈິງແມ້ກະທັ້ງແຮງງານຄອບຄົວ ແລະ ພິຈາລະນາວ່າສາມາດຄຸ້ມຄອງໄດ້ດ້ວຍລະບົບພື້ນເມືອງ. ເຖິງແມ່ນວ່າແນວພັນສັດປີກພື້ນເມືອງແມ່ນ ເໝາະສົມຕໍ່ການລ້ຽງແບບທຳມະຊາດທົ່ວໄປ, ຜົນຜະລິດຈະຕ້ອງໄດ້ປັບປຸງດ້ວຍການຄັດເລືອກພັນ. ການລ້ຽງໝູຂະໜາດໃຫຍ່ຈະຕ້ອງໄດ້ລ້ຽງໃນສະຖານທີ່ທັນສະໃໝ ແລະ ອາຫານທັງໝົດຈະໄດ້ຊື້. ສຳລັບແນວພັນໝູ, ສະຖານນີຂະຫຍາຍພັນ.

ການລ້ຽງໝູແຫ່ງຊາດ ໄດ້ທຳການປະສົມພັນຂ້າມ ສາມສາຍພັນ ດ້ວຍການນຳໃຊ້ແນວພັນທີ່ກ້າວໜ້າ ແລະ ຈຳໜ່າຍເປັນແນວພັນປະສົມເພື່ອການຄ້າ. ຂະໜາດການລ້ຽງໝູ 200 ຫາ 300 ໂຕຕໍ່ຟາມ. ການລ້ຽງສັດປີກຂະໜາດໃຫຍ່ຈະຕ້ອງປະກອບດ້ວຍສະຖານທີ່ທັນສະໃໝ ແລະ ແນວພັນທີ່ດີເລີດ ເໝືອນດັ່ງແນວພັນໝູ ສຳລັບແນວພັນ. ຂະໜາດການລ້ຽງໄກ່ສຳລັບຜະລິດໄຂ່ ໃນອັນດັບ 10,000 ຫາ20,000 ແມ່, ແລະ ລ້ຽງເປັນໄກ່ຊີ້ນແຕ່ 30,000 ຫາ 50,000 ໂຕ. ໃນຊ່ວງໄລຍະຕົ້ນແນວໃດກໍຕາມກໍຄືໄກ່ຈະຈຳກັດ 1,000 ຫາ 2.000, ແລ້ວຄ່ອຍໆເພີ່ມຂຶ້ນກັບການປັບປຸງລະດັບເຕັກໂນໂລຊີ ຜົນທີ່ຕາມມາຄືໄກ່ 26 ລ້ານໂຕ, ຄືປະມານເຄິ່ງນຶ່ງຂອງຄາດໝາຍໃນປີ 2020, ລ້ຽງດ້ວຍຟາມຂະໜາດໃຫຍ່ ຈຸດປະສົງຫຼັກຂອງການລ້ຽງໝູ ແລະ ສັດປີກຂະໜາດໃຫຍ່ ແມ່ນເພື່ອສະໜອງຜົນຜະລິດ ໃຫ້ແກ່ຊຸມຊົນທີ່ອາໃສຢູ່ຕາມຕົວເມືອງໃຫຍ່.ຍ້ອນແນວນັ້ນ, ຈຶ່ງສາມາດຕັດສິນໄດ້ວ່າສະຖານທີ່ລ້ຽງຈຶ່ງໃຫ້ຕັ້ງຢູ່ໃກ້ຕົວເມືອງ. ມັນເປັນສິ່ງສຳຄັນທີ່ຈະຕ້ອງຮັບການພິຈາລະນາຕໍ່ມາດຕະການດ້ານສິ່ງ

ແວດລ້ອມ ເພື່ອປ້ອງກັນກິ່ນເໝັນ, ສຽງດັງ, ແລະ ນ້ຳເປື້ອນ. ໃນການເຮັດການຜະລິດແບບກະເສດສຸມ, ມັນຈຶ່ງຈຳເປັນເພື່ອໃນການສ້າງໂຮງງານປຸງແຕ່ງເພື່ອຕອບຮັບຄວາມຕ້ອງການຂອງຕົວເມືອງ.

(3) ຂັ້ນຕອນໃນການປະຕິບັດ

ຜູ້ທຳການຜະລິດຕົ້ນຕໍ ແມ່ນ ຊາວກະສິກອນ ແລະ ບໍລິສັດທຸລະກິດ. ລັດຖະບານຕ້ອງໄດ້ສະໜັບສະໜູນເຂົາເຈົ້າດ້ວຍການແກ້ໄຂ ເຕັກນິກໃນປັດຈຸບັນ ແລະ ຂໍ້ຈຳກັດດ້ານສະຖາບັນການຈັດຕັ້ງ ແລະ ອຳນວຍຄວາມສະດວກດ້ານເຕັກໂນໂລຊີເພື່ອຊຸກຍູ້ຜົນຜະລິດຂອງສັດລ້ຽງ. ບົດບາດຂອງລັດຖະບານດັ່ງກ່າວນີ້ ແລະ ໂຄງການທີ່ໄດ້ສະເໜີແມ່ນ ກ່າວໄວ້ໃນລຸ່ມນີ້.

(a) ສຸກຂະພາບສັດ, ສຸກຂະອະນາໄມຜົນຜະລິດສັດ ແລະ ການຄວບຄຸມພະຍາດ.

ການສ້າງຄວາມເຂັ້ມແຂງໃນການຄວບຄຸມສຸກຂະພາບສັດ ແມ່ນ ເປັນບັນຫາອັນຮີບດ່ວນ. ບັນຫາດັ່ງກ່າວນີ້ລວມມີທັງການສ້າງກົດໝາຍ ແລະ ຂໍ້ກຳນົດກົດລະບຽບການກວດກາສຸຂະພາບສັດ, ສ້າງລະບົບຂ່າວສານສຳລັບຂໍ້ມູນ ຂອງສຸກຂະອານາໄມສັດລ້ຽງ, ສ້າງຕັ້ງຫ້ອງທົດລອງບົ່ງມັດຕິພະຍາດ, ແລະ ສ້າງຄວາມເຂັ້ມແຂງ/ສ້າງສະຖານບັນໄດ້ຮັບປະກັນແກ່ການສົ່ງອອກ ແລະ ນຳເຂົ້າ. ນັບແຕ່ປີ 1998, ກິດຈະກຳເຫຼົ່ານີ້ ສ່ວນໃຫຍ່ໄດ້ຮັບການຈັດຕັ້ງປະຕິບັດໃນເຂດພາກເໜືອໃນການຊ່ວຍເຫຼືອຈາກ EU. ແຕ່ວ່າໂຄງການນີ້ຈະໝົດລົງໃນປີ 2004, ຈຶ່ງໄດ້ຕັດສິນໃຈສືບຕໍ່ກິດຈະກຳທີ່ຄືກັນນີ້ຕໍ່ຈາກປີ 2004 ໃຫ້ກວມເອົາທົ່ວປະເທດ. ນອກຈາກນັ້ນຍັງຕ້ອງການຄວາມເຂັ້ມແຂງການຄົ້ນຄ້ວາພື້ນຖານດ້ານສຸກຂະພາບສັດ ດ້ວຍການປັບປຸງສູນສຸກຂະພາບອະນາໄມສັດແຫ່ງຊາດທີ່ມີແລ້ວ ດ້ວຍການສ້າງຫ້ອງທົດລອງຢາວັກແຊງສັດ ແລະ ຫ້ອງວິໃຈພະຍາດຕິດຕໍ່. ມີບາງໂຄງການເຊັ່ນ ການຮັບປະກັນສັດຈະຕ້ອງໄດ້ດຳເນີນດ້ວຍການຮ່ວມມື ກັບປະເທດໃກ້ຄຽງຊຶ່ງເປັນບັນຫາພົວພັນກັນໃນເຂດພາກພື້ນ.

ເພື່ອປະຕິບັດຕາມຄວາມຮຽກຮ້ອງຕ້ອງການເຫຼົ່ານີ້, ໂຄງການ ແລະ ແຜນການດັ່ງລຸ່ມນີ້ ໄດ້ສະເໜີໂຄງການເປັນບູລິມະສິດນຶ່ງທີ່ຈະເຮັດກ່ອນປີ 2010:

1)" ສ້າງຄວາມເຂັ້ມແຂງກິດຈະກຳການສົ່ງເສີມ ແລະ ບໍລິການ ການລ້ຽງສັດ", ກຳລັງຈັດ ຕັ້ງປະຕິ ບັດດ້ວຍການຊ່ວຍເຫຼືອຈາກ EU ຈົນເຖິງປີ 2004;

2)" ປັບປຸງສຸຂະພາບສັດ" ເຮັດຕາມໂຄງການທີ່ໄດ້ຊ່ວຍເຫຼືອຈາກ EU ຈາກປີ 2004 ໃຫ້ກວມທົ່ວປະເທດ;

3)" ປັບປຸງສູນສຸຂະພາບສັດ ແຫ່ງຊາດ"; ແລະ

4)" ໂຄງການຊຸກຍູ້ຄວບຄຸມພະຍາດສັດ ໃນພາກພື້ນອິນດູຈີນ".

(b) **ຍົກລະດັບຜະລິດຕະພັນສັດ.**

ການຍົກລະດັບດັ່ງກ່າວ ແມ່ນເພື່ອເພີ່ມຜົນຜະລິດສັດ ດ້ວຍການແນະນຳໃຫ້ນຳໃຊ້ແນວພັນທີດລອງປັບເຂົ້າສະພາບ, ສ້າງການປັບປຸງສັດ ແລະ ເພີ່ມລະບົບ ສ້າງລະບົບການຈັດການລ້ຽງສັດ, ແລະ ສົ່ງເສີມເຕັກໂນໂລຊີປະສົມພັນທຽມ. ມີຄວາມຕັ້ງໃຈເພື່ອພັດທະນາ ການປັບເຕັກໂນໂລຊີຂອງພາກພື້ນສຳລັບງົວຊີ້ນ ແລະ ງົວນົມ, ທີ່ທັງສອງຢ່າງຈະເພີ່ມຂຶ້ນຢ່າງໄວວາ ແລະ ເຕັກໂນໂລຊີເຫຼົ່ານີ້ ຈະຕ້ອງໄດ້ຂະຫຍາຍແກ່ຊາວນາກະສິກອນ ດ້ວຍການທຳການຝຶກອົບຮົມ ກັບພະນັກງານລັດ ແລະ ຊາວກະສິກອນ. ນອກຈາກນັ້ນຍັງຕົກລົງແນະນຳໃຫ້ນຳໃຊ້ລະບົບປະກັນໄພການລ້ຽງສັດ ເພື່ອຊົດໃຊ້ສຳລັບການເສຍຫາຍທີ່ເກີດຂຶ້ນຈາກການເກີດເຫດຂອງສັດລ້ຽງ, ພະຍາດ ແລະ ການຂ້າສັດທີ່ຕິດພະຍາດ, ຜົນສຸດທ້າຍ ກໍປ້ອງກັນການຂະຫຍາຍພະຍາດຕິດແປດໄດ້.

ເພື່ອປະຕິບັດຕາມຄວາມຮຽກຮ້ອງຕ້ອງການເຫຼົ່ານີ້, ໂຄງການບຸລິມະສິດໃນຫົວຂໍ້ 4 ຊຸກຍູ້ການຜະລິດສັດທີ່ໄດ້ສະເໜີ. ໂຄງການຈະຕ້ອງຕາມດ້ວຍ 3 ແຜນການ ແລະ ໂຄງການທີ່ຈະຕ້ອງໄດ້ປະຕິບັດຕໍ່ຈາກປີ 2010, ຄື:

1) "ຊ່ວຍເຫຼືອການປັບປຸງສັດ ແລະ ລະບົບຂະຫຍາຍພັນ".

2) "ແນະນຳໃຫ້ນຳໃຊ້ລະບົບປະກັນໄພສັດ", ແລະ

3) "ສ້າງຄວາມເຂັ້ມແຂງ ສູນປັບປຸງງົວຊີ້ນ ແລະ ງົວນົມ"

(c) ການຜະລິດອາຫານສັດ.

ເພື່ອຮັບມືກັບການເພີ່ມຂຶ້ນຂອງຈຳນວນສັດລ້ຽງ, ຜົນຜະລິດອາຫານສັດກໍຕ້ອງໄດ້ເພີ່ມຂຶ້ນ. ການຄົ້ນຄ້ວາ ແລະ ການພັດທະນາລະດັບອັນກ້ວາງຂວາງ ແມ່ນມີຄວາມຕ້ອງການ ໃນກໍລະນີ: ຄົ້ນຄ້ວານຳໃຊ້ສຳລັບພືດອາຫານສັດໃໝ່, ພັດທະນາເຕັກໂນໂລຊີການປຸງແຕ່ງຫຼັງເກັບກ່ຽວ (ຕາກ ຫຼື ອົບແຫ້ງ ແລະ ເກັບມ້ຽນ) ຂອງພືດອາຫານສັດ, ສ້າງຕັ້ງຟາມສາທິດພືດອາຫານສັດ, ແລະ ພັດທະນາເຕັກໂນໂລຊີ ສຳລັບນຳໃຊ້ທົ່ງຫຍ້າແບບຍືນນານ. ກິດຈະກຳເຫຼົ່ານີ້ຈະໄດ້ຮັບການດຳເນີນ ໂດຍໂຄງການບຸລິມະສິດທີ່ໄດ້ສະເໜີຂ້າງເທິງ ໃນຫົວຂໍ້ "ຊຸກຍູ້ສະ

ເພື່ອຮັບມືກັບການເພີ່ມຂຶ້ນຂອງຈຳນວນສັດລ້ຽງ, ຜົນຜະລິດອາຫານສັດກໍຕ້ອງໄດ້ເພີ່ມຂຶ້ນ. ການຄົ້ນຄ້ວາ ແລະ ການພັດທະນາລະດັບອັນກ້ວາງຂວາງ ແມ່ນມີຄວາມຕ້ອງການ ໃນກໍລະນີ: ຄົ້ນຄ້ວານຳໃຊ້ສຳລັບພືດອາຫານສັດໃໝ່, ພັດທະນາເຕັກໂນໂລຊີການປຸງແຕ່ງຫຼັງເກັບກ່ຽວ (ຕາກ ຫຼື ອົບແຫ້ງ ແລະ ເກັບມ້ຽນ) ຂອງພືດອາຫານສັດ, ສ້າງຕັ້ງຟາມສາທິດພືດອາຫານສັດ, ແລະ ພັດທະນາເຕັກໂນໂລຊີ ສຳລັບນຳໃຊ້ທົ່ງຫຍ້າແບບຍືນນານ. ກິດຈະກຳເຫຼົ່ານີ້ຈະໄດ້ຮັບການດຳເນີນ ໂດຍໂຄງການບຸລິມະສິດທີ່ໄດ້ສະເໜີຂ້າງເທິງ ໃນຫົວຂໍ້ "ຊຸກຍູ້ສະໜັບສະໜູນຜົນຜະລິດສັດລ້ຽງ", ຕາມດ້ວຍ "ໂຄງການຄົ້ນຄ້ວາຜະລິດພືດອາຫານສັດ" ແລະ ນຳໃຊ້ທົ່ງຫຍ້າແບບຍືນນານໃນຊຸມປີ 2010.

(4) ຄາດຄະເນຜົນທີ່ຈະໄດ້ຮັບ ຂອງຜົນຜະລິດສັດ.

ຜົນປະໂຫຍດທີ່ຈະໄດ້ຮັບຈາກການພັດທະນາການລ້ຽງສັດ ແມ່ນມີລະດັບອັນກ້ວາງຂວາງທີ່ຄາດເອົາໄວ້ມີຄືດັ່ງລຸ່ມນີ້

(a) ຊຸກຍູ້ຜົນຜະລິດສັດ.

ນຶ່ງໃນຫົວຂໍ້ຫຼັກ ຂອງການພັດທະນາການລ້ຽງສັດແມ່ນການຄວບຄຸມນະພາບສັດ; ວຽກດັ່ງກ່າວນີ້ ຈະສຳເລັດໄດ້ດ້ວຍການສະໜອງຢາວັກແຊງຢ່າງພຽງພໍ,ລະດັບການບົ່ງມະຕິພະຍາດສູງ, ເພີ່ມພະນັກງານສັດຕະວະແພດ, ແລະ ປ້ອງກັນພະຍາດລະບາດ. ການຜະລິດສັດຈະສືບຕໍ່ຊຸກຍູ້ດ້ວຍການປັບປຸງຄຸນນະພາບອາຫານສັດ ແລະ ຄຸນນະພາບຕາມມູນຄ່າການຜະລິດອັນເໝາະສົມ ແລະ ການດັດປັບເຕັກໂນໂລຊີຂອງຊາດ.

(b) ເພີ່ມລາຍຮັບຂອງຊາວນາ

ຜູ້ຜະລິດສັດຕົ້ນຕໍສ່ວນໃຫຍ່ ແມ່ນຊາວກະສິກອນລ້ຽງສັດຂະໜາດນ້ອຍ ອາດວ່າອັດຕາສ່ວນກວມເອົາປະມານ 80% ຂອງການຜະລິດງົວທັງໝົດໃນປີ 2020. ເປົ້າໝາຍຂອງໂຄງການ ແລະ ແຜນການທັງໝົດ ຊາວນາເຫຼົ່ານີ້ເພື່ອເຮັດໃຫ້ເຂົາເຈົ້າສາມາດຜະລິດສັດຫຼາຍຂຶ້ນດ້ວຍການສົ່ງເສີມການຄວບຄຸມສຸຂະພາບສັດ ແລະ ເຕັກໂນໂລຊີໄດ້ດັດແກ້. ໃນເມື່ອມີຄວາມຕ້ອງການພາຍໃນ ແລະ ສາກົນແນ່ນອນຈະເພີ່ມຂຶ້ນ, ຈະຊ່ວຍເຮັດໃຫ້ມີລາຍຮັບດີສຳລັບຊາວກະສິກອນສັດລ້ຽງ ແລະ ສົ່ງເສີມອຸດສາຫະກຳການປຸງແຕ່ງຊີ້ນນະບົດ.

(c) ການສ້າງຄວາມສາມາດ ແລະ ພັດທະນາຊັບພະຍາກອນມະນຸດ

(d) ການມີສະຖຽນລະພາບຂອງເສດຖະກິດມະຫາພາກດ້ວຍການເພີ່ມລາຍຮັບເງິນຕາຕ່າງປະເທດ. ການປັບປຸງສະຖາບັນການຈັດຕັ້ງ ຈະເຮັດໃຫ້ການຄ້າສັດເປັນປົກກະຕິກັບປະເທດໃກ້ຄຽງຈາກການສົ່ງອອກບໍ່ເປັນທາງການໃນປັດຈຸບັນ, ຄຽງຄູ່ໄປກັບການປັບປຸງຄຸນນະພາບຂອງຜົນຜະລິດສັດ ພາຍໃຕ້ໂຄງການ ແລະ ແຜນການທີ່ໄດ້ສະເໜີ. ວຽກນີ້ຈະເປັນຜົນໃນການປັບປຸງເສດຖະກິດມະຫາພາກຂອງ ສປປລາວ ຍ້ອນການເພີ່ມລາຍຮັບເງິນຕາຕ່າງປະເທດ.

(e). ສະພາບ ສຸຂະພາບ ອານາໄມ ແຫ່ງຊາດໄດ້ຖືກປັບປຸງ.
ການຄຸ້ມຄອງສຸກຂະພາບ ແລະ ອານາໄມສັດແບບເຄັ່ງຄັດ ຈະຮັກສາລະດັບສຸຂະພາບຂອງປວງຊົນທົ່ງຊາດໃດ້ດີຂຶ້ນຕາມມາດຖານ. ຄຸນນະພາບຂອງຜະລິດຕະພັນ ຈາກສັດທີ່ດີຂຶ້ນ ຈະມາມາດ ຫລຸດຜ່ອນການບໍລິໂພກ ອາຫານທີ່ນຳເຂົ້າມາຈາກຕ່າງປະເທດ.

### 6.6.2 ການປະມົງ.

(1) ຈຸດປະສົງຂອງການພັດທະນາການປະມົງ.
ປະລິມານປາທີ່ ຈັບໄດ້ຕາມລຳແມ່ນ້ຳຂອງ ແລະ ສາຂາຂອງມັນລົດລົງເລື້ອຍໆ ໃນແຕ່ລະປີ. ເພື່ອຮອງຮັບການບໍລິໂພກ ພາຍໃນເພີ່ມຂຶ້ນໃນອະນາຄົດ, ການລ້ຽງປາ-ພືດນ້ຳ ຕ້ອງສົ່ງເສີມໃຫ້ກ້ວາງຂວາງ. ປັດຈຸບັນ 90% ຂອງການລ້ຽງປາດຳເນີນໂດຍຊາວຕູ້ລ້ຽງປາຂະໜາດນ້ອຍ ສຳລັບບໍລິໂພກດ້ວຍຕົນເອງ ທີ່ມີຜົນຜະລິດຕ່ຳ. ອີກດ້ານນຶ່ງການລ້ຽງປາ ແບບທຸລະກິດ ສະໜອງໃຫ້ແກ່ຕົວເມືອງ, ແຕ່ວ່າການລ້ຽງປາຊະນິດນີ້ມີຂໍ້ຈຳກັດເໝືອນກັນ; ຜົນຜະລິດຕ່ຳ ແລະ ເຕັກໂນໂລຊີຕ່ຳ.

ການລ້ຽງສັດນ້ຳມີຈຸດປະສົງ ຫຼາຍລະດັບຢ່າງກ້ວາງຂວາງ. ໃນເຂດຊົນນະບົດ, ແມ່ນຮັບປະກັນທາດຊີ້ນສັດ, ແລະ ເຮັດໃຫ້ຊາວກະສິກອນມີໂອກາດສ້າງລາຍຮັບດ້ວຍການຂາຍຜົນຜະລິດປາສ່ວນເກີນ. ການລ້ຽງສັດນ້ຳໃນຕົວເມືອງມີບົດບາດສະໜອງທາດຊີ້ນສັດ ໃຫ້ແກ່ຄົນທີ່ອາໃສຢູ່ຕົວເມືອງ.

ເປົ້າໝາຍການຜະລິດຮອດປີ 2020 ແມ່ນຢູ່ບົນພື້ນຖານຕົວເລກທີ່ໄດ້ສະເໜີຈາກກົມລ້ຽງສັດ ແລະ ການປະມົງ ໂດຍອີງຕາມວິໄສທັດຂອງກະຊວງກະສິກຳ ແລະ ປ່າໄມ້ ສະແດງໃຫ້ເຫັນໃນຕາຕະລາງ 6.4 ຕົວເລກດັ່ງກ່າວນີ້ແມ່ນສ້າງຂຶ້ນຕາມເງື່ອນໄຂປັດຈຸບັນມາພິຈາລະນາ ແລະ ສາມາດບັນລຸໄດ້ດ້ວຍການປະຕິບັດມາດຕະການ ການປັບປຸງ ແລະ ແຜນການ/ໂຄງການ ທີ່ໄດ້ສະເໜີໃນການສຶກສາຄັ້ງນີ້.

ຕາຕະລາງ 6.4 ການລ້ຽງປາ ແລະ ອັດຕາການເພີ່ມ.

| ລາຍລະອຽດ. | 2000 | 2020 | ອັດຕາເພີ່ມ |
|---|---|---|---|
| ຜະລິດລູກປາ (ຈຳນວນລ້ານໂຕ) | 140 | 800 | 571% |
| (ຂອງລັດ) | (42) | (70) | 167% |
| (ຂອງເອກະຊົນ) | (98) | (730) | 745% |
| ການຜະລິດປາ (000 ໂຕນ) | 52 | 189 | 363% |
| (ປາທຳມະຊາດ) | (28) | (28) | 100% |
| (ປາລ້ຽງ) | (24) | (14) | 671% |

ແຫຼ່ງຂໍ້ມູນ: ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້.

(2) **ຍຸດທະສາດສຳລັບການພັດທະນາການປະມົງ.**

ຜົນຜະລິດປາ ຈາກການລ້ຽງຈະຢູ່ໃນບົນພື້ນຖານສອງຊະນິດ; ການລ້ຽງຂະໜາດນ້ອຍຢູ່ຊົນນະບົດ ແລະ ການລ້ຽງແບບກະເສດສຸມຢູ່ຕາມຕົວເມືອງ. ເປົ້າໝາຍການຜະລິດ 161,000 ໂຕນ ຈະຕ້ອງໄດ້ແບ່ງການລ້ຽງ ໂດຍເຂດຊົນນະບົດ ແລະ ຕົວເມືອງດ້ວຍສັດສ່ວນຂອງຈຳນວນ; 8% ຂອງເປົ້າໝາຍການຜະລິດ (128.000 ໂຕນ) ແມ່ນມາຈາກເຂດ, ຊົນນະບົດ, ແລະ 20% (33,000 ໂຕນ) ແມ່ນມາຈາກການລ້ຽງແບບກະເສດສຸມຢູ່ຕົວເມືອງ. ເນື້ອທີ່ຕາມລຳແມ່ນ້ຳ ຄາດຄະເນ 800,000 ເຮັກຕາ ໃນປີ 1998, ປະກອບດ້ວຍປະມານ 260,000 ເຮັກຕາ ຕາມລຳແມ່ນ້ຳຂອງ ແລະ ສາຂາຂອງມັນ ແລະ 540,000 ເຮັກຕາ ປະກອບດ້ວຍອ່າງຮັ່ງນ້ຳ (27,000 ເຮັກຕາ), ສະລ້ຽງປາ (14,000 ເຮັກຕາ). ທ່າແຮງທາງດ້ານລຳນ້ຳເຫຼົ່ານີ້ຈະໄດ້ຮັບການຄຸດຄົ້ນຢ່າງເຕັມສ່ວນສຳລັບການລ້ຽງສັດນ້ຳຮອດປີ 2020 ແລະ ຄາດຫວັງຜົນຜະລິດຈາກລຳນ້ຳເຫຼົ່ານີ້ຈະໄດ້ຮັບການປະເມີນ; 33,000 ລ້ານໂຕນ ຈາກສະລ້ຽງປາດ້ວຍການເພີ່ມຂຶ້ນຈາກ 23,000 ເຮັກຕາ ໃນປັດຈຸບັນ ເປັນ 14,000 ເຮັກຕາ, 60,000 ໂຕນຈາກອ່າງຕ່າງໆ, 20,000ໂຕນຈາກການລ້ຽງປາກະຊັງຕາມລຳແມ່ນ້ຳ, ແລະ 84,000 ໂຕນຈາກການລ້ຽງປາຕາມເຂດຊົນນະບົດ.

ການຜະລິດລູກປາແບບການຄ້າຈະເພີ່ມຂຶ້ນເປັນປະມານ 6 ເທື່ອຈາກປັດຈຸບັນເປັນ 140 ລ້ານ ເປັນ 8 ລ້ານໂຕ ໃນປີ 2020. ໃນຊ່ວງໄລຍະດຽວກັນນີ້, ອັດຕາລອດພົ້ນຈາກການຕາຍຂອງລູກປາເພື່ອການຄ້າ 15% ຈະເພີ່ມຂຶ້ນເຖິງ 40 ຫາ 50% ດ້ວຍການປັບປຸງເຕັກໂນໂລຊີການຜະລິດ. ໃນຈຳນວນລູກປາ (ປານ້ອຍ) 800 ລ້ານໂຕນັ້ນ, 70 ລ້ານໂຕຈະໄດ້

ຜະລິດຢູ່ໜອງປາອານຸບານ 30 ແຫ່ງຂອງລັດ ແລະ 730 ລ້ານໂຕຈະຜະລິດໂດຍໜອງປາອານຸບານຂອງເອກະຊົນ.

ເຖິງຢ່າງໃດກໍ່ຕາມການລ້ຽງປາທັງຢູ່ໃນຊົນນະບົດ ແລະ ຕົວເມືອງ ມີຂໍ້ຈຳກັດ ໃນການເພີ່ມຜົນຜະລິດອັນດຽວກັນ, ແລະ ມີມາດຕະການຫຼາຍຢ່າງ ໃນການປັບປຸງທີ່ຈະຕ້ອງໄດ້ດຳເນີນການ. ເພີ່ມອັດຕາລອດຕາຍຂອງປານ້ອຍ; ນຳໃຊ້ແຫຼ່ງນ້ຳອັເໝາະສົມ; ຟື້ນຟູໜອງປາດ້ວຍການເໝາະສົມ; ສະໜອງອາຫານປາຢ່າງພຽງພໍເກືອອາຫານປະສົມກັບການລ້ຽງສັດນ້ອຍ; ແລະ ຊຸກຍູ້ສົ່ງເສີມການໃຫ້ອາຫານໃນລະດູແລ້ງດ້ວຍການຮັບປະກັນແຫຼ່ງນ້ຳ.

## (3) ຂັ້ນຕອນໃນການຈັດຕັ້ງປະຕິບັດ

ບການພັດທະນາການລ້ຽງສັດກໍ່ເໝືອນກັນ, ລັດຖະບານຕ້ອງສະໜັບສະໜູນຜູ້ຜະລິດປາດ້ວຍຮູບການແກ້ໄຂເຕັກໂນໂລຊີ ດ້ວຍແກ້ໄຂຂໍ້ຈຳກັດ ດ້ານເຕັກນິກ ແລີ ສະຖານບັນການຈັດຕັ້ງແລະ ອຳນວຍຄວາມສະດວກດ້ວຍເຕັກໂນໂລຊີ ເພື່ອຊຸກຍູ້ການຜະລິດໂດຍທົ່ວໄປ. ມີສາມໂຄງການໄດ້ສ້າງຂຶ້ນເພື່ອປະຕິບັດການຊຸກຍູ້ຄວາມຕ້ອງການດັ່ງກ່າວດັ່ງລຸ່ມນີ້.

(a) ການປັບປຸງດ້ວຍການລ້ຽງສັດນ້ຳ ແລະ ໂຄງການການສົ່ງເສີມ

ໂຄງການນີ້ມີຈຸດປະສົງເພື່ອປັບປຸງ ແລະ ສົ່ງເສີມເຕັກໂນໂລຊີການລ້ຽງ ສຳລັບຊຸກຍູ້ການຜະລິດ. ໂຄງການໄດ້ເລີ່ມຕົ້ນໃນເດືອນ ກຸມພາ 2001 ດ້ວຍການຊ່ວຍເຫຼືອດ້ານວິຊາການຈາກ JICA ເປັນໂຄງການທີ່ມີກຳນົດ ສາມປີ. ໂຄງການນີ້ມີການສ້າງສູນລ້ຽງປານ້ຳຊ່ວງວຽງຈັນ, ກະກຽມແຜນການຝຶກອົບຮົມ ແລະ ສົ່ງເສີມເຕັກໂນໂລຊີການລ້ຽງ, ການຜະລິດແນວພັນ, ແລະ ທົດລອງການລ້ຽງ ແລະ ຂະຫຍາຍພັນ. ຫຼັງປີ 2004, ຈະໄດ້ຕົກລົງສືບຕໍ່ໂຄງການຊ່ວງໄລຍະທີສອງ ເພື່ອສືບຕໍ່ ສ້າງຄວາມເຂັ້ມແຂງໃນການປັບປຸງເຕັກໂນໂລຊີການລ້ຽງ. ໂຄງການຊ່ວງໄລຍະທີສອງລວມມີການຜະລິດລູກປາ ປັບປຸງພັນປາເປົ້າໝາຍ (tilapia ແລະ Common carp, Puntinus Catfish), ສ້າງລະບົບການລ້ຽງປາ.

(b) ໂຄງການຟື້ນຟູສູນ ແລະ ຂະຫຍາຍແນວພັນປາ

ໂຄງການນີ້ແມ່ນ ເພື່ອສ້າງ ຫຼື ຟື້ນຟູສູນ ລ້ຽງປາໃນ ແຂວງທີ່ໄດ້ຄັດເລືອກ, ແລະເພື່ອພັດທະນາຄວາມອາດສາມາດ ຂອງພະນັກງານສຳລັບການປັບປຸງເຕັກໂນໂລຊີ ແລະ ກິດຈະກຳການສົ່ງເສີມໃນພາກສະໜາມຂອງການລ້ຽງປາ. ອົງປະກອບຫຼັກແມ່ນ ເພື່ອທົດລອງການ

ການລ້ຽງ. ໂຄງການຊ່ວງໄລຍະທີສອງລວມມີການຜະລິດລູກປາ ປັບປຸງພັນປາເປົ້າໝາຍ (tilapia ແລະ Common carp, Puntinus Catfish), ສ້າງລະບົບການລ້ຽງປາ.

(b) ໂຄງການຟື້ນຟູສູນ ແລະ ຂະຫຍາຍແນວພັນປາ

ໂຄງການນີ້ແມ່ນ ເພື່ອສ້າງ ຫຼື ຟື້ນຟູສູນ ລ້ຽງປາໃນ ແຂວງທີ່ໄດ້ຄັດເລືອກ, ແລະເພື່ອພັດທະນາຄວາມອາດສາມາດ ຂອງພະນັກງານສຳລັບການປັບປຸງເຕັກໂນໂລຊີ ແລະ ກິດຈະກຳການສົ່ງເສີມໃນພາກສະໜາມຂອງການລ້ຽງປາ. ອົງປະກອບຫຼັກແມ່ນ ເພື່ອທົດລອງການຜະລິດແນວພັນ ແລະ ເຕັກນິກການລ້ຽງສັດນ້ຳ ແລະ ຂະຫຍາຍແນວພັນ ແລະ ເຕັກໂນໂລຊີທີ່ໄດ້ຄັດເລືອກ.

(c) ໂຄງການພັດທະນາການລ້ຽງປາໃນຊົນນະບົດ

ໂຄງການນີ້ແມ່ນ ພັດທະນາການລ້ຽງປາໃນເຂດພື້ນທີ່ຂອງ 12 ແຂວງທີ່ໄດ້ຄັດເລືອກຈາກການຈັດຫາດ້ານເຕັກໂນໂລຊີ, ອຸປະກອນ ແລະ ຝຶກອົບຮົມ ແລະ ທຶນອັນເໝາະສົມສຳລັບຜູ້ລົງທຶນ ແລະ ຊຸມຊົນຊາວກະສິກອນຊົນນະບົດ. ການລ້ຽງປາຫຼາຍແບບ ແມ່ນ ຈະໄດ້ຖືກສົ່ງເສີມ; ມີຄືລ້ຽງໃນສະ/ອ່າງຂັງນ້ຳ, ລ້ຽງປາປະສົມປະສານໃນນາເຂົ້າ, ລ້ຽງປາໃນກະຊັງ ແລະ ລ້ຽງປາປະສົມປະສານກັບການລ້ຽງສັດ. ໂຄງການນີ້ຈະມີທັງສິນເຊື່ອຂະໜາດນ້ອຍເພື່ອຜູ້ລ້ຽງປາ ໂດຍຜ່ານທຶນໝູນວຽນ ແລະ ພັດທະນາໂຮງງານອາຫານລ້ຽງປາຂະໜາດນ້ອຍ.

ການຜະລິດປາດ້ວຍການລ້ຽງໄດ້ເຕີບໂຕຢ່າງວ່ອງໄວໃນທົ່ວປະເທດ ໂດຍສະເພາະໃນເຂດຊົນນະບົດທົ່ວປະເທດ, ເປັນທີນທາງເພື່ອລາຍຮັບໄວທີ່ສຸດໃຫ້ເຂົ້າສູ່ຊົນນະບົດ ແລະ ເປັນແຫຼ່ງໂປຼຕີນສັດທີ່ດີ. ເຖິງຢ່າງໃດກໍຕາມຜົນຜະລິດ ແລະ ເຕັກນິກຍັງຕ່ຳຫຼາຍ, ແລະ ຍິ່ງໄປກ່ວານັ້ນ ບໍ່ມີສະຖິຕິທີ່ສະແດງໃຫ້ເຫັນ ເງື່ອນໄຂການລ້ຽງປາ ແລະ ອຸດສາຫະກຳທີ່ກ່ຽວຂ້ອງໃນທົ່ວປະເທດ. ຍ້ອນແນວນັ້ນສາມ ໂຄງການທັງໝົດ, ຮວມທັງໂຄງການຊ່ວຍເຫຼືອ JICA ທີ່ກຳລັງດຳເນີນຢູ່, ຈະໄດ້ເລີ່ມກ່ອນປີ 2010.

(4) **ຄາດຄະເນໃນຜົນທີ່ໄດ້ຮັບຂອງການພັດທະນາການລ້ຽງປາ**

ຜົນກຳໄລ ເກືອບຄືກັນ ກັບການພັດທະນາການລ້ຽງສັດທັງໝົດ ທີ່ໄດ້ຄາດຄະເນຈາກການພັດທະນາການປະມົງ. ມີຄື: ເພີ່ມຜົນຜະລິດປາ, ເພີ່ມລາຍຮັບແກ່ຊາວກະສິກອນ; ສ້າງຄວາມອາດສາມາດ ແລະ ພັດທະນາຊັບພະຍາກອນມະນຸດ, ແລະ ປັບປຸງສຸກຂະພາບຂອງ

ຊາດ. ເພີ່ມລາຍຮັບໃຫ້ແກ່ຊຸມນະບົດໂດຍສະເພາະ ທີ່ໄດ້ສະແດງໄວ້ໃນຜົນທີ່ໄດ້ຮັບຂອງໂຄງການ, ປະກອບສ່ວນສ້າງຫຼຸດຜ່ອນຄວາມທຸກຈົນເຂດຊຸມນະບົດ.

6.7 ການຫຼຸດຜ່ອນການຖາງປ່າເຮັດໄຮ່ ດ້ວຍການເຮັດກະເສດ-ປ່າໄມ້ ປະສົມປະສານ, ເຄື່ອງປ່າຂອງດົງ ແລະ ກິດຈະກຳຕ່າງໆພົວພັນກັບການດຳລົງຊີວິດ.

(1) ຈຸດປະສົງການພັດທະນາ

ການເຮັດໄຮ່ ແມ່ນ ລະບົບສ່ວນນຶ່ງຂອງການຄຸ້ມຄອງການດຳລົງຊີວິດຢ່າງຄົບຊຸດ ພັດທະນາຂຶ້ນໂດຍຊຸມຊົນເຂດເນີນສູງ ໃນເຂດພື້ນທີ່ພູດອຍ. ລະບົບການດຳລົງຊີວິດແບບພື້ນເມືອງເຫຼົ່ານີ້ ແມ່ນຂຶ້ນກັບການຄຸ້ມຄອງ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດຢ່າງໜັກໜ່ວງໃນຫຼາຍລະດັບ ຊຶ່ງໄດ້ບັນລະຍາຍໄວ້ໃນພາກຍ່ອຍ 3.2.7 ການປ່ຽນແປງເກີດຂຶ້ນໄດ້ດ້ວຍການຍົກຍ້າຍ, ການເພີ່ມຂຶ້ນຂອງພົນລະເມືອງ, ເພີ່ມການຄວບຄຸມເຂົ້າຫາດິນ, ປ່າໄມ້ ແລະ ໂອກາດໜ້ອຍສຳລັບການຄ້າ ແລະ ການເຂົ້າຫາການຜະລິດສິນຄ້າ.

ອີງຕາມສະຖິຕິຂອງລັດຖະບານໃນປີ 1995, ມີປະມານ 198,868 ຄອບຄົວ ໄດ້ທຳການເຮັດໄຮ່ເລື່ອນລອຍ ມີເນື້ອທີ່ທຳການປູກຝັງ 192.258 ເຮັກຕາ. ໃນປີ 1998 ຈຳນວນຄອບຄົວໄດ້ລຸດລົງເຖິງ 140,800 ດ້ວຍເນື້ອທີ່ 142,785 ເຮັກຕາ ທີ່ໃຊ້ໃນການປູກພືດປະຈຳປີ. ໄລຍະຮອບວຽນໃນການເຮັດ ໄຮ່ຫຼຸດລົງເກີດຂຶ້ນຍ້ອນ ທັງການເພີ່ມຂຶ້ນຂອງປະຊາກອນກົດດັນ ແລະ ຈັບຈອງເອົາດິນກະສິກຳຂອງຄອບຄົວ ເພື່ອປັບໃຫ້ການໝູນວຽນປະເປັນເຮືອສັ້ນເຂົ້າເພື່ອຫຼຸດເນື້ອທີ່.

ກົມປ່າໄມ້ເຮັດການສຳຫຼວດສຶກສາ ໃນປີ 1992 ສະແດງໃຫ້ເຫັນວ່າເນື້ອທີ່ປູກຝັງພືດເນີນສູງ 626,000 ເຮັກຕາໃນປີ 1989. ນີ້ສົມທຽບແລ້ວການຄາດຄະເນທີ່ເຮັດຂຶ້ນໃນປີ 1982 ຕ່ຳກ່ວາ 597,000 ເຮັກຕາ ບົນພື້ນຖານຕົວເລກດັ່ງກ່າວນີ້ ແລະ ຄາດຄະເນການກະຕວງການເພີ່ມຂຶ້ນຂອງພົນລະເມືອງ ເພີ່ມຂຶ້ນໃນຊຸມຊົນເຂດເນີນສູງ, ຄາດວ່າໃນປີ 2000 ປະມານ 330,000 ຄອບຄົວ ທຳການປູກຝັງປະມານ 689,000 ເຮັກຕາ. ພືດເນີນສູງຕົ້ນຕໍຕາມຄວາມຈິງແລ້ວ ບາງຮູບການ ແມ່ນການເຮັດໄຮ່. ພາຍໃຕ້ຮອບວຽນ 3-5 ປີ ເນື້ອທີ່ດິນນຳໃຊ້ເປັນຮອບວຽນ 2-3 ລ້ານເຮັກຕາ.

ຕົວເລກທີ່ແຕກຕ່າງກັນສຳລັບເນື້ອທີ່ໄຮ່ ແລະ ເນື້ອທີ່ພືດເນີນສູງ ດັ່ງໄດ້ອະທິບາຍດ້ວຍການຈັດໝວດຊະນິດຂອງໄຮ່. ໃນໄລຍະຜ່ານມາເນື້ອທີ່ປູກຝັງພືດເນີນສູງທັງໝົດ ທີ່ເປັນ

ຮອບວຽນໄລຍະຍາວ (15-20 ປີ) ຜືນໄຮ່/ໄຮ່ເລົ່າໝູນວຽນ ຫຼື ລະບົບໄຮ່ເຫຼົ່າອ່ອນ. ພາຍໃຕ້ກໍລະນີດັ່ງກ່າວນີ້ ຈຶ່ງເກີດເປັນປ່າໄມ້ລຸ້ນ 2 ທີ່ຈະໄດ້ບຸກເບີກສໍາລັບທໍາການປູກຝັງ-ກໍລະນີນີ້ເອີ້ນວ່າ ຈູດປ່າ ແລະ ຖາງປ່າເຮັດໄຮ່. ດັ່ງທີ່ໄດ້ກ່າວຂ້າງເທິງນັ້ນ, ອິດທິພົນການເພີ່ມຂຶ້ນຂອງພົນລະເມືອງ ແລະ ການຄອບຄອງດິນກະສິກໍາຊ່ວງໄລຍະປະເປັນເຮື້ອສັ້ນລົງເຖິງ 3-5 ປີ ດ້ວຍການບໍ່ມີເວລາສໍາລັບການເຕີບໃຫຍ່ຂອງປ່າ. ດັ່ງທີ່ໄດ້ສະແດງໃຫ້ເຫັນ, ເນື້ອທີ່ການປູກພືດເນີນສູງເຂົ້າສູ່ເປັນລະບົບໝູນວຽນໃນປັດຈຸບັນ ປະກອບເປັນຫຼັກແຫຼ່ງຕົ້ນຕໍ ແລະ ເພີ່ມສັດສ່ວນຂອງການປູກພືດເນີນສູງດ້ວຍການຫລຸດຜ່ອນການເຮັດໄຮ່.

ເປົ້າໝາຍຂອງລັດໃນປັດຈຸບັນສໍາລັບໃນການເຮັດໄຮ່ແບບເລື່ອນລອຍແມ່ນໃຫ້ສືບຕໍ່ຫຼຸດລົງເຖິງ 29,400 ເຮັກຕາໃນປີ 2005 ແລະ ລົງເຖິງ 0 ຮອດ ປີ 2010. ປາກົດການເບື້ອງຕົ້ນແມ່ນ ເພື່ອຄວບຄຸມ ແລະ ຄອບຄອງດິນກະສິກໍາ ເພື່ອໃຫ້ສາມາດຟື້ນຟູປ່າ ໃຫ້ໄດ້ຕາມເປົ້າໝາຍ ແລະ ເນື້ອທີ່ປົກຫຸ້ມ ຂອງປ່າໄມ້ພາຍໃນປະເທດສູງຂຶ້ນ ເພີ່ມຂຶ້ນຈາກ 45 % ໃນປັດຈຸບັນເຖິງ 60-70 % ຮອດປີ 2020.

ຄະນະທີ່ສະຖິຕິໄດ້ສະແດງໃຫ້ເຫັນແລ້ວວ່າ ການຫຼຸດຜ່ອນການເຮັດໄຮ່ ຈາກປະສົບປະການໂດຍທົ່ວໄປແລ້ວ ແມ່ນ ຊຸມຊົນເຂດເນີນສູງ ບໍ່ໄດ້ມີຜົນກະທົບປ່ຽນແປງພໍເທົ່າໃດ ໃນລະບົບຟາມ ເພື່ອປັບປຸງຜົນຜະລິດ ແລະ ມາດຖານຊີວິດການເປັນຢູ່ ກັບການເຮັດໄຮ່ຮອບວຽນ ແລະ ການປະເປັນເຮື້ອໄລຍະສັ້ນ. ປະກົດໃຫ້ເຫັນວ່າ ຊາວໄຮ່ ສ່ວນຫຼວງຫຼາຍຕົກຢູ່ວັດທະຈັກ ການລົດລົງຂອງຜົນຜະລິດ ແລະ ຄວາມທຸກຈົນເພີ່ມຂຶ້ນ. ຈົນກວ່າຈະດໍາເນີນການໃດນຶ່ງ, ຜົນຜະລິດຈະສືບຕໍ່ເໝືອນເດີມ ເພື່ອຫຼຸດຜ່ອນ ບັນຫາການດໍາລົງຊີວິດອັນຂັດສົນໜັກໜ່ວງຕໍ່ຊຸມຊົນເຫຼົ່ານັ້ນ. ເນື້ອທີ່ປ່າໄມ້ທີ່ຢູ່ອ້ອມຮອບ ຈະຢູ່ພາຍໃຕ້ການກົດດັນ ໃຫ້ສະໜອງເນື້ອທີ່ກະສິກໍາ ແລະ ຜົນຜະລິດຫຼາຍຂຶ້ນ. ຍ້ອນແນວນັ້ນການເຂົ້າແຊກແຊງຈຶ່ງເປັນສິ່ງສໍາຄັນທີ່ສຸດ ເພື່ອສ້າງຄວາມສະດວກໃນການພັດທະນາ ແລະ ປັບເຂົ້າລະບົບ ການກະເສດປ່າໄມ້ ປະສົມປະສານ ແບບຍືນນານ ແລະ ລະບົບການດໍາລົງຊີວິດອື່ນ.

ລັດຖະບານໄດ້ສັງເກດເຫັນວ່າການປ່ຽນແປງຂ້າງເທິງມີຜົນກະທົບຕົ້ນຕໍ ລະບົບການດໍາລົງຊີຂອງຊາວໄຮ່. ຕໍ່ການຮັບຜິດຊອບດັ່ງກ່າວລັດຖະບານໄດ້ສ້າງຍຸດທະສາດ ດັ່ງໄດ້ອະທິບາຍ ໃນຍຸດທະສາດ ວິໄສທັດສໍາລັບຂະແໜງການກະສິກໍາ. ວິໄສທັດຍຸດທະສາດນີ້ ແມ່ນອອກແບບເພື່ອ <u>ສ້າງສະຖຽນລະພາບ</u> ໃນເຂດເນື້ອທີ່ເຮັດໄຮ່ເລື່ອນລອຍ ດ້ວຍໂຄງການ

ແບບມີສ່ວນຮ່ວມ ເພື່ອຊ່ວຍສ້າງ ລະບົບກະສິກຳຄົງທີ່ແບບຍືນນານ ແລະ ຄຽງຄູ່ກັບການສ້າງໂອກາດການດຳລົງຊີວິດອື່ນໆ.

ບົນພື້ນຖານວິໄສທັດຂ້າງເທິງ, ຈຸດປະສົງເພື່ອຫຼຸດຜ່ອນການເຮັດໄຮ່ ດ້ວຍການ: i) ພັດທະນາລະບົບການນຳໃຊ້ດິນແບບຍືນນານ ທີ່ບໍ່ເກີດອັນຕະລາຍຕໍ່ສະພາບແວດລ້ອມ ແລະ ii) ພັດທະນາ ແລະ ຂະຫຍາຍກິດຈະກຳສ້າງລາຍຮັບ ທີ່ບໍ່ແມ່ນກະສິກຳ.ລະບົບການດຳລົງຊີວິດຊາວໄຮ່ ຄົງທີ່, ສ່ວນທີ່ຍັງເຫຼືອກະແຈກກະຈາຍຕາມທຳມະຊາດ ຈະເຂົ້າພົວພັນກັບການເຮັດກະເສດສຸມ ແລະ ນຳໃຊ້ດິນທີ່ໄດ້ຮັບຈາກການຢ່າງຄົງທີ່, ຊຶ່ງຕົງກັນຂ້າມກັບລະບົບໄຮ່ໝູນວຽນແບບເປີດກ້ວາງດັ່ງເດີມ.

(2) **ຍຸດທະສາດການພັດທະນາ**

ບົນພື້ນຖານດັ່ງກ່າວຂ້າງເທິງນັ້ນ, ການພັດທະນາ ແລະ ການປັບລະບົບການດຳລົງຊີວິດ ແລະ ກະສິກຳເນີນສູງຢູ່ລະດັບບ້ານ/ຊຸມຊົນ ແມ່ນມີຄວາມຕ້ອງການ ແລະ ເນື້ອທີ່ສ່ວນໃຫຍ່ ສຳລັບການພັດທະນາ ແລະ ການປັບ ໄດ້ກຳນົດໄວ້ເຊັ່ນ:

- ວາງແຜນນຳໃຊ້ດິນຢ່າງເໝາະສົມບົນພື້ນຖານລະດັບ, ຄວາມຄ້ອຍຊັນ, ດິນ ແລະ ລະດັບນ້ຳຝົນ.
- ພັດທະນາລະບົບການເຮັດຟາມທີ່ເໝາະສົມ ລວມທັງການກະເສດປ່າໄມ້, ມາດຕະການໃນການອານຸລັກ, ການລ້ຽງສັດ ແລະ ການລ້ຽງປາ.
- ການພັດທະນາການຄຸ້ມຄອງ ແລະ ການນຳໃຊແບບຍືນນານຂອງເຄື່ອງປ່າຂອງດົງ.
- ພັດທະນາທ່າແຮງການສ້າງລາຍຮັບບໍ່ແມ່ນກະສິກຳອື່ນໆ.

ໃນຂໍ້ນີ້ໄດ້ເນັ້ນເຖິງການສ້າງບົດສະເໜີໂຄງການ ສຳລັບລະດັບບ້ານ/ຊຸມຊົນ ເຂົ້າແຊກແຊງເພື່ອປະຕິບັດຈຸດປະສົງຂອງການຫຼຸດຜ່ອນການເຮັດໄຮ່. ນອກຈາກອາຊີບກະສິກຳ ຍັງມີຄວາມສາມາດເປັນໄປໄດ້ຂະແໜງການອື່ນ ໂດຍສະເພາະກິດຈະກຳສ້າງລາຍຮັບ ທີ່ບໍ່ແມ່ນກະສິກຳເຊັ່ນ: ການລ້ຽງເຜິ້ງ, ການລ້ຽງມ້ອນ,ຕ່ຳຫູກ, ເຮັດເຈ້ຍ, ເຮັດດິນຈີ່ ແລະ ປຸງແຕ່ງກະສິກຳ. ຄຽງຄູ່ກັບອາຊີບກະສິກຳ, ສິ່ງເຫຼົ່ານີ້ສ້າງໂອກາດເພີ່ມເຕີມ ສຳລັບການປັບປຸງຊີວິດການເປັນຢູ່. ເຊັ່ນ ກິດຈະກຳ ທີ່ຄິດວ່າເປັນການພົວພັນຕໍ່ການພັດທະນາລະບົບການດຳລົງຊີວິດຄົງທີ່ແບບຍືນນານ, ດ້ວຍການຫຼຸດຜ່ອນການເພິ່ງພາຊັບພະຍາກອນປ່າໄມ້.

ເປົ້າໝາຍຂອງການຢຸດຕິການຖາງປ່າເຮັດໄຮ່ ບໍ່ໄດ້ໝາຍຄວາມວ່າຊຸມຊົນຢຸດຕິການປູກເຂົ້າເນີນສູງ. ໃນເຂດພູດອຍຫ່າງໄກ/ເຂດເນີນສູງ, ການຜະລິດເຂົ້າລ້ຽງກຸ້ມຕົນເອງຈະເປັນບຸລິມະສິດສຳຄັນຕະຫຼອດໄປ. ມູນຄ່າຂອງເຂົ້າໃນເຂດພູດອຍແມ່ນສູງກ່ວາລາຄາເຂົ້າໃນເຂດທົ່ງພຽງ, ຍ້ອນລາຄາການຂົນສົ່ງ ແລະ ຂໍ້ຈຳກັດອື່ນໆ.

ແນວຄວາມຄິດຂອງໂຄງການທີ່ສຳຄັນ ສຳລັບການພັດທະນາລະບົບການດຳລົງຊີວິດຄົງທີ່ແບບຍືນນານ ແມ່ນສັງເກດເຫັນວ່າ:

- ການເຂົ້າຮ່ວມຂອງຊຸມຊົນໃນຂະບວນການ ແມ່ນເປັນແກ່ນສານ ແລະ ຈຳເປັນ
- ລະບົບການດຳລົງຊີວິດເຂດເນີນສູງຈະເປັນ ແນວຫຼາກຫຼາຍ ແລະ ລວມມີ: ລະບົບກະເສດ-ປ່າໄມ້ (ປູກຝັງ, ລ້ຽງສັດ ແລະ ທົ່ງຫຍ້າ), ການລ້ຽງປາ, ເຄື່ອງປ່າຂອງດົງ ແລະ ວິຊາອື່ນໆ. ໂດຍສະເພາະທ່າແຮງສ້າງລາຍຮັບທີ່ບໍ່ແມ່ນກະສິກຳ.
- ການປັບປຸງທີ່ກ້າວໜ້າຈະຕ້ອງລະມັດລະວັງບັນຫາ ແລະ ໂອກາດ ທີ່ໄດ້ກຳນົດຕາມດ້ວຍການທົດລອງ, ການປັບຄືນ ແລະ ປັບການສະເໜີທີ່ຕົກລົງໄວ້.
- ຜົນທີ່ສາມາດນຳໃຊ້ ເປັນການປັບປຸງທີ່ກ້າວໜ້າ ຫຼື ພື້ນຖານການພັດທະນາຈາກພາກປະຕິບັດຕົວຈິງ, ຈະເປັນການຕົວຢ່າງ ແລະ ປັບທີ່ງ່າຍທີ່ສຸດ.

ໃນວຽກທັງໝົດເຫຼົ່ານີ້, ໂດຍສະເພາະຂະບວນການ ການມີສ່ວນຮ່ວມ ການສົ່ງເສີມແມ່ນມີຄວາມຕ້ອງການເພື່ອເລີ່ມຕົ້ນ ແລະ ອຳນວຍຄວາມສະດວກການເຂົ້າຮ່ວມຂອງຊຸມຊົນ ໃນການກຳນົດບັນຫາ ແລະ ໂອກາດຕ່າງໆ. ຕິດພັນກັບການຄົ້ນຄ້ວາ, ການສາທິດ (ລວມທັງການຝຶກອົບຮົມຊາວນາໃຫ້ຊາວນາ) ແລະ ໜ່ວຍສະໜັບສະໜູນດ້ານວິຊາການອື່ນໆ ກໍມີຄວາມຕ້ອງການເໝືອນກັນ ເພື່ອສາມາດພັດທະນາ/ດັດປັບເຕັກໂນໂລຊີ.

ວິໄສທັດໄດ້ກຳນົດສິ່ງຕ້ອງການເຫຼົ່ານີ້, ແຕ່ສັງເກດເຫັນວ່າການສົ່ງເສີມປັດຈຸບັນ ແລະ ການຈັດຕັ້ງການຄົ້ນຄ້ວາຕ້ອງການພັດທະນາ ແລະ ສ້າງຄວາມອາດສາມາດ. ນອກຈາກນັ້ນເພື່ອພັດທະນາການຄົ້ນຄ້ວາ ແລະ ສົ່ງເສີມ, ຍັງມີລະດັບການບໍລິການອື່ນໆ ແລະ ອົງປະກອບທີ່ຕ້ອງການ. ວຽກດັ່ງກ່າວສາມາດອະທິບາຍວ່າເປັນເງື່ອນໄຂ 'ກະກຽມ' ຫຼື 'ຄວາມສາມາດ' ສຳລັບສ້າງຄວາມສະດວກແກ່ການເພິ່ງຕົນເອງຂອງຊຸມຊົນເຂດເນີນສູງໃນການດັດປັບໃຫ້ຍືນນານ ເພື່ອປຽນກໍລະນີເຫດການທີ່ເກີດຂຶ້ນ. ເງື່ອນໄຂໃນການກຽມການເຫຼົ່ານັ້ນລວມມີ:

- ໂຄງລ່າງຊົນນະບົດ ແລະ ການພັດທະນາການບໍລິການ - ສາທາລະນະສຸກ ແລະ ການວາງແຜນຄອບຄົວ, ການສຶກສາ, ທາງ, ໄຟຟ້າ ໆລໆ.
- ການພັດທະນາສະຖາບັນການຈັດຕັ້ງ ແລະ ຊັບພະຍາກອນມະນຸດ - ການຄົ້ນຄ້ວາ ແລະ ການສົ່ງເສີມ.
- ການຈັດໝວດການນຳໃຊ້ດິນ - ບົນພື້ນຖານຄວາມເໝາະສົມຂອງດິນ ແລະ ທີ່ດິນ ແລະ ການທົດລອງດິນ.
- ການແບ່ງດິນ ແລະ ວາງແຜນນຳໃຊ້ດິນຂອງບ້ານ - ເປັນການພັດທະນາ ສຳລັບເຂດພື້ນທີ່ເຮັດໄຮ່ທັງຢູ່ໃນ ແລະ ນອກປ່າສະຫງວນແຫ່ງຊາດ.

ກ່ຽວຂ້ອງກັບວຽກດັ່ງກ່າວນີ້, ກິດຈະກຳທີ່ພົວພັນກັບການເປັນເຈົ້າຂອງ ແລະ ການນຳໃຊ້ທີ່ດິນ ເປັນສິ່ງສຳຄັນໃນການເຮັດໃຫ້ຮັບປະກັນ ແລະ ການກະຕຸກຊຸກຍູ້ຄອບຄົວ ສຳລັບການພັດທະນາແບບຍືນນານຂອງເນື້ອທີ່ເນີນສູງ. ໂຄງການແບ່ງດິນແຫ່ງຊາດໃຫ້ສິດນຳໃຊ້ທີ່ດິນຢ່າງເປັນທາງການ, ແບ່ງເນື້ອທີ່ດິນກະສິກຳອັນແນ່ນອນ ອອກໃບຢັ້ງຢືນນຳໃຊ້ທີ່ດິນຊົ່ວຄາວ (TLUCs). ສະພາບການໃນປັດຈຸບັນ ແລະ ການສະເໜີ ສຳລັບເນັ້ນການພັດທະນາປັດໃຈຄວາມອາດສາມາດເຫຼົ່ານີ້ ແມ່ນກວມຢູ່ໃນຂໍ້ອື່ນຂອງບົດລາຍງານ ກັບເອກະສານອ້າງອີງຂອງບົດ ບົດສະເໜີທີ່ມີຢູ່ໃນແຜນປະຕິບັດການນີ້.

(3) **ຂັ້ນຕອນໃນການປະຕິບັດ.**

ສຳລັບໄລຍະສັ້ນຫາໄລຍະກາງ, 2002- 2010, ມີ 4 ແຜນການ/ໂຄງການຕົ້ນຕໍເພີ່ມເຕີມທີ່ໄດ້ສະເໜີໃນການສຶກສາແຜນແມ່ບົດນີ້. ຊຶ່ງເຂດທີ່ໄດ້ເນັ້ນຄວາມຕ້ອງການເຫຼົ່ານີ້ ທີ່ຈົນເຖິງປັດຈຸບັນນີ້ ກໍຍັງບໍ່ລາບລື້ນ ສຳລັບໂຄງການທີ່ກຳລັງດຳເນີນ ແລະ ໂຄງການທີ່ໄດ້ວາງແຜນໃນປັດຈຸບັນ, ແຕ່ວ່າມີຄວາມຈຳເປັນ ຕໍ່ເປົ້າໝາຍ ທີ່ກ້າວໜ້າທົ່ວທັງປະເທດ ໃນການຍຸດຕິການເຮັດໄຮ່ຮອດປີ 2010. ມີສອງໂຄງການໄດ້ກຳນົດເພີ່ມເຕີມ ສຳລັບໄລຍະຍາວ 2010 - 2020.

<u>ຍຸດທະສາດໄລຍະສັ້ນ</u>

1) ການຍຸດຕິການຖາງປ່າເຮັດໄຮ່ຢູ່ໃນເຂດເນີນສູງ. –ແຜນງານດັ່ງກ່າວປະກອບດ້ວຍ 3 ໂຄງການທີ່ຈະຖືກພິຈາລະນາໄປພ້ອມກັບໂຄງການຍຸດຕິການຖາງປ່າເຮັດໄຮ່ ແລະ ໂຄງການປ້ອງກັນອ່າງໂຕ່ງນ້ຳທີ່ມີຢູ່ ທີ່ກວມລວມເອົາເຂດເນື້ອທີ່ເຮັດໄຮ່ສ່ວນໃຫຍ່ຂອງປະເທດແລ້ວ. ການປະຕິບັດໂຄງການດັ່ງກ່າວນີ້ຈະນຳໃຊ້ຄວາມສາມາດຂອງປະເທດທັງໝົດທີ່ມີຢູ່

i) <u>ການຍຸດຕິການຖາງປ່າເຮັດໄຮ່ຢູ່ໃຣເຂດພາກໄຕ້</u>

ii) ໂຄງການນີ້ກ່ພວພັນກັບແຜນງານຊ່ວຍເຫຼືອດ້ານເຕັກນິກຈາກສາກົນໃນໂຄງການທີ່ແບ່ງຕາມເຂດເນື້ອທີ່ຢູ່ໃນສາມແຂວງພາກໄຕ້ສາລະວັນ, ເຊກອງ ແລະ ອັດຕະປື. ໃນແຂວງດັ່ງກ່າວໄດ້ມີກິດຈະກຳພັດທະນາເສດຖະກິດຜ່ານການຜະລິດໄມ້ໃຫ້ໝາກ ແລະ ໄມ້ໃຫ້ໃບ ( ກາເຟ, ຊາ ). ໂຄງການດັ່ງກ່າວຈະຕ້ອງໄດ້ສືບຕໍ່ລໍຖ້າໃຫ້ລະບົບການສົ່ງເສີມ ແລະ ວິໃຈໄດ້ຖືກປັບປຸງຈັດຕັ້ງຄືນໃໝ່.

iii) <u>ການຍຸດຕິການຖາງປ່າເຮັໄຮ່ຢູ່ເຂດພາກເໜືອ</u>

ໂຄງການດັ່ງກ່າວເປັນໂຄງການທີ່ອຸປະຖຳໂດຍ ອົງການສະຫະປະຊາຊາດ ເພື່ອການປ້ອງກັນຢາເສບຕິດ ( UNDCP ) ແລະ ຄະນະກຳມະການກວດກາ ແລະ ຄຸ້ມຄອງຢາເສບຕິດແຫ່ງຊາດ ( LCDL ). ໂຄງການໄດ້ມີຊື່ວ່າ " ຮັກສາຄວາມດຸ່ນດ່ຽງໃນການຝິ່ນ " ໂຄງການມີອາຍຸເຖິງປີ 2006 ແລະ ມີເປົ້າໝາຍໃນການຍຸດຕິການປູກຝິ່ນຢ່າງສິ້ນເຊີງໃນໂຄງການດັ່ງຍັງມີໂຄງການນຳລອງ 15 ໂຄງການເປັນເຂດປູກຝິ່ນໃນ 15 ເມືອງ ໃນ 6 ແຂວງພາກເໜືອເຊັ່ນ : ແຂວງຜົ້ງສາລີ, ອຸດົມໄຊ, ຫຼວງນ້ຳທາ, ຫົວພັນ, ຊຽງຂວາງ ແລະ ຫຼວງພະບາງຄວາມຕ້ອງການໃນການເສີມສ້າງ ແລະ ທັດແໜ້ນຄວາມມຕື່ນຕົວຂອງຊຸມຊົນ ແລະ ການຮັບເອົາລະບົບການຜະລິດກະສິກຳລະບົບຟາມແບບໃໝ່ຈະໄດ້ຖືກປະເມີນຜົນ ແລະ ທວນຄືນ ຫຼັງຈາກໂຄງການໄດ້ສິ້ນສຸດລົງໃນປີ 2006.

iv) ແຜນງານພັດທະນາ ແລະ ລຸດຜ່ອນຄວາມທຸກຍາກໃນເຂດພູດອຍ.

ໂຄງການນີ້ແມ່ນຢູ່ໃນໄລຍະກະກຽມໂດຍກະຊວງກະສິກຳ ແລະ ປ່າໄມ້ ເພື່ອສະເໜີຕໍ່ອົງການຮ່ວມມືສາກົນຂອງປະເທດຊູແອດ ( SIDA ) ໂຄງການຈະເລັ່ງໃສ່ການພັດທະນາລຸດຜ່ອນຄວາມທຸກຍາກໃນເຂດພູດອຍ. ບັນດາແຂວງທີ່ຈະລວມເຂົ້າໃນໂຄງການມີແຂວງຫຼວງພະບາງ, ສະຫວັນນະເຂດ ແລະ ແຂວງໄຊຍະບູລີ.

2) ການຍຸດຕິ ການຖາງປ່າເຮັດໄຮ່ ໃນເຂດປົກປັກຮັກສາ ລະບົບຊີວະນາງພັນ ແຫ່ງຊາດ ( NBCA )

ໂຄງການດັ່ງກ່າວຈະສຸມໃສ່ ການພັດທະນາ ລະບົບການຜະລິດກະສິກຳລະດັບຟາມແບບມີສ່ວນຮ່ວມ ແລະ ການພັດທະນາຍົກລະດັບຊີວິດການເປັນຢູ່ໃນເຂດປົກປັກຮັກາລະບົບຊີວະ

ນາງພັນ 10 ແຫ່ງ. ໂຄງການດັ່ງກ່າວໄດ້ຊີ້ແຈງເຖິງປະກົດການເຮັດໄຮ່ທຳລາຍປ່າໃນເຂດປົກປັກຮັກສາ ແຕ່ຍັງບໍ່ທັນມີໂຄງການ ແລະ ການຊ່ວຍເຫຼືອເທື່ອ.

3) ການຄົ້ນຄ້ວາວິໃຈດ້ານກະສິກຳ ແລະ ປ່າໄມ້ສາຍພົວພັນລະຫວ່າງການຄົ້ນຄ້ວາວິໃຈ ແລະ ການສົ່ງເສີມ.

ແຜນງານດັ່ງກ່າວໄດ້ປະກອບການຊ່ວຍເຫຼືອດ້ານເຕັກນິກວິຊາການເພື່ອສ້າງສາຍພົວພັນລະຫວ່າງການຄົ້ນຄ້ວາວິໃຈ ແລະ ການສົ່ງເສີມດ້ານກະສິກຳປ່າໄມ້ ເພື່ອລົງເລິກປັບປຸງລະບົບການຜະລິດລະດັບຟາມໃຫ້ແທດເໝາະກັບຜົນຂອງການຄົ້ນຄ້ວາວິໃຈໃນເບື້ອງຕົ້ນກິດຈະກຳດັ່ງກ່າວຈະເລີ້ມຕົ້ນສ້າງສາຍພົວພັນ ແລະ ລາຍການຮ່ວມມືລະຫວ່າງໂຄງການເຂດຖັ້ນທີ່ ແລະ ກຸ່ມເປົ້າໝາຍໃນໝູ່ບ້ານ ແລະ ໃນເມືອງ. ຖ້າຫາກພົບເຫັນອັນດີແລ້ວຈະມີການຂະຫຍາຍໃປສູ່ໝູ່ບ້ານອື່ນໆ ແລະ ເມືອງອື່ນໆ.

4). ການຄຸ້ມຄອງນຳໃຊ້ ເຄື່ອງປ່າຂອງດົງໃຫ້ຍືນນານ.

ໂຄງການດັ່ງກ່າວນີ້ ຈະປະກອບການຄົ້ນຄ້ວາວິໃຈ ເພື່ອພັດທະນາການຄຸ້ມຄອງ ແລະ ນຳໃຊ້ ເຄື່ອງປ່າຂອງດົງເພື່ອການກຸ້ມກິນ ແລະ ເພື່ອສ້າງລາຍຮັບເພີ່ມເຕີມ ໃຫ້ແກ່ປະຊາຊົນ. ການດຳ ລົງຊີວິດໃນຊົນນະບົດ ໄດ້ຖືກອູ້ມຊູຈາກ ຜົນເກັບກ່ຽວຂອງ ເຄື່ອງ ປ່າຂອງດົງຫຼາຍຊະນິດ ທີ່ໃນປັດຈຸບັນໄດ້ຖືກ ຂຸດຄົ້ນເກີນສ່ວນ ເພື່ອການກຸ້ມກິນ ແລະ ການເພີ່ມລາຍຮັບໃຫ້ຄອບຄົວ. ໂຄງການອີກອັນໜຶ່ງເພື່ອພັດທະນາ ເຄື່ອງປ່າຂອງດົງ ແມ່ນການສຶກສາ ຊອກຫາຕະຫຼາດ ແລະ ການປຸງແຕ່ງ. ຖ້າລວມກັນ ແລ້ວໂຄງການ ທີ່ກ່າວ ມານັ້ນຈະສາມາດກວດສອບ ແລະ ຈັດບູລິມະສິດ ສຳລັບເຄື່ອງປ່າຂອງດົງ ໃນການ ຄຸ້ມຄອງຂຸດຄົ້ນ, ປຸງແຕ່ງ ແລະ ຈຳໜ່າຍ.

ຍຸດທະສາດ ໄລຍະສັ້ນນີ້ ໄດ້ເນັ້ນໃສ່ ການສືບຕໍ່ ປະຕິບັດບັນດາ ໂຄງການທີ່ມີຢູ່ ແລະ ໄດ້ປະຕິບັດຜ່ານມາ. ຄວາມສຳຄັນເປັນພິເສດ ແມ່ນການປັບປຸງ ລະບົບຂໍ້ມູນ ຂ່າວສານລະຫວ່າງ ຜູ້ໄດ້ຮັບຜົນປະໂຫຍດ ທຸກທະດັບ ລວມທັງການພັດທະນາ ເຕັກໂນໂລຢີ ຜະລິດກະສິກຳ ລະດັບຟາມ ໃຫ້ຍືນນານ ແລະ ການພັດທະນາ ສ້າງລາຍຮັບ ນອກຈາກ ການ ຜະລິດໃນຟາມ.

ຍຸດທະສາດ ໄລຍະກາງ ແລະ ໄລຍະຍາວ

ໄດ້ມີການຮັບຮູ້ວ່າ ການພັດທະນາ ຜັນປ່ຽນເປັນຂະບວນການ ທີ່ກຳລັງ ຖືກປະຕິບັດ ຢູ່ທີ່ນີ້. ດັ່ງນັ້ນ, ຈຶ່ງມີຄວາມຕ້ອງການໄດ້ສືບຕໍ່ ໂຄງການ ແລະ ໃຫ້ການຊ່ວຍເຫຼືອ ພາຍຫຼັງປີ 2010. ຄວາມຕ້ອງການດັ່ງກ່າວ ຈະຕ້ອງໄດ້ຖືກ ທົບທວນຄືນ ເປັນປະຈຳ ຕາມຄວາມ ຄືບໜ້າ ແລະ ຜົນສຳເລັດ ຂອງໂຄງການໃນແຕ່ລະໄລຍະ. ອີງຕາມບົດຮຽນ ແລະ ປະສົບ ປະການໃນ ບັນດາໂຄງການທີ່ມີຮູບລັກສະນະ ຄ້າຍຄຽງກັນ ໃນພາກພື້ນນີ້ ມັນມີວຄາມ ຮຽກຮ້ອງຕ້ອງການ ໃຫ້ມີການຊ່ວຍເຫຼືອ ໄລຍະຍາວ. ໃນໄລຍະຍາວ, ມີໂຄງ ການ ສືບຕໍ່ ສານໂຄງການທີ່ໄດ້ຖືກກຳນົດ ເພື່ອຂະຫຍາຍ ແລະ ສົ່ງເສີມບົດຮຽນ ຜ່ານມາ ໃຫ້ຊຸມຊົນ ເຂດພູດອຍ.

1) ຂະຫຍາຍການສາທິດ ກະສິກຳປ່າໄມ້ ແລະ ການນຳໃຊ້ທີ່ດິນ ໃຫ້ຍືນນານ.
2) ຂະຫຍາຍການສົ່ງເສີມ ການຄຸ້ມຄອງນຳໃຊ້ເຄື່ອງປ່າຂອງດົງ.
3) ສ້າງລາຍງານ ດ້ານເຕັກໂນໂລຢີ ເພື່ອຍຸດຕິການຖາງປ່າເຮັດໄຮ່.

ສອງໂຄງການທຳອິດນັ້ນ ເປັນໂຄງການທີ່ ເລີ່ມມາຈາກ ໂຄງການທີ່ກ່ຽວຂ້ອງ ໃນບາດກ້າວ ທີ່1. ໂຄງການດັ່ງກ່າວ ຈະຖືກ ເສີມຂະຫຍາຍຂື້ນ ຜ່ານບົດຮຽນ ແລະ ຜົນສຳເລັດຂອງບາດກ້າວທີ່ 1 ຜ່ານການຂະຫຍາຍເນື້ອທີ່ ໂຄງການໄປເຂດອື່ນ ທີ່ກ້ວາງຂວາງກ່າວເກົ່າ. ໂຄງການນັ້ນ ຈະຂື້ນກັບຄວາມສາມາດ ຂອງອົງການສົ່ງເສີມ ແລະ ຄົ້ນຄ້ວາວິໃຈ ທີ່ຈະໄດ້ຮັບການປັບປຸງ ໃນໄລຍະບາດກ້າວທີ1, ແລະ ຈະສາມາດຂະຫຍາຍ ແລະ ສຸມໃສ່ວຽກງານໄດ້.

ໂຄງການສຸດທ້າຍ ເປັນການສ້າງ ສາຍພົວພັນວຽກງານ ເພື່ອປັບປຸງການແລກປ່ຽນ ຂ່າວສານ ລະຫວ່າງບັນດາ ພາກສ່ວນທີ່ກ່ຽວຂ້ອງ ກັບວຽກງານ ການຍຸດຕິການຖາງປ່າເຮັດໄຮ່. ກິດຈະກຳ ສ້າງລາຍງານຈະ ກ່ຽວພັນກັບການພັດທະນາ ເຕັກໂນໂລຢີ ການນຳໃຊ້ ຍົກຕົວຢ່າງ: ລະບຽບ ການ ແລະ ແຜນງານ ຂອງລັດຖະບານທີ່ມີຢູ່ ເພື່ອສົ່ງເສີມການຜະລິດ ເບ້ຍຕົ້ນໄມ້ ແລະ ປູກໄມ້ ບໍ່ໄດ້ຖືກເຜີຍແຜ່ເຖິງປະຊາຊົນ ຢ່າງທົ່ວເຖິງໃນເຂດພູດອຍ. ນອກຈາກນັ້ນ ມັນຍັງ ມີໂຄງການທົດລອງ ແລະ ປັບປຸງ ໃຫ້ເກີດມີການຮັບເໝົາ ໃນເຂດພູດອຍ. ການໄປ ເຖິງຊຸມຊົນ ໃນເຂດພູດອຍແລະ ນຳໃຊ້ທ່າແຮງທີ່ມີຢູ່ຈະສາມາດ ເສີມຂະຫຍາຍ ຢ່າງ ໄວ ວາ ໄດ້ ຜ່ານການແລກປ່ຽນຂ່າວສານທີ່ດີກ່ວາ ໄປຄຽງຄູ່ກັບວຽກງານການສົ່ງເສີມ ແລະ ສະໜອງ ວັດຖຸ ປັດໃຈຕ່າງໆ.

(4) **ຄາດຄະເນຜົນທີ່ຈະໄດ້ຮັບ.**

ຜົນທີ່ຈະໄດ້ຮັບຄຽງຄູ່ກັບນະໂຍບາຍຍຸດທະສາດວິໄສທັດ, ຍຸດທະສາດ ແລະ ບຸລິມະສິດຕ່າງໆ ຈະເລີ່ມຕົ້ນໄດ້ຮັບຜົນສຳເລັດໃນພື້ນທີ່ເປົ້າໝາຍຂອງໂຄງການ. ຄືດັ່ງວິທີການ ແລະ ເຕັກໂນໂລຊີເຂັ້ມແຂງຂຶ້ນ ມັນຈະກາຍເປັນເຕັກໂນໂລຊີມີໄວ້ນຳໃຊ້ໃນທົ່ວໆໄປຂອງພື້ນທີ່ກວ້າງຂວາງກວ່າເກົ່າ.

ຜົນໄດ້ຮັບໃນເຂດພື້ນທີ່ຂອງໂຄງການ ຈະເປັນລະບົບການວາງແຜນນຳໃຊ້ດິນ ບົນພື້ນຖານການຈັດໝວດການນຳໃຊ້ດິນທີ່ເໝາະສົມໃນເຂດຄ້ອຍຊັນ, ເນື້ອດິນ, ລະດັບ ແລະ ບັນທັດຖານຂອງອາກາດ. ຕາມເຂດພື້ນທີ່ເຫຼົ່ານີ້ ການຕິດພັນ ການຄົ້ນຄ້ວາສົ່ງເສີມ ສຳລັບການປະສານງານ ການປັບເຂົ້າກັບລະບົບຟາມເຂດເນີນສູງຈະກ້າວໜ້າເປັນລະບົບທີ່ອຳນາດໄດ້ ແລະ ທາງເລືອກ ເພື່ອສະຖຽນລະພາບ ແລະ ຟາມເນີນສູງປະສົມປະສານ. ການພັດທະນາເຫຼົ່ານີ້ຈະລຶດຜ່ອນ ການເຊາະເຈື່ອນ ແລະ ການໄຫລໜີຂອງດິນ ເພື່ອສ້າງຄວາມສະດວກໃຫ້ແກ່ການຜະລິດເຂົ້າ ແລະ ສາລີ, ພືດສ່ວນອື່ນໆ ພືດຍືນຕົ້ນ, ການລ້ຽງສັດ ແລະ ລ້ຽງປາໄດ້ຢ່າງຍືນນານ.

ພາກສ່ວນອື່ນຂອງໂຄງການແມ່ນພົວພັນກັບການ ພັດທະນາທ່າແຮງການສ້າງລາຍຮັບ ທີ່ບໍ່ແມ່ນກະສິກຳສິ່ງສຳຄັນຕົ້ນຕໍ ແມ່ນການຄຸ້ມຄອງ ແລະ ນຳໃຊ້, ການປຸງແຕ່ງ ແລະ ການຕະຫຼາດ ເຄື່ອງປ່າຂອງດົງແບບຍືນນານ.ຜົນທີ່ໄດ້ຮັບຈາກທີ່ນີ້ຈະເປັນການປັບວິທີການ ການຄຸ້ມຄອງແບບຍືນນານທົ່ວໄປ ສຳລັບຊັບພະຍາກອນເຄື່ອງປ່າຂອງດົງພື້ນເມືອງຫຼັກ ເພື່ອເຮັດໃຫ້ ຄວາມຕ້ອງການການຊົມໃຊ້ຂອງຄອບຄົວ ແລະ ເຮັດໃຫ້ມີລາຍຮັບເພີ່ມໄປພ້ອມກັບການອານຸລັກຊີວະນາງພັນ.

## 6.8 ການຕະຫຼາດ ແລະ ການປຸງແຕ່ງ

(1) ຈຸດປະສົງຂອງການພັດທະນາ.

ຈຸດປະສົງຕົ້ນຕໍ ໃນການຕະຫຼາດກະສິກຳຢູ່ພາຍໃຕ້ແຜນປະຕິບັດການທີ່ໄດ້ສະເໜີ ແມ່ນເພື່ອຊ່ວຍເຮັດໃຫ້ມີຄວາມອາດສາມາດສະພາບແວດລ້ອມຂອງຕະຫຼາດ ດັ່ງນັ້ນຜູ້ຜະລິດ, ຜູ້ບໍລິໂພກ ຊຸມຊົນນັກທຸລະກິດກະສິກຳສາມາດຕັດສິນໃຈໄປກັບກອບ ຂອງເສດຖະກິດຕະຫຼາດ. ຈຸດປະສົງອັນນີ້ ແມ່ນເພື່ອຊຸກຍູ້ ດ້ວຍການສ້າງຄວາມສະດວກ ແລະ ບໍລິການດ້ານລະບຽບກົດໝາຍ ແລະ ຂໍ້ມູນຂ່າວສານດ້ານຕະຫຼາດ ເພື່ອຊ່ວຍໃນການແຂ່ງຂັນເປີດເຜີຍ

ແລະ ຢ່າງເສລີ, ສິ່ງສັນຍານດ້ານຕະຫຼາດ ແລະ ການຊື້ - ຂາຍ ສິນຄ້າ ແລະ ບໍລິການ ແລະ ຈະເຮັດໃຫ້ການຄ້າພາຍໃນ ແລະ ພາຍນອກເພີ່ມຂຶ້ນ.

ຈຸດປະສົງຕົ້ນຕໍໃນການປຸງແຕ່ງກະສິກຳແມ່ນ I) ເພື່ອປັບປຸງຄຸນນະພາບຫຼຸດຜ່ອນການເສຍຫາຍຂອງຜະລິດຕະພັນກະສິກຳ ດ້ວຍກິດຈະກຳຫຼັງກ່ຽວກັບອັນເໝາະສົມຮວມທັງການຮີບໄຮມ ການຄັດເລືອກ, ການເກັບມ້ຽນ, ການຕາກແຫ້ງ, ການບັນຈຸຫີບຫໍ່ ການຂົນ ແລະ etc..., ແລະ ii) ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ມູນຄ່າເພີ່ມ ຂອງຜະລິດຕະພັນກະສິກຳຫຼາຍຂຶ້ນຜ່ານກິດຈະກຳປຸງແຕ່ງກະສິກຳ

ປັດໃຈສຳຄັນທີ່ມີອິດທິພົນຕໍ່ຜົນສຳເລັດຂອງຈຸດປະສົງດັ່ງກ່າວນີ້ ແມ່ນການສ້າງຄວາມສະດວກໃນການ ການບໍລິການ ສຳລັບຂະບວນການການຜະລິດ ແລະ ລົບລ້າງການຄວບຄຸມ ແລະ ຂໍ້ກຳນົດກົດລະບຽບທີ່ກີດໜ່ວງຂະບວນການສິນຄ້າ ແລະ ບໍລິການຢ່າງເສລີ ແລະ ງ່າຍຂຶ້ນ.

ດັ່ງທີ່ໄດ້ອະທິບາຍ ໃນຍຸດທະສາດວິໄສທັດຂອງລັດຖະບານສຳລັບກະສິກຳ, ເຂດເນື້ອທີ່ດິນຄ້ອຍຊັນ ຂາດການເຂົ້າຫາຕະຫຼາດ ແລະ ຊາວກະສິກອນສ່ວນໃຫຍ່ບໍ່ໄດ້ຜະລິດເພື່ອຕະຫຼາດ ຍ້ອນຂາດທາງທີ່ເຂົ້າເຖິງ ແລະ ພື້ນຖານສິ່ງອຳນວຍຄວາມສະດວກອື່ນໆ. ຕາມຄວາມຮຽກຮ້ອງຕ້ອງການ ເພື່ອຄວາມເໝາະສົມຂອງເປົ້າໝາຍນີ້, ໃນໄລຍະສັ້ນ, ເປົ້າໝາຍສ່ວນໃຫຍ່ແມ່ນເພື່ອສ້າງການເຂົ້າເຖິງການຕະຫຼາດ, ທັງຕະຫຼາດພາຍໃນ ແລະ ຕະຫຼາດຕ່າງປະເທດ, ແລ້ວດັ່ງນັ້ນ ຜູ້ທຳການຜະລິດມີໂອກາດຂຸດຄົ້ນຕະຫຼາດ ທີ່ມີຂໍ້ຈຳກັດໃນເມື່ອກ່ອນດ້ວຍການຂາດສິ່ງອຳນວຍຄວາມສະດວກ. ໃນຊ່ວງໄລຍະສັ້ນກໍເໝືອນກັນກໍແມ່ນຈຸດປະສົງ ເພື່ອສະໜອງຂໍ້ມູນດ້ານຕະຫຼາດ ແລ້ວຜູ້ຜະລິດ, ຜູ້ບໍລິໂພກ ແລະ ຊຸມຊົນເຮັດທຸລະກິດກະສິກຳ ຈຶ່ງຈະໄດ້ຮັບຂໍ້ມູນຂ່າວສານທ່າແຮງ ແລະ ໂອກາດດ້ານຕະຫຼາດດີຂຶ້ນ.

ໃນໄລຍະຍາວ, ເປົ້າໝາຍຈະເປັນການ ຊ່ວຍສ້າງສິ່ງອຳນວຍຄວາມສະດວກ ແລະ ຂໍ້ກຳນົດລະບຽບທີ່ຈຳເປັນ ເພື່ອຜົນທາງເສດຖະກິດເພີ່ມຂຶ້ນດ້ວຍການຈັດເກຣດ, ມາດຖານ, ແລະ ມາດຖານການປະຈຸບັນຫີບຫໍ່, ແລະ ໃນຮູບຂອງມາດຖານກົດລະບຽບສາກົນ ໃນດ້ານສຸກຂະອານາໄມ ແລະ ສາທາລະນະສຸກ. ຈຸດປະສົງເພື່ອປັບປຸງການຕະຫຼາດສິນຄ້າທີ່ເນົ່າເປື່ອຍໄວ, ການອຳນວຍຄວາມສະດວກການປັບປຸງແຕ່ງກະສິກຳ ແລະ ການຕະຫຼາດຂາ

ເຂົ້າ ແລະ ຂຸດຄົ້ນທ່າແຮງສຳລັບເພີ່ມສ່ວນແບ່ງຕະຫຼາດໃນດ້ານການຜະລິດ ແລະ ການບໍລິການສິນຄ້າ ໃນພື້ນທີ່ລຽບນ້ຳຂອງຕາມດ້ວຍປັບເຂົ້າກັບລະບຽບຂອງ AFTA ສຳລັບການຄ້າເສລີ.

(2) ຍຸດທະສາດໃນການພັດທະນາ.

ຍຸດທະສາດຕົ້ນຕໍສຳລັບການບັນລຸຂອງຈຸດປະສົງການຕະຫຼາດກະສິກຳ ຈະແມ່ນການສ້າງການຫາເຂົ້າຕະຫຼາດ, ຂ່າວສານດ້ານຕະຫຼາດ ແລະ ການບໍລິການດີຂຶ້ນ, ລຶບລ້າງສິ່ງລົບກວນຕະຫຼາດ ແລະ ຊ່ວຍອຳນວຍຄວາມສະດວກດ້ານບໍລິການ ແລະ ຂໍ້ກຳນົດກົດລະບຽບ, ບ່ອນທີ່ມີຄວາມຈຳເປັນໃນປະໂຫຍດຂອງການຄ້າ ແລະ ການຂະຫຍາຍຕະຫຼາດ.

ຍຸດທະສາດເປັນໄປຕາມການປະຕິບັດ 3 ປາຍແຫຼມຫຼັກຄື ສ້າງທາງເຂົ້າເຖິງຕະຫຼາດ, ໂດຍສະເພາະໃນເຂດພື້ນທີ່ຄ້ອຍຊັນ ແລະ ຊົນນະບົດຫ່າງໄກ; ສະໜອງຂໍ້ມູນດ້ານຕະຫຼາດ, ຈັດເກຣດ ແລະ ມາດຕະຖານ ເພື່ອຊຸກຍູ້ຄວາມສາມາດ ແລະ ຜະລິດຕະພັນການຄ້າທີ່ບໍ່ເຄີຍຮູ້ມາກ່ອນ. ວິທີການດັ່ງກ່າວຈະໄດ້ເຮັດຕາມມາໃນລະຫວ່າງໄລຍະແຜນປະຕິບັດການ.
ແຜນຍຸດທະສາດຂອງການປຸງແຕ່ງກະສິກຳຈະເປັນການ ຊ່ວຍການຝຶກອົບຮົມດ້ານເຕັກນິກ, ສິນເຊື່ອຊົນນະບົດສຳຊື້ອຸປະກອນ ແລະ ສ້າງອາຄານສະຖານທີ່ ກໍ່ຕັ້ງກຸ່ມກິດຈະກຳຢູ່ລະດັບຊຸມຊົນການສະໜັບສະໜູນການບໍລິການຕ່າງໆຢູ່ລະດັບຊຸມຊົນ. ການສະໜັບສະໜູນເຫຼົ່ານັ້ນຈະເຮັດໄດ້ດ້ວຍໂຄງການສົ່ງເສີມການປູກພືດຫຼາຍຊະນິດ ກໍຄືໂຄງການເລີ່ມຕົ້ນການພັດທະນາກະສິກຳຂອງໝູ່ບ້ານ. ນອກຈາກນັ້ນ, ການຝຶກອົບຮົມສຳລັບການປຸງແຕ່ງກະສິກຳ ຈະຕ້ອງໄດ້ເຮັດຢູ່ໂຮງຮຽນວິຊາຊີບຊາວນາຕິດຢູ່ກັບສູນຝຶກອົບຮົມກະສິກຳ ແລະ ປ່າໄມ້ ກໍຄືສູນເຕັກໂນໂລຊີການປຸງແຕ່ງກະສິກຳ ແລະ ຫຼັງເກັບກ່ຽວ.

(3) ຂັ້ນຕອນຈັດຕັ້ງປະຕິບັດ.

ການເນັ້ນການຈັດຕັ້ງປະຕິບັດ ຈະເປັນພື້ນຖານ ຂອງການປັບປຸງຕາໜ່າງຟາມຫາຕະຫຼາດ. ສຳລັບ ຄອບຄົວຊົນນະບົດສ່ວນໃຫຍ່ໃກ້ກັບທາງເຂົ້າເຖິງໃກ້ທີ່ສຸດ 6 ກິໂລແມັດຈາກທາງ. ຄາດຄະເນປະມານ 12,000 ພັນກິໂລແມັດ ຂອງທາງຊົນນະບົດຈະຕ້ອງໄດ້ສ້ອມແປງ ແລະ ເສັ້ນທາງ 7,200 ກິໂລແມັດ ຈະໄດ້ກໍ່ສ້າງໃໝ່ ພາຍໃຕ້ແຜນປະຕິບັດການ. ໄລຍະຂອງໂຄງການຈະໄດ້ເນັ້ນການເພີ່ມ ການກໍ່ສ້າງທາງໃໝ່ໃນຊ່ວງໄລຍະ 2001-2010 ບົນພື້ນຖານບັນທັດຖານຂອງໄລຍະທາງຂອງພົນລະເມືອງຈາກທາງເຂົ້າຫາໃກ້ທີ່ສຸດ. ໂຄງການ

ນີ້ ສະແດງໃຫ້ເຫັນໃນຫົວຂໍ້ການພັດທະນາຊົນນະບົດ, ແຕ່ວ່າອັນນີ້ແມ່ນທາງໃຫຍ່ທາຕະຫຼາດ. ແຕ່ຟາມທາທາງສູ່ຕະຫຼາດແມ່ນໄດ້ເນັ້ນໜັກ ເພາະວ່າຄວາມຕ້ອງການ ເພື່ອເຮັດໃຫ້ເຂົ້າຫາສູ່ຕະຫຼາດສຳລັບຄອບຄົວກະສິກຳ ທີ່ຍັງເປັນຄອບຄົວລ້ຽງກຸ້ມຕົນເອງ ສ່ວນໃຫຍ່ຍ້ອນຂາດທາງເຂົ້າສູ່ຕະຫຼາດ.

ແຜນການກໍ່ສ້າງຊ່ວຍ ສຳລັບສ້າງຕັ້ງລະບົບໄຫວພິບຂອງຕະຫຼາດສິນຄ້າ ເປັນຍຸດທະສາດໄລຍະສັ້ນ. ມີບາງວຽກພື້ນຖານໃນປັດຈຸບັນ ທີ່ໄດ້ດຳເນີນພາຍໃຕ້ການຊ່ວຍເຫຼືອດ້ານວິຊາການເພື່ອສຶກສາໂຄງສ້າງສຳລັບສະຖານທີ່ເຫຼົ່ານັ້ນ. ລະບົບຈະໃຊ້ສື່ມວນຊົນ ສຳລັບສົ່ງຂ່າວສານຂໍ້ມູນສິນຄ້າ, ໂດຍສະເພາະຂ່າວສານດ້ານລາຄາ ແລະ ບໍລິມາດ ເພື່ອແຈ້ງໃຫ້ຜູ້ຜະລິດ, ພໍ່ຄ້າ ແລະ ຜູ້ປຸງແຕ່ງທີ່ມີ, ສະຖານທີ ແລະ ລາຄາຂອງການຜະລິດກະສິກຳ ບົນພື້ນຖານແຕ່ລະວັນລະບົບຂໍ້ມູນຂ່າວສານດ້ານຕະຫຼາດ ຈະສ້າງຕາໜ່າງສຳລັບເກັບກຳລາຄາ ແລະ ບໍລິມາດຂໍ້ມູນຈາກການຜະລິດຕ່າງໆ ຈຸດຂາຍຍົກ ແລະ ຂາຍຍ່ອຍ. ລະບົບກໍຈະຕິດຕາມ ແລະ ລາຍງານດ້ານການຄ້າຜົນຜະລິດກະສິກຳ ຂ້າມຊາຍແດນຂອງປະເທດ ແລະ ສະໜອງຂໍ້ມູນດ້ານບໍລິມາດ, ລັກສະນະສະເພາະຂອງຜະລິດຕະພັນ ແລະ ລາຄາຂອງສິນຄ້າທີ່ຄ້າຂາຍໃນຕະຫຼາດສາກົນ.

ໃນໄລຍະສັ້ນກໍເໝືອນກັນ, ຈຶ່ງສະເໜີວ່າບາດກ້າວເລີ່ມຕົ້ນ ສ້າງຕັ້ງການຈັດເກຣດຜະລິດຕະພັນ ແລະ ມາດຖານສຳລັບການຜະລິດກະສິກຳ ແລະ ລ້ຽງສັດ. ລະບົບເຊັ່ນນີ້ຈະສາມາດ ແລະຊຸກຍູ້ການແຂ່ງຂັນສົ່ງອອກກໍ່ຄືອຳນວຍຄວາມສະດວກແກ່ການຂາຍ ຜົນຜະລິດກະສິກຳ. ໂດຍສະເພາະ, ລະບົບລັກສະນະນີ້ ໃນເມື່ອພັດທະນາໄດ້ດີຈະສາມາດ ເຫັນໄດ້ພາບການຄ້າທີ່ບໍ່ເຄີຍພົບພໍ້ມາກ່ອນທັງພາຍໃນ ແລະ ສາກົນ.

ໃນທັດສະນະຂອງການລົມທຽບໄດ້ປຽບ ກໍຄືການທ່ອງທ່າການແຂ່ງຂັນໂດຍທົ່ວໄປຂອງພືດສິນຄ້າທັງໝົດ, ໂຄງການໄດ້ວາງຕາຕະລາງສຳລັບແຜນປະຕິບັດການແຕ່ຫົວທີເພື່ອສຶກສາທ່າແຮງຕະຫຼາດ, ໂດຍສະເພາະຕະຫຼາດສົ່ງອອກສຳລັບຂອບເຂດຂອງສິນຄ້າກະສິກຳເປັນຕົ້ນໝາກໄມ້ ແລະ ຜັກໃນເຂດຮ້ອນ. ໂຄງການຈະສ້າງສິ່ງອຳນວຍຄວາມສະດວກເໝືອນກັນ, ບົນພື້ນຖານການສຶກສາ ເພື່ອໃຫ້ຄຳແນະນຳດ້ານເຕັກນິກ ແກ່ຜູ້ຜະລິດແກ່ນສານກໍຄືຄຳແນະນຳດ້ານຕະຫຼາດຂອງການຜະລິດ.

ເຄື່ອງປ່າຂອງດົງກາຍເປັນແຫຼ່ງສິນຄ້າທີ່ສົ່ງອອກທີ່ສຳຄັນເພີ່ມຂຶ້ນ ແລະ ທ່າແຮງທີ່ສາມາດຂະຫຍາຍຂະໜາດໄດ້ ໃນການຜະລິດ ແລະ ການສົ່ງອອກເຄື່ອງປ່າຂອງດົງ. ການສົ່ງເສີມເຄື່ອງປ່າຂອງດົງຈະຖືວ່າເປັນແຫຼ່ງລາຍຮັບ ເພີ່ມເຕີມສຳລັບປະຊາຊົນຊົນນະບົດ. ເຖິງແມ່ນວ່າຜົນຜະລິດເຄື່ອງປ່າຂອງດົງ, ບໍ່ທັນໄດ້ດຳເນີນການສຶກສາລະອຽດ ເພື່ອປະເມີນທ່າແຮງສຳລັບການຜະລິດ. ໂຄງການກໍໄດ້ ຮວມເອົາການສຶກສາທ່າແຮງຂອງຕະຫຼາດເຄື່ອງປ່າຂອງດົງ ທັງຕະຫຼາດພາຍໃນປະເທດ ແລະ ຕະຫຼາດສາກົນ. ການສຶກສາລັກສະນະນີ້ ຈະທົດສອບເບິ່ງທ່າແຮງສຳລັບການປຸງແຕ່ງ ແລະ ກິດຈະກຳ ການສ້າງມູນຄ່າເພີ່ມເໝືອນກັນ.

ແຜນປະຕິບັດການ ຊ່ວຍສຳລັບສ້າງສິ່ງອຳນວຍຄວາມສະດວກໃນຍຸດທະສາດໃນໄລຍະຍາວ ສຳລັບຊ່ວຍເຫຼືອພື້ນຖານຊຸມຊົນ ດ້ານກິດຈະກຳໃນການປຸງແຕ່ງກະສິກຳກັບທ່າແຮງລັກສະນະລາຍຮັບເພີ່ມຂອງຄອບຄົວຊົນນະບົດ. ຈຶ່ງສະເໜີໃຫ້ເອົາກິດຈະກຳປຸງແຕ່ງກະສິກຳນີ້ຕິດກັບໂຄງ ການ ການເງິນຂະໜາດນ້ອຍ ແລະ ໃຫ້ຄວາມສະດວກດ້ານສິນເຊື່ອສຳລັບຊຸມຊົນນະບົດ ກັບທ່າແຮງສຳລັບການເລີ່ມຕົ້ນກິດຈະກຳປຸງແຕ່ງ. ໄດ້ມີການສະເໜີສຳລັບການຊ່ວຍເຫຼືອສຳລັບຊາວນາ ໃນກຸ່ມຂອງຟາມເໝືອນກັນ ສຳລັບຊື້ ແລະ ຂາຍຂາເຂົ້າ ແລະ ຜົນກະສິກຳ ດັ່ງນັ້ນຈຶ່ງເຮັດໃຫ້ພະລັງການຕໍ່ລອງສູງຂຶ້ນ ແລະ ລາຄາໃນຕະຫຼາດດີຂຶ້ນ. ແຜນປະຕິການກໍເປີດທາງໃຫ້ສຳລັບການສ້າງຕັ້ງ ມາດຕະການສຸກຂະອານາໄມອາຫານ ແລະ ລະບົບການກວດກາ ກັບອຸປະກອນສຳລັບທົດລອງ, ຝຶກອົບຮົມພະນັກງານໃນດ້ານມາດຖານສຸຂະອາອາໄມອາຫານ ແລະ ລະບົບການກວດກາ ທີ່ຈະຂະຫຍາຍການກວດກາຄວບຄຸມຄຸນນະພາບສຳລັບສະຖານທີ່ປຸງແຕ່ງອາຫານ.

ກິດຈະກຳສ້າງມູນຄ່າເພີ່ມກະສິກຳທັງໝົດ ມີທ່າແຮງ ສຳລັບການພັດທະນາ ແຕ່ວ່າ ຍັງຂາດຄວາມຮູ້ວິຊາການ ທາງດ້ານທີ່ເປັນທ່າແຮງ, ອຸປະກອນ, ເຄື່ອງຈັກ ແລະ ວັດຖຸດິບ. ທຸລະກິດເອກະຊົນຂະໜາດນ້ອຍຕ້ອງການຄວາມຊ່ວຍເຫຼືອ ດ້ວຍການສະໜອງຂໍ້ມູນດ້ານປຸງແຕ່ງ ແລະ ກິດຈະກຳຕ່າງໆທີ່ເກັບກ່ຽວ. ບໍລິສັດທຸລະກິດຂະໜາດນ້ອຍສາມາດໄດ້ຮັບພ້ອມກັບຂໍ້ມູນຂ່າວສານ ກໍຄື ການສຶກສາຄວາມເປັນໄປໄດ້ ໃນກິດຈະກຳປຸງແຕ່ງກະສິກຳຫຼາຍຢ່າງ, ຈັດຫາໃຫ້ຂໍ້ມູນຂ່າວສານຂອງຕະຫຼາດ ແລະ ການປະເມີນຕະຫຼາດ ແລະ ແມ້ກະທັ້ງຂອງການຊ່ວຍເຫຼືອບໍລິສັດດ້ວຍການຊອກຫາຜູ້ຊື້ ຜະລິດຕະພັນທັງພາຍໃນ ແລະ ຕະຫຼາດສົ່ງອອກ. ສູນບໍລິສັດທຸລະກິດຂະໜາດນ້ອຍ ສະເໜີຢູ່ພາຍໃຕ້ແຜນປະຕິບັດການໃນຍຸດທະສາດໄລຍະຍາວ ເພື່ອໃຫ້ການບໍລິການແກ່ບໍລິສັດຂະໜາດນ້ອຍ.

**(4) ຄາດຄະເນຜົນທີ່ໄດ້ຮັບ.**

ຜົນກະທົບສ່ວນໃຫຍ່ທີ່ຄາດເອົາໄວ້ຈາກການກໍ່ສ້າງ ແລະ ສ້ອມແປງຂອງເສັ້ນທາງ. ໂຄງການປັບປຸງເສັ້ນທາງຊົນນະບົດຈະເປີດພື້ນທີ່ຊົນນະບົດ, ສ້າງຕະຫຼາດສຳລັບຜົນຜະລິດກະສິກຳສ່ວນເກີນ ແລະ ສຳລັບຊື້ຂາເຂົ້າ ແລະ ຊ່ວຍການກະຕຸກຊຸກຍູ້ ສຳລັບເພີ່ມການຜະລິດ. ໂຄງການທາງກໍ່ຈະສ້າງການເຂົ້າຫາງ່າຍຂຶ້ນເໝືອນກັນ ເພື່ອຄວາມສຸກຂອງສັງຄົມ ເປັນຕົ້ນການສຶກສາ ແລະ ການບໍລິການດ້ານຢຸກຢາ.

ລະບົບຂໍ້ມູນດ້ານຕະຫຼາດ ຕ້ອງເຮັດໃຫ້ຂໍ້ມູນດ້ານຕະຫຼາດດີຂຶ້ນ ໂດຍທີ່ວ່າຈະຊ່ວຍຜູ້ຜະລິດ, ຜູ້ປຸງແຕ່ງ ແລະ ຜູ້ບໍລິໂພກ ໃນການຕັດສິນໃຈ ແລະ ສັນຍານດ້ານລາຄາ. ຂໍ້ມູນດ້ານຂ່າວສານດີຂຶ້ນ ກໍ່ຈະຊ່ວຍຕະຫຼາດ ແລະ ການທຳນາຍດ້ານລາຄາດີຂຶ້ນ ແລະ ບາງຄັ້ງກໍ່ເພີ່ມແຮງຊື້ຕະຫຼາດຂອງຊາວກະສິກອນ ໃນພື້ນທີ່ຊົນນະບົດ.

ການອົບຮົມດ້ານວິຊາການ ດ້ານຫຼັງການເກັບກ່ຽວ ແລະ ການປຸງແຕ່ງກະສິກຳ ແລະ ການເງິນຂະໜາດນ້ອຍຈະສ້າງກິດຈະກຳພື້ນຖານມູນຄ່າເພີ່ມຂອງກະສິກຳທົ່ວໄປ ແລະ ຈາກໝາກຜົນດັ່ງກ່າວ ລາຍຮັບຂອງຟາມ ແລະ ເສດຖະກິດຊົນນະບົດ ຈະໄດ້ຮັບການປັບປຸງ ແລະ ມີສະຖຽນລະພາບ.

## 6.9 ການເງິນຊົນນະບົດ.

**(1) ຈຸດປະສົງການພັດທະນາ.**

ຈຸດປະສົງເບື້ອງຕົ້ນຂອງໂຄງການການເງິນຊົນນະບົດ ແມ່ນເພື່ອສ້າງສະຖາບັນການບໍລິການ ດ້ານການເງິນຊົນນະບົດໃຫ້ມີ ໃຫ້ແກ່ພົນລະເມືອງໃນເຂດຊົນນະບົດທີ່ເປັນພາກສ່ວນໃຫຍ່ ແລະກ້ວາງຂວາງ. ການສຳຫຼວດໃນມໍ່ໆມານີ້, 95% ຂອງສິນເຊື່ອຊາວນາ ໄດ້ມາຈາກຄອບຄົວ, ເພື່ອນຝູງ, ຜູ້ໃຫ້ເງິນກູ້ ແລະ ກອງທຶນໝູນວຽນຂອງບ້ານ ແລະ ມີພຽງແຕ່ 10% ໄດ້ມາຈາກທະນາຄານ.

ຈຸດປະສົງຕົ້ນຕໍ ແມ່ນ ເພື່ອບັນລຸຜົນສຳເລັດ ດ້ວຍການເຮັດໃຫ້ສະຖາບັນການເງິນທີ່ມີໃນປັດຈຸບັນ ແລະ ສະຖາບັນການເງິນໃໝ່ ຕອບສະໜອງແກ່ຄວາມຕ້ອງການຂອງພາກສ່ວນຊົນນະບົດ ດ້ວຍການປ່ຽນແປງກົນໄກການລະດົມການຝາກເງິນແນວໃໝ່ ແລະ ເງິນກູ້ການຜະລິດ. ສະຖາບັນການເງິນຮັບໃຊ້ຄວາມຕ້ອງການ ຂອງປະຊາຊົນເຮັດຟາມກວມພຽງແຕ່ 10% ເທົ່ານັ້ນ ຂອງຊາວກະສິກອນທັງໝົດໃນ ສປປລາວ ແລະ ທະນາຄານການຄ້າບໍ່ໄດ້

ຂະຫຍາຍການບໍລິການຢ່າງກ້ວາງຂວາງ ຫຼື ໃຫ້ເງິນກູ້ການຜະລິດ ໃຫ້ພຽງພໍກັບຄວາມຕ້ອງການຂອງຊຸມຊົນທີ່ເຮັດຟາມ.

ທະນາຄານທຸລະກິດ ຂອງລັດແມ່ນອ່ອນທາງດ້ານການເງິນ, ມີຊ່ຽວຊານ ແລະ ພະນັກງານຈຳກັດ ແລະ ລະດັບການປະຫຍັດ ແລະ ການຝາກຕໍ່າ. ທະນາຄານສົ່ງເສີມກະສິກຳ (ທສກ) ປັດຈຸບັນໃຫ້ເງິນກູ້ປະມານ 5% ຂອງຄອບຄົວຊົນນະບົດ. ເຖິງຢ່າງໃດກໍຕາມ ມັນເປັນການກະຕຸກກະຕັກຫຼາຍຢ່າງກັບການຄຸ້ມຄອງການເງິນ, ການປະຕິບັດກັບເງິນກູ້, ການໃຊ້ແທນເງິນກູ້ ແລະ ບັນຫາການພັດທະນາທຸລະກິດ. ທສກ ຂຶ້ນກັບທຶນຂອງລັດຖະບານ ສຳລັບໃຫ້ກູ້ຢືມປະມານ 80%. ໃນໄລຍະສັ້ນມັນມີຄວາມຈຳເປັນ ເພື່ອໃຫ້ທະນາຄານທຸລະກິດ ແລະ ທສກ ຮັບໃຊ້ຄວາມຕ້ອງການຂອງຄອບຄົວຊົນນະບົດດີຂຶ້ນ.

(2) **ຍຸດທະສາດ.**

ຍຸດທະສາດແມ່ນປັບປຸງປະສິດທິຜົນ ທົ່ວທັງໝົດຂອງສະຖາບັນການເງິນ ທີ່ມີໃນປັດຈຸບັນດ້ວຍການປັບປຸງຄືນ ແລະ ເຮັດໃຫ້ການປະຕິບັດຂອງທະນາຄານເຫຼົ່ານັ້ນ ປັບເຂົ້າໃຫ້ແທດເໝາະກັບຄວາມຕ້ອງການຂອງຄອບຄົວຊາວຊົນນະບົດຫຼາຍຂຶ້ນ. ໃນຊ່ວງໄລຍະສັ້ນຫາໄລຍະກາງ, ໄລຍະນີ້ໝາຍຄວາມວ່າປັບປຸງທີ່ຕັ້ງການເງິນຂອງທະນາຄານ, ປັບປຸງລະບົບການຄຸ້ມຄອງ ແລະ ການບັນຊີ, ການປະເມີນຄວາມສ່ຽງຂອງສິນເຊື່ອ, ປະເມີນຜູ້ກູ້ຢືມ ແລະ ການວິເຄາະກະແສເງິນ. ຕ້ອງມີການປ່ຽນແປງນະໂບາຍ ແລະ ການປະຕິບັດການຂອງ ທສກ ໜ້ອຍນຶ່ງເໝືອນກັນ ແລະ ຈຳກັດການຊົດເຊີຍ ສຳລັບສິນເຊື່ອກະສິກຳ. ພ້ອມນັ້ນກໍຕ້ອງໄດ້ຝຶກອົບຮົມພະນັກງານທະນາຄານເໝືອນກັນ ທາງພາກການປະຕິບັດຂອງທະນາຄານການຄ້າ.

ໃນໄລຍະຍາວ, ຕ້ອງໄດ້ສ້າງກຸ່ມປະຫຍັດ ແລະ ກຸ່ມສິນເຊື່ອ ດ້ວຍການຕີລາຄາໝູ່ບ້ານທີ່ມີກອງທຶນໝູນວຽນໃນປັດຈຸບັນ ເພື່ອປ່ຽນໃຫ້ເປັນຕົນເປັນໂຕຂຶ້ນ, ມີປະສິດທິຜົນຫຼາຍກ່ວາເກົ່າຄືດ້ານນຶ່ງເປັນກຸ່ມປະຫຍັດ ແລະ ດ້ານນຶ່ງເປັນກຸ່ມສິນເຊື່ອ. ລະບົບການເງິນຂະໜາດນ້ອຍເພື່ອບໍລິການໃຫ້ແກ່ຄວາມຕ້ອງການຂອງຄອບຄົວຊົນນະບົດ ໃນການແຂ່ງຂັນກັບທະນາຄານອື່ນ ກໍຕ້ອງການສ້າງຕັ້ງຂຶ້ນເໝືອນກັນ. ໂຄງການສິນເຊື່ອ ຂະໜາດນ້ອຍຂອງ UNDP ທີ່ກຳລັງດຳເນີນຢູ່ໃນປັດຈຸບັນ ແມ່ນຈຸດເລີ່ມຕົ້ນທີ່ດີ.

(3) ຂັ້ນຕອນໃນການປະຕິບັດ.

ໃນໄລຍະສັ້ນ, ໄດ້ສະເໜີວ່າຂັ້ນຕອນ ໃນການຊ່ວຍທະນາຄານທຸລະກິດຂອງລັດ ເພື່ອແນະນຳໃຫ້ການປະຕິບັດຂອງທະນາຄານດີຂຶ້ນ ຕ້ອງສືບຕໍ່ ແລະ ການຊ່ວຍເຫຼືອຈາກຕ່າງປະເທດຕໍ່ດ້ານນີ້ຄາດວ່າສືບຕໍ່. ວຽກນີ້ຕ້ອງສ້າງຄວາມເປັນໄປໄດ້ໃນການປັບປຸງຂອງການດຳເນີນການພາກປະຕິບັດຂອງທະນາຄານການຄ້າລັດ. ການຝຶກອົບຮົມພະນັກງານທະນາຄານທຸລະກິດລັດ ໄດ້ດຳເນີນການແລ້ວ ຢູ່ສູນຝຶກອົບຮົມທະນາຄານ ສປປລາວ ແລະ ການຝຶກອົບຮົມຄູຝຶກນີ້ ກໍໄດ້ວາງແຜນຕາຕະລາງສືບຕໍ່ ເພື່ອຍົກລະດັບຄວາມອາດສາມາດ ດ້ານເຕັກນິກຂອງ ພະນັກງານທະນາຄານທຸກຄົນ. ການປັບປຸງຄືນ ແລະ ເປັນບໍລິສັດຂອງທະນາຄານທຸລະກດລັດ ກໍຄືການປັບປຸງການປະຕິບັດການຕົວຈິງ ຂອງທະນາຄານທຸລະກິດລັດ ຄວນເຮັດໃຫ້ທະນາຄານທຸລະກິດລັດ ສາມາດຂະຫຍາຍສາຂາ ແລະ ກົນໄກການລະດົມເງິນຝາກ ແລ້ວເພື່ອຂະຫຍາຍໃຫ້ເປັນພື້ນຖານການຝາກເງິນ ແລະ ໃຫ້ກູ້ຢືມເງິນ. ການຊ່ວຍເຫຼືອທາງດ້ານວິຊາການ ກໍສະເໜີໃຫ້ ຊ່ວຍທະນາຄານທຸລະກິດ ລັດ ໃນວຽກດັ່ງກ່າວນີ້. ນອກຈາກນັ້ນ ກໍໄດ້ສະເໜີ ເງິນກູ້ການຜະລິດ ສຳລັບຂະແໜງການຍ່ອຍລ້ຽງປາ ແລະ ລ້ຽງສັດ ຈະຕ້ອງໄດ້ພັດທະນາ ແລະ ທົດລອງ ເຮັດໂດຍທະນາຄານທຸລະກິດ ຂອງລັດ.

ການຊ່ວຍເຫຼືອດ້ານວິຊາການໃນປັດຈຸບັນ ກຳລັງຊ່ວຍປັບປຸງທະນາຄານ ທລສກ ແລະ ການສຶກສາພະຍາກອນຂອງທຸກແງ່ມູມຂອງການປະຕິບັດການຂອງ ທລສກ ລວມທັງການລະດົມການຝາກ ແລະ ນະໂຍບາຍເງິນກູ້ ແລະ ຂັ້ນຕອນຕ່າງໆກຳລັງສຶກສາ. ບົດລາຍງານລະອຽດພ້ອມດ້ວຍຄຳຄິດຄຳເຫັນ ສຳລັບການປັບປຸງຂອງ ທລສກ ກໍໄດ້ຢູ່ແຜນໄລຍະສັ້ນ. ໄດ້ສະເໜີຂໍ້ແນະນຳໃຫ້ປະຕິບັດໃນໄລຍະສັ້ນຫາໄລຍະກາງ. ພາຍໃຕ້ໂຄງການໂດຍທະນາຄານພັດທະນາສາກົນ, ດ້ວຍການສະໜອງທຶນຄືນໃໝ່, ຖ້າຫາກຈຳເປັນ. ການປັບປຸງຄືນຂອງ ທລສກ ດັ່ງຕໍ່ໄປນີ້, ໄດ້ສະເໜີວ່າການຈັດຕັ້ງປະຕິບັດໂຄງການ ເພື່ອນຳໃຊ້ເປັນເງິນກູ້ການຜະລິດ ໂດຍສະເພາະອອກແບບ ເພື່ອພາກສ່ວນຊົນນະບົດ, ທັງນຳໃຊ້ວິທີການແບບເປ ັນກຸ່ມຫຼື ພະນັກງານສິນເຊື່ອເຄື່ອນຍ້າຍ ດ້ວຍການເອົາໃຈໃສ່ບໍລິການເງິນກູ້ ດ້ວຍການຮັກສາຄ່າບໍລິການ ທີ່ແຂ່ງຂັນໄດ້ ແລະ ເທົ່າທຽມກັບ ຄ່າບໍລິການຂອງສາຂາທະນາຄານ.

ໃນໄລຍະກາງຫາໄລຍະຍາວກ່ວາ ໄດ້ສະເໜີວ່າ ທະນາຄານການຄ້າຂອງລັດ ກໍເຮັດຕາມ ທລສກ ໃນການຈັດຫາໃຫ້ເງິນກູ້ການຜະລິດ ແກ່ພາກສ່ວນຊົນນະບົດທີ່ນຳໃຊ້ພະນັກງານສິນເຊື່ອເຄື່ອນທີ່ ແລະ ວິທີການເປັນກຸ່ມ ດ້ວຍຈຸດປະສົງຂອງການຮັກສາຄ່າບໍລິການໃນການແຂ່ງຂັນເງິນກູ້ກັບເງິນກູ້ການຜະລິດອື່ນໆ.

ໂຄງການທີ່ໄດ້ສະເໜີ ແມ່ນໄດ້ດຳເນີນການປະເມີນ ທຶນໝູນວຽນຂອງບ້ານທັງໝົດ ເພື່ອກຳນົດທຶນທີ່ມີ ແລະ ກຳໄລຂອງທຶນໝູນວຽນບ້ານ ທີ່ສາມາດປ່ຽນເປັນກຸ່ມທຶນປະຢັດ ແລະ ກຸ່ມສິນເຊື່ອ. ການປະເມີນນີ້ຈຶ່ງສະເໜີວ່າ ໂຄງການໄດ້ຕັ້ງຂຶ້ນຕາມກົດໝາຍ ເຮັດການຄັດເລືອກທຶນພັດທະນາບ້ານເຂົ້າໃນກຸ່ມປະຫຍັດ ແລະ ກຸ່ມສິນເຊື່ອ. ກຸ່ມເຫຼົ່ານີ້ຈະໄດ້ຮັບການຝຶກອົບຮົມຢູ່ສູນຝຶກອົບຮົມດ້ານການເງິນຂະໜາດນ້ອຍ. ການສ້າງຕັ້ງກຸ່ມປະຫຍັດ ແລະ ກຸ່ມສິນເຊື່ອຂຶ້ນໃໝ່ ຈະຕ້ອງໄດ້ຮັບການຊຸກຍູ້ຂຶ້ນພາຍໃຕ້ໂຄງການທີ່ໄດ້ສະເໜີມານີ້. ໃນເວລາດຽວກັນນັ້ນໂຄງການຊ່ວຍເຫຼືອຂອງ UNDP ດ້ານການເງິນສິນເຊື່ອຂະໜາດນ້ອຍ ຈະຕ້ອງໄດ້ຂະຫຍາຍໃຫ້ກວມທຸກແຂວງ ແລະ ຈະໄດ້ຮັບຮອງທຸກການສ້າງຕັ້ງແຍກທະນາຄານສຳລັບການເງິນປະຫຍັດ ແລະ ເງິນກູ້ຂະໜາດນ້ອຍ.

(4) **ຄາດຄະເນຜົນທີ່ໄດ້ຮັບ.**

ຄາດຄະເນໄດ້ວ່າ ການປະຕິບັດການປະຕິຮູບ ແລະ ການປັບປຸງໂຄງສ້າງຄືນຂອງ ທະນາຄານການຄ້າລັດ ຈະເປັນຂະບວນການໄລຍະຍາວໃນຫຼາຍປີ. ການປັບປຸງໂຄງສ້າງຄືນ ແລະ ຫັນເປັນບໍລິສັດ ໃນເມື່ອສຳເລັດຈະນຳໄປສູ່ການພັດທະນາເງິນກູ້ການຜະລິດ ເພື່ອໃຫ້ແທດເໝາະກັບຄວາມຕ້ອງການຂອງຊຸມຊົນຜູ້ເຮັດຟາມ. ການປັບປຸງໂຄງສ້າງຂອງ ທສກ ຈະເກີດຂຶ້ນຫຼັງຈາກ ການໃຫ້ຄຳຄິດຄຳເຫັນ ດ້ານການສຶກສາການທຳນາຍໄດ້ຮັບຮອງເອົາແລ້ວ ແລະ ການຕົກລົງເຫັນດີນຳ ໂດຍອຳນາດການຈັດຕັ້ງກ່ຽວຂ້ອງ ແລະ ຈະກິນເວລາຫຼາຍປີ. ວຽກນີ້ຈະມີທັງພະນັກງານໃນທະນາຄານ, ກໍຄື ຄວາມເປັນໄປໄດ້ຂອງຄວາມຕ້ອງການປົດເງິນກູ້ທີ່ບໍ່ເຄື່ອນໄຫວເຖິງຢ່າງໃດກໍຕາມ, ຄິດວ່າຜົນຮັບອັນນີ້ຈະແກ່ຍາວ ແລະ ຊັກຊ້າຜົນໄລຍະກາງ ຄືວ່າລະບົບທະນາຄານຈະມີປະສິດທິຜົນກ່ວາ ຄືການສະໜອງຕາມຄວາມຕ້ອງການຂອງຊຸມຊົນຟາມເໝືອນກັນ.

ການພັດທະນາລະບົບການເງິນຂະໜາດນ້ອຍ ແລະ ການປ່ຽນແປງຂອງກຸ່ມປະຫຍັດ ແລະ ກຸ່ມສິນເຊື່ອໄປເປັນສະຖາບັນການເງິນຊົນນະບົດກໍຄືວ່າຈະເປັນຂັ້ນຕອນການຊັກຊ້າ ທີ່ພົວພັນເຖິງການສ້າງຄວາມອາດສາມາດ. ເຖິງຢ່າງໃດກໍຕາມ, ໃນໄລຍະຍາວ ຈຶ່ງຄາດໄວ້ວ່າຈະເກີດຜົນປະໂຫຍດຫຼາຍດ້ານ ແລະ ທຳໜ້າທີ່ໄດ້ດີ ຂອງທະນາຄານປະຫຍັດ ແລະ ສິນເຊື່ອດ້ວຍການມີທະນາຄານການເງິນຊົນນະບົດ.

ທາງດ້ານກົດໝາຍ, ດ້ານນິຕິໃນສຳລັບການສະສາງໜີ້ສິນ ແລະ ການຮັບປະກັນການບັງຄັບ ແລະ ກົດໝາຍພື້ນຖານ ສຳລັບການແລກປ່ຽນເງິນ ແລະ ການຈັດເວລາຈ່າຍເງິນ ແລະ ການໃຫ້ເງິນກູ້ ກໍຄື ການແນະນຳລະບົບຄ້ຳປະກັນເງິນຝາກ ແລະ ຫ້ອງການຂ່າວສານຂໍ້ມູນດ້ານສິນເຊື່ອ ທັງໝົດນັ້ນຈະຊ່ວຍເຮັດໃຫ້ສະພາບແວດລ້ອມສ້າງຄວາມສາມາດຫຼາຍຂຶ້ນສຳລັບທະນາຄານເພື່ອຂະຫຍາຍສູ່ພື້ນທີ່ເຂດຊົນນະບົດ.

## 6.10 ການພັດທະນາຊົນນະບົດ.

### (1) ຈຸດປະສົງຂອງການພັດທະນາຊົນນະບົດ.

ອີງຕາມຜົນຂອງການສຳຫຼວດ ດ້ານການໃຊ້ຈ່າຍ ແລະ ການບໍລິໂພກຂອງລາວ ໃນປີ 1997/98 (LECS), ມັນມີຄວາມແຕກຕ່າງຢ່າງກ້ວາງຂວາງລະຫວ່າງຊົນນະບົດ ແລະ ຕົວເມືອງໃນ ສປປລາວ, ຕົວຊີ້ບອກທາງດ້ານເສດຖະກິດສັງຄົມ. ຕົວຢ່າງ, ຄົວເຮືອນທີ່ມີນ້ຳສະອາດ (ນ້ຳປະປາ ຫຼື ນ້ຳສ້າງທີ່ໄດ້ຮັບການປ້ອງກັນ) ມີ 77% ໃນເຂດໃນເມືອງ ແລະ 45% ໃນເຂດຊົນນະບົດ, ບ້ານທີ່ເຂົ້າເຖິງທາງໃຫຍ່ 100% ໃນເຂດຕົວເມືອງ ແລະ 44% ໃນເຂດຊົນນະບົດ (ໃນລະດູຝົນ), ບ້ານທີ່ມີໄຟຟ້າ 91% ໃນເຂດຕົວເມືອງ ແລະ 19% ໃນເຂດຊົນນະບົດ, ແລະ ບ້ານທີ່ມີໂຮງຮຽນປະຖົມສົມບູນ 60% ໃນເຂດຕົວເມືອງ ແລະ 42%ໃນເຂດຊົນນະບົດ. ຢູ່ພາຍໃຕ້ຄວາມທຸກຍາກດ້ານການມີໂຄງລ່າງໃນເຂດພື້ນທີ່ຊົນນະບົດບ່ອນທີ່ມີພົນລະເມືອງຫຼາຍກ່ວາ 80% ອາໄສຢູ່, ການພັດທະນາຊົນນະບົດເປັນບັນຫາທີ່ສຳຄັນ ໃນໄລຍະຍາວສຳລັບ ສປປລາວ. ຈາກທັດສະນະຂ້າງເທິງນັ້ນ, ໂຄງການພັດທະນາຊົນນະບົດທີ່ຄ້າຍໆກັນນີ້ ທີ່ກຳລັງດຳເນີນຢູ່ຕາມຈຸດສຸມຕ່າງໆຈະຕ້ອງຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງໃນອະນາຄົດ. ໂຄງການສຳລັບພັດທະນາຊົນນະບົດນີ້ຈະຕ້ອງໄດ້ປະຕິບັດໃນເຂດບ້ານທຸກຈົນຫ່າງໄກສອກຫຼີກ ດ້ວຍການພັດທະນາກໍ່ສ້າງໂຄງລ່າງ ເພື່ອເຮັດໃຫ້ຫຼຸດຜ່ອນຄວາມທຸກຈົນໃນເຂດຊົນນະບົດ ແລະ ປັບປຸງຊີວິດການເປັນຢູ່ຂອງພົນລະເມືອງໃນເຂດຊົນນະບົດ. ຢູ່ກັບໂຄງການນີ້, ໂຄງລ່າງທາງສັງຄົມທຸກຊະນິດເປັນຕົ້ນທາງຊົນນະບົດ, ໂຮງຮຽນ, ໂຮງໝໍ ແລະ ສິ່ງອຳນວຍຄວາມສະດວກໃນການສະໜອງນ້ຳ ຈະຕ້ອງໄດ້ສ້າງບົນພື້ນຖານຄວາມຕ້ອງການ ຂອງປະຊາຊົນໃນທ້ອງຖິ່ນອາໄສຢູ່ໃນໝູ່ບ້ານທຸກຈົນຫ່າງໄກ.

ແນວໃດກໍຕາມ ໃນກໍລະນີຂອງເຂດທ່າແຮງ ສຳລັບການພັດທະນາກະສິກຳ, ມີຫຼາຍວິທີທາງທີ່ແຕກຕ່າງກັນດ້ານເປົ້າໝາຍການພັດທະນາກະສິກຳການຕະຫຼາດ ກໍມີຄວາມຕ້ອງການ. ວິທີການດັ່ງກ່າວນີ້, ບຸລິມະສິດຈະໃຫ້ແກ່ການກໍ່ສ້າງທາງຊົນນະບົດ ສຳລັບພັດທະນາກະສິກຳໃນເຂດຊົນນະບົດທີ່ມີທ່າແຮງ. ທາງຊົນນະບົດເປັນອົງປະກອບແກ່ນສານ ສຳລັບປັບປຸງ

ການເຂົ້າຫາໃນເຂດພື້ນທີ່ຫ່າງໄກ. ຜົນຈາກການວິເຄາະຂໍ້ມູນການສຳຫຼວດ LECS ສະແດງໃຫ້ເຫັນວ່າ ມີການພົວພັນກັນສູງຫຼາຍລະຫວ່າງຄວາມທຸກຍາກ (ຮວມທັງລາຍຮັບກະສິກຳ) ແລະ ການເຂົ້າຫາຂອງຜູ້ທຸກ[2]. ຈຸດປະສົງຂອງການພັດທະນາຊົນນະບົດພາຍໃຕ້ວິທີການດັ່ງກ່າວນີ້ ແມ່ນເພື່ອສົ່ງເສີມການກະສິກຳສູ່ຕະຫຼາດໃນເຂດພື້ນທີ່ທີ່ມີທ່າແຮງ ໃນຊົນນະບົດ, ແລະ ຜ່ານການພັດທະນາກະສິກຳ, ເພື່ອຍົກລະດັບຊີວິດການເປັນຢູ່ ແລະ ຫຼຸດຜ່ອນຄວາມທຸກຍາກໃນໝູ່ບ້ານຫ່າງໄກ. ຕໍ່ວິທີການດັ່ງກ່າວນີ້, ການກະສິກຳລ້ຽງກຸ້ມຕົນເອງໃນປັດຈຸບັນໃນໝູ່ບ້ານຫ່າງໄກ ຈະຫັນສູ່ການກະສິກຳຕະຫຼາດ.

**(2) ຍຸດທະສາດການພັດທະນາຊົນນະບົດ.**

ເພື່ອເຮັດໃຫ້ຈຸດປະສົງຂ້າງເທິງບັນລຸເປົ້າໝາຍ ສຳລັບການພັດທະນາຊົນນະບົດ, ຈຶ່ງໄດ້ວາງຍຸດທະສາດດັ່ງລຸ່ມນີ້:

**(a) ຍຸດທະສາດທົ່ວໄປ.**

- ແຕ່ລະໂຄງການສຳລັບການພັດທະນາຊົນນະບົດ ຕ້ອງດຳເນີນຢູ່ລະດັບແຂວງ ໂດຍອີງຕາມນະໂຍບາຍການກະຈາຍອຳນາດຂອງ ສປປລາວ.
- ການວາງແຜນແບບມີສ່ວນຮ່ວມແຕ່ລຸ່ມຫາເທິງ ແລະ ຂັ້ນຕອນວິທີການປະຕິບັດຈະຕ້ອງໄດ້ໄດ້ປັບ.
- ຈຸດອ່ອນແບບວິທີການເຂດຈຸດສຸມໃນປັດຈຸບັນ ຈະຕ້ອງໄດ້ປັບປຸງໃນການປະຕິບັດບັນດາໂຄງການພັດທະນາຊົນນະບົດທີ່ໄດ້ສະເໜີ. ຈຸດອ່ອນເຫຼົ່ານີ້ ລວມມີຂາດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບອັນຈະແຈ້ງລະຫວ່າງການຈັດຕັ້ງພົວພັນທີ່ກ່ຽວຂ້ອງ, ບໍ່ມີລະບົບຕິດຕາມປະເມີນຜົນ. ພະນັກງານທີ່ມີຄວາມສາມາດບໍ່ພຽງພໍໃນການຈັດຕັ້ງທີ່ມີພົວພັນໃນການວາງແຜນ, ການຄຸ້ມຄອງ. ກິດຈະກຳການປະສານງານ ແລະ ການກວດກາ.

(b) ຍຸດທະສາດສຳລັບວິທີການການພັດທະນາກະສິກຳຫັນສູ່ຕະຫຼາດ.

- ການຄັດເລືອກເຂດທ່າແຮງ ແມ່ນ ນຶ່ງຂອງຫົວຂໍ້ທີ່ສຳຄັນ ພາຍໃຕ້ວິທີການນີ້. ການຄັດເລືອກຕ້ອງສ້າງຂຶ້ນບົນພື້ນຖານຂໍ້ມູນ/ຂ່າວສານທີ່ພົວພັນກັບດິນ, ນ້ຳ ແລະ ຊັບພະຍາກອນ

---

[2] ສຳປະສິດທີ່ພົວພັນກັນລະຫວ່າງກໍລະນີຄວາມທຸກຈົນ ແລະ ຕົວຊີ້ບອກອື່ນ ແມ່ນນຳໃຊ້ຂໍ້ມູນ LECS ຄິດໄລ່. ຈາກຜົນໄດ້ຮັບດັ່ງກ່າວ, ເຫດຂອງຄວາມທຸກຈົນມີການພົວພັນສູງລະຫວ່າງການເຂົ້າຫາຂອງຜູ້ທຸກຈົນ ແລະ ການຂະຫຍາຍຂອງການຖາງປ່າເຮັດໄຮ່. ມັນສາມາດຕີລາຄາໄດ້ຫຼາຍໝູ່ບ້ານຊົນນະບົດກັບການເຂົ້າຫາຄວາມທຸກ ແມ່ນຄວາມທຸກຈົນ ແລະ ຂຶ້ນກັບການກະສິກຳທີ່ຖາງປ່າເຮັດໄຮ່.

ມະນຸດ ກໍຄື ສິ່ງພົວພັນຕ່າງໆໃນດ້ານກະສິກຳຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ/ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ເງື່ອນໄຂຂອງເສັ້ນທາງຈາກພະແນກຄົມມະນາຄົມຂົນສົ່ງແຂວງ/ຄົມມະນາຄົມສົ່ງເມືອງ. ເຂດພື້ນທີ່ທີ່ມີທ່າແຮງສູງ ຈະໄດ້ຄັດເລືອກຢ່າງລະມັດລະວັງດ້ວຍການວິເຄາະຂໍ້ມູນຂ່າວສານເຫຼົ່ານີ້. ໃນເລື່ອງດັ່ງກ່າວນີ້, ຂໍ້ມູນທີ່ໄດ້ມາຈາກໂຄງການກຳລັງດຳເນີນຢູ່ ຂອງການວາງແຜນພັດທະນາຊົນນະບົດຮອບດ້ານ (IRAP) ຈະນຳໃຊ້ໄດ້ດີທີ່ສຸດສຳລັບການຄັດເລືອກຂອງເຂດທີ່ມີທ່າແຮງ.

- ນອກຈາກນັ້ນແລ້ວ, ລະດັບແນວຄິດລິເລີ່ມຂອງຊາວບ້ານ ຫຼື ບ້ານທີ່ມີຈຸດໝາຍສຳລັບພັດທະນາຕ້ອງລະມັດລະວັງ ຢັ້ງຢືນໂດຍການນຳໃຊ້ຂັ້ນຕອນການສຳລວດການມີສ່ວນຮ່ວມ. ແນວຄິດລິເລີ່ມຂອງບ້ານ ຈະຕ້ອງເປັນປັດໃຈສຳຄັນສຳລັບການພັດທະນາກະສິກຳໄປສູ່ຕະຫຼາດ.

(c) ຍຸດທະສາດສຳລັບວິທີການຫຼຸດຜ່ອນຄວາມທຸກຈົນ

- ພື້ນທີ່ເປົ້າໝາຍສຳລັບພັດທະນາຈະໄດ້ຄັດເລືອກບົນພື້ນຖານບັນທັດຖານການຄັດເລືອກສ້າງຂຶ້ນຢ່າງຈະແຈ້ງ. ການເອົາໃຈໃສ່ການຄັດເລືອກບົນພື້ນຖານທ່າແຮງ ບ່ອນທີ່ສ້າງສິ່ງອຳນວຍຄວາມສະດວກຊົນນະບົດທີ່ມີປະສິດທິຜົນໃນການນຳໃຊ້ໂດຍຜູ້ໄດ້ຮັບຜົນປະໂຫຍດ. ຕໍ່ບັນຫາດັ່ງກ່າວນີ້ ບຸລິມະສິດສຳລັບການຄັດເລືອກຈະຕ້ອງໃຫ້ແກ່ເຂດເນື້ອທີ່ ທີ່ມີພົນລະເມືອງໜາແໜ້ນສູງ, ແມ້ວ່າເຂດເນື້ອທີ່ ທີ່ມີພົນລະເມືອງໜາແໜ້ນຕ່ຳ ກໍໄດ້ຄັດເລືອກຢູ່ພາຍໃຕ້ວິທີການ ໂຄງການຈຸດສຸມກຳລັງດຳເນີນຢູ່ໃນປັດຈຸບັນ. ດ້ວຍການຄັດເລືອກເຂດພື້ນທີ່ ທີ່ໄດ້ໃຫ້ສັນຍາເອົາໄວ້ສຳລັບການພັດທະນາ, ການສືບຕໍ່ຊ່ວຍເຫຼືອຈາກສາກົນຈະເປັນທີ່ຄາດຫວັງ.

- ການເຂົ້າຮ່ວມຂອງແມ່ຍິງຈະຕ້ອງໄດ້ຮັບການສົ່ງເສີມ ໃນຄະນະກຳມະການພັດທະນາຊົນນະບົດແຂວງ ແລະ ການຈັດຕັ້ງການພັດທະນາຂອງແຂວງ (PRDOs) ເພື່ອໃຊ້ມາດຕະການ ສຳລັບບົດບາດຍິ່ງຊາຍໃນການວາງແຜນແບບມີສ່ວນຮ່ວມແຕ່ລຸ່ມຫາເທິງ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດ.

(3) **ຂັ້ນຕອນການປະຕິບັດ.**

ເພື່ອຈັດຕັ້ງ ປະຕິບັດການພັດທະນາ ຊົນນະບົດ ຕາມວັດຖຸປະສົງ ແລະ ຍຸດທະສາດ ເທິງນີ້ໄດ້ ສະເໜີສອງໂຄງການ ທີ່ຈະຕ້ອງໄດ້ຈັດຕັ້ງ ພາຍໃຕ້ກອບຂອງ ແນວ ຄວາມ ຄິດ ການພັດທະນາກະສິກຳ ຕາມຄວາມຮຽກຮ້ອງຕ້ອງການ ຂອງຕະຫຼາດ ເຊັ່ນ: 1) ການພັດທະນາກະສິກຳ ລະດັບໝູ່ບ້ານໃນເຂດຊົນນະບົດ ຫ່າງໄກ, ແລະ 2) ໂຄງການພັດທະນາ ກະສິກຳ ແລະ ຊົນນະບົດຮອບດ້ານ ຢູ່ ທົ່ງພຽງບໍລະເວນ. ພ້ອມກັນ ນັ້ນ, ພາຍໃຕ້ກອບ ຂອງແນວຄວາມຄິດ ລຶບລ້າງຄວາມທຸກຈົນ ໄດ້ສະເໜີ. 3) ໂຄງການ ພັດທະນາຊົນນະບົດ ຮອບດ້ານຕາມພື້ນຖານຂອງພື້ນທີ່.

(a) **ການພັດທະນາກະສິກຳ ລະດັບໝູ່ບ້ານໃນເຂດຊົນນະບົດຫ່າງໄກ.**

ໂຄງການນີ້ ໄດ້ຖືກສະເໜີ ເພື່ອສົ່ງເສີມພັດທະນາ ກະສິກຳ ຕາມຄວາມຮຽກຮ້ອງ ຕ້ອງການ ຂອງຕະຫລາດ ໃນເຂດຊົນນະບົດ ທີ່ມີທ່າແຮງ. ໂຄງການຈະສຸມ ໃສ່ຂະຫຍາຍ ເຂດທີ່ມີທ່າແຮງ ການພັດທະນາຫຼາຍກ່ວາ ໂຄງການ ທີ່ສາມ ທີ່ຈະເຈາະຈິ້ງໃສ່ການຫຼຸດຜ່ອນ ຄວາມທຸກຍາກ. ລະດັບຄວາມສາມາດ ແລະ ການມີສ່ວນຮ່ວມ ຂອງໝູ່ບ້ານ ໃນການຂຶ້ນ ແຜນ ຈະເປັນເງື່ອນໄຂຄັດເລືອກ ເຂດໃນຄັ້ງນີ້ດ້ວຍ. ໂຄງການຈະສຸມໃສ່ການ ກໍ່ສ້າງຟື້ນຟູ ເສັ້ນທາງ ຊົນນະບົດ ແລະ / ຫຼື ການພັດທະນາພື້ນທີ່. ເປັນຢ່າງໃດກໍ່ຕາມ ໂຄງປະກອບພື້ນຖານອື່ນໆ ເຊັ່ນ: ຊົນລະປະທານຂະໜາດນ້ອຍ, ໂຄງສ້າງພື້ນຖານການຕະຫາດ, ການສະໜອງ ກະແສໄຟ້າ ແ ລະ ການສະໜອງ ນ້ຳສະອາດຈະໄດ້ຖືກ ນຳສະເໜີ ເໝືອນກັນ ຕາມຄວາມ ຮຽກຮ້ອງຕ້ອງການ ຂອງປະຊາຊົນທີ່ຈະໄດ້ມີການ ຢັ້ງຢືນ ຜ່ານການວິເຄາະ ຄວາມຕ້ອງການ ແບບມີສ່ວນຮ່ວມ ທີ່ຈະຈັດຂຶ້ນໃນໄລຍະ ເລີ່ມຕົ້ນໂຄງການ. ຈະໄດ້ພັດທະນາ ການບໍລິການ ສົ່ງເສີມ ກະສິກຳ ແລະ ສິນເຊື່ອ ຊົນນະບົດ ໄປພ້ອມກັບ ການກໍ່ສ້າງໂຄງລ່າງພື້ນຖານ ທີ່ສະເໜີມານັ້ນ ເພື່ອສົ່ງເສີມ ການຜະລິດເປັນສິນຄ້າ , ລວມທັງການ ລະດົມ ປະຊາຊົນ ໃນຊົນນະບົດ ເພື່ອພັດທະນາ ກະສິກຳ ຕາມຕະຫຼາດ ຈະເປັນອົງປະກອບທີ່ສຳຄັນ ຂອງ ໂຄງການ. ໃນນັ້ນຈະປະກອບມີ ແປງສາທິດ, ໂຮງຮຽນຊາວນາ ປະຕິບັດກັບທີ່ ໃນນາ/ສວນ ຢູ່ໃນໝູ່ບ້ານ. ໃນວຽກງານດັ່ງກ່າວ, ການຝຶກອົບຮົມ ຍົກຄວາມຮູ້ ຄວາມສາມາດ ໃຫ້ແກ່ພະນັກງານກະສິກຳ ປ່າໄມ້ແຂວງ ແລະເມືອງ ຈະເປັນອົງປະກອບອັນສຳຄັນ ອີກອັນໜຶ່ງຂອງໂຄງການ. ມີຄວາມສາມາດ ທີ່ຈະລວບລວມ ໂຄງການນີ້ເຂົ້າກັບ ໂຄງການແລະ ແຜນງານ ພັດທະນາອື່ນໆ ທີ່ໄດ້ສະເໜີ ເພື່ອພັດທະນາກະສິກຳ ຕາມຕະຫລາດ, ລວມທັງໂຄງການເກັບກຳ ຂໍ້ມູນ ດ້ານການ ຕະຫຼາດ, ໂຄງການສົ່ງເສີມດ້ານການຜະລິດພືດ ແລະ ໄມ້ໃຫ້ໝາກ ແລະ ໂຄງການ ພັດທະນາ ການລ້ຽງມ້ອນ ໃນຂັ້ນ

ຕອນທຳອິດນີ້, ກຸ່ມເປົ້າໝາຍຂອງໂຄງການຈະກວາມເອົາ 300 ບ້ານ ສຳລັບໄລຍະ 9 ປີ ແລະ 300 ບ້ານ ໃນໄລຍະ 10 ປີຕໍ່ໄປ.

(b) **ໂຄງການພັດທະນາ ກະສິກຳ ແລະ ຊົນນະບົດຮອບດ້ານຢູ່ເຂດທົ່ງພຽງບໍລະເວັນ**

ໂຄງການດັ່ງກ່າວ ແມ່ນໄດ້ລິເລີ່ມ ຈາກການ ສຶກສາແຜນແມ່ບົດ ຂອງອົງການໃຈກາ ໃນໄລຍະປີ 1995-1996 ສະພາບດ້ານເສດຖະກິດ-ສັງຄົມ ແລະ ທ່າແຮງໃນເຂດ ທົ່ງພຽງ ບໍລິເວນ ກໍ່ມີການປ່ຽນແປງ ແລະ ການສຶກສາແຜນແມ່ບົດ ຄັ້ງນີ້ ໄດ້ສຶກສາ ຄວາມເປັນ ໄປ ໄດ້ ແລະ ໄດ້ກວມເອົາ ສະພາບການຕ່າງໆ ເຊັ່ນ: ການກະສິກຳ, ເສດຖະກິດກະສິກຳ ແລະ ວຽກວິສະວະກຳ. ນອກນັ້ນ, ຍັງໄດ້ວິເຄາະ ຄວາມຕ້ອງການຂອງ ຊາວກະສິກອນ ໃນການພັດທະນາ ໂດຍການວິເຄາະ ຄວາມຕ້ອງການຂອງຊາວກະສິກອນ ໃນການພັດທະນາ ໂດຍການ ວິເຄາະ ພື້ນທີ່ ແບບມີສ່ວນຮ່ວມ. ຜົນຈາກການວິເຄາະ ແລະ ສຳຫລວດເພີ່ມເຕີມ ໄດ້ວາງແນວຄິດ ພື້ນຖານ ໃນການພັດທະນາກະສິກຳ ແລະ ຊົນນະບົດ ໃນນັ້ນ ໄດ້ຢັ້ງຢືນວ່າ ຂໍ້ສະເໜີ ສ້າງໂຄງການ 16 ແຫ່ງໃນບົດວິພາກ ໂຄງການທີ່ເຮັດມາກ່ອນນັ້ນ ແມ່ນຍັງສາມາດ ປະຕິບັດໄດ້ໃນກອບ ຂອງວຽກງານ ພັດທະນາຊົນນະບົດ . ໃນການຈັດຕັ້ງປະຕິບັດ ໄດ້ຈັດບຸລິມະສິດ ໃຫ້ແກ່ສອງໂຄງ ການຄື: ໂຄງການຈຳປີ ຕອນເທິງ ແລະ ໂຄງການເຊຕາປຸງ ຕອນເທິງ ໂດຍໄດ້ສຶກສາ ສະພາບການປ່ຽນແປງ ດ້ານເສດຖະກິດ ສັງຄົມໃນເຂດທົ່ງພຽງ ບໍລະເວນ ຄືນໃໝ່. ໂຄງການສອງ ໂຄງການດັ່ງກ່າວ ຈະຖືກປະຕິບັ ເປັນຕົວແບບ ໃຫ້ແກ່ 16 ໂຄງການ; ອົງປະກອບຂອງໂຄງການ ປະກອບດ້ວຍ: 1) ການຟື້ນຟູກໍ່ສ້າງແຕ່ຟາມ ເຖິງຕະຫລາດ, 2) ການສ້າງຟາມສາທິດ, 3) ການສ້າງສະຖານີ ທົດລອງຂອງ NAFRI, 4) ການກໍ່ສ້າງໂຄງລ່າງພື້ນຖານ ດ້ານສັງຄົມ(ໂຮງຮຽນ, ນ້ຳສະອາດ, ຕະຫລາດແລະ ອື່ນໆ); 5) ການຊ່ວຍເຫຼືອດ້ານວິຊາການ ເພື່ອການອອກແບບ ກໍ່ສ້າງ, 6) ການຊ່ວຍເຫຼືອດ້ານວິຊາການ ຊ່ວຍ NAFRI, ແລະ 7) ການຊ່ວຍເຫຼືອດ້ານວິຊາການ ເພື່ອການພັດທະນາ ກະສິກຳເຊັ່ນ ໃຫ້ແກ່ວຽກງານສົ່ງເສີມ, ການຄຸ້ມຄອງນຳໃຊ້ ຊົນລະປະທານ ແລະ ການຄຸ້ມຄອງການຕະຫຼາດ.

(c) **ໂຄງການພັດທະນາຊົນນະບົດຮອບດ້ານບົນພື້ນຖານພື້ນທີ່.**

ໂຄງການພັດທະນາຊົນນະບົດ ຮອບດ້ານຕາມເຂດແຄວັນ ຈະປະຕິບັດໄປຕາມກອບຂອງຍຸດທະສາດ ຈຸດສຸດທີ່ກຳລັງດຳເນີນຢູ່ໃນປັດຈຸບັນ. ແຕ່ເຖິງຢ່າງໃດກໍ່ຕາມ ກໍ່ຍັງໄດ້ພິຈາລະນາຕາມກອບເພື່ອປັບປຸງດັ່ງໄດ້ອະທິບາຍໄວ້ຂ້າງເທິງ. ໂຄງການພັດທະນາດັ່ງກ່າວຕ້ອງໄດ້ປັບການຈັດຕັ້ງປະຕິບັດ ຢູ່ພາຍໃຕ້ໂຄງລ່າງຊົນນະບົດ / ສິ່ງອຳນວຍຄວາມສະດວກເຊັ່ນ

ທາງຊົນນະບົດອາຄານໂຮງຮຽນ, ໂຮງໝໍ ແລະ ວັດຖຸອຸປະກອນສຳລັບການສະໜອງນ້ຳຈະຕ້ອງໄດ້ປັບປຸງບົນພື້ນຖານຄວາມຕ້ອງການຂອງປະຊາຊົນທ້ອງຖິ່ນໃນໝູ່ບ້ານທຸກຈົນທີ່ໄດ້ຄັດເລືອກ. ໂຄງລ່າງສິ່ງອຳນວຍຄວາມສະດວກທັງໝົດຈະມີໄວ້ເພື່ອຈຸດປະສົງ ໃນການປັບປຸງຕົວຊີ້ບອກຂອງສັງຄົມໃນເຂດໝູ່ບ້ານທີ່ຄັດເລືອກ ເພື່ອເຮັດໃຫ້ການປະຕິບັດງານ ແລະ ຄຸ້ມຄອງໂຄງການທີ່ມີປະສິດທິຜົນ, ການຝຶກອົບຮົມພະນັກງານ ໃນຄະນະກຳມະການພັດທະນາຊົນນະບົດແຂວງ/ຫ້ອງການພັດທະນາຂອງແຂວງ ແລະ ບັນດາຫ້ອງການຂອງເມືອງທີ່ກ່ຽວຂ້ອງຈະຕ້ອງໄດ້ຈັດຢູ່ພາຍໃຕ້ໂຄງການນີ້. ນອກຈາກນັ້ນ ໂຄງການຈະຕ້ອງໄດ້ຈັດການຝຶກອົບຮົມໃຫ້ແກ່ຊາວບ້ານ ດ້ານການນຳໃຊ້ ແລະ ການສ້ອມແປງສິ່ງອຳນວຍຄວາມສະດວກຕ່າງໆ. ຈຳນວນເປົ້າໝາຍຂອງບ້ານທີ່ເອົາເຂົ້າໄວ້ໃນຕາຕະລາງໃນໄລຍະນີ້ແມ່ນ 1500 ສຳລັບຊ່ວງ 19 ປີ ຕໍ່ໜ້າ ແລະ 1,500 ໃນໄຍະ 10 ປີ ຕໍ່ໄປ ເປົ້າໝາຍດັ່ງກ່າວແມ່ນໄດ້ຕັດສິນບົນພື້ນຖານ ກຳນົດບ້ານເປົ້າໝາຍ 950 ບ້ານ ທີ່ຈະໄດ້ຢູ່ ໃນໂຄງການ ພັດທະນາ ຊົນນະບົດ ທີ່ກຳລັງດຳເນີນແຕ່ປີ 1995-2000.

(4) **ຄາດຄະເນຜົນທີ່ໄດ້ຮັບ**

(a) **ແນວຄວາມຄິດພັດທະນາ ຊົນນະບົດ ໂດຍການພັດທະນາ ກະສິກຳຕາມຕະຫລາດ.**

ການສະເໜີໂຄງການ ການບໍລິການສົ່ງເສີມ ແລະ ການເງິນຂະໜາດນ້ອຍຈະຮັບປະກັນການຜະລິດ ຜະລິດຕະພັນສິນຄ້າ ບໍ່ພຽງແຕ່ໃນເຂດຊົນລະປະທານທີ່ຈະຕ້ອງຟື້ນຟູ ໃນເຂດໂຄງການເທົ່ານັ້ນ, ແຕ່ກໍໃນເຂດ ເນື້ອທີ່ກະສິກຳເນີນສູງ ແລະ ເນື້ອທີ່ກະສິກຳເຂດທົ່ງພຽງເໝືອນກັນ. ການປັບປຸງເສັ້ນທາງຊົນນະບົດ ແລ້ວ ຈະຊຸກຍູ້ຊາວນາ ສຳລັບການຕະຫຼາດຜົນຜະລິດຂອງເຂົາເຈົ້າ. ຂໍ້ມູນດ້ານການຕະຫຼາດຕໍ່ຜົນຜະລິດທີ່ເປັນທ່າແຮງໄດ້ສະໜອງໃຫ້ໄດ້ເໝືອນກັນ ດ້ວຍການ ການບໍລິການສົ່ງເສີມ. ເຖິງແມ່ນວ່າການຄ້າຂາຍ, ຈະເປັນລະດັບຂະໜາດນ້ອຍ ໃນຊ່ວງໄລຍະຕົ້ນຂອງໂຄງການ, ຈະເພີ່ມຂຶ້ນເທື່ອລະນ້ອຍ ໂດຍການນຳໃຊ້ຈຸດເກັບຊື້ທີ່ຈະສາມາດເປັນໄປໄດ້ ໃນການຈັດຕັ້ງຊາວນາເຂົ້າໃນກຸ່ມຂອງຕະຫຼາດ ສຳລັບຂາຍຜະລິດຕະພັນ ຂອງເຂົາເຈົ້າຮ່ວມກັນ. ຍິ່ງໄປກ່ວານັ້ນ ການສະເໜີໂຄງການການເງິນຂະໜາດນ້ອຍຈະຊຸກຍູ້ຊາວນາໃນການລົງທຶນໃນການສ້າງແຫຼ່ງລາຍຮັບຫຼາຍຢ່າງ ທີ່ຮວມເອົາການລ້ຽງສັດ, ການລ້ຽງປາ, ສັດປີກ, ການປູກໄມ້ໃຫ້ໝາກ ແລະ ແມ້ແຕ່ການທຸລະກິດການປຸງແຕ່ງກະສິກຳ ກໍຮວມຢູ່ດ້ວຍ. ຈາກທັດສະນະຂ້າງເທິງນັ້ນ, ຄາດຄະເນຜົນທີ່ຈະໄດ້ຮັບ ຫຼື ຜົນປະໂຫຍດຈາກໂຄງການທີ່ໄດ້ສະເໜີມາ ແມ່ນມີດັ່ງລຸ່ມນີ້

- ຂະຫຍາຍກະສິກຳສູ່ຕະຫຼາດ ໃນເຂດພື້ນທີ່ຊົນນະບົດຫ່າງໄກ.
- ປັບປຸງເຕັກໂນໂລຊີການຜະລິດຂອງຊາວນາ ໃນການຜະລິດ ໃຫ້ມີລາຄາສູງ,

- ເພີ່ມການສະໜອງສິນຜະລິດສູ່ຕະຫຼາດ ທັງຕະຫຼາດພາຍນອກ ແລະ ພາຍໃນ,
- ເພີ່ມລາຍຮັບ ແລະ ປັບປຸງມາດຖານຊີວິດການເປັນຢູ່ ຂອງຄອບຄົວຊາວກະສິກອນ.
- ເພີ່ມຄວາມຮູ້ຄວາມສາມາດ ຂອງພະນັກງານ ກະສິກຳ ປ່າໄມ້ແຂວງ/ເມືອງໃນການວາງແຜນ ແລະ ປະຕິບັດໂຄງການ.

(b) **ແນວຄວາມຄິດການຫຼຸດຜ່ອນຄວາມທຸກຍາກ.**

ເປົ້າໝາຍພື້ນຖານຂອງໂຄງການທີ່ໄດ້ສະເໜີ ເພື່ອຫຼຸດຜ່ອນຄວາທຸກຈົນໃນເຂດພື້ນທີ່ຊົນນະບົດ ບ່ອນທີ່ມີຕົວຊີ້ບອກຂອງການພັດທະນາສັງຄົມຕ່ຳກ່ວາຫຼາຍໃນເຂດພື້ນທີ່ໃນເມືອງ. ໂຄງການທີ່ໄດ້ສະເໜີນີ້ ແມ່ນປະຕິບັດຫຼັກການ ສຳລັບການພັດທະນາ ຫຼື ການປັບປຸງຂອງໂຄງລ່າງຊົນນະບົດ ທີ່ຈະນຳເອົາສະພາບ ຊີວິດການເປັນຢູ່ທີ່ດີຂຶ້ນ ແກ່ພົນລະເມືອງໃນເຂດຊົນນະບົດ. ເຖິງແມ່ນວ່າ ການຄາດຄະເນຜົນກະທົບຈະແຕກຕ່າງກັນຫຼາຍໃນໝູ່ບ້ານເປົ້າໝາຍທີ່ແຕກຕ່າງກັນ (ຫຼື ກຸ່ມບ້ານເປົ້າໝາຍ), ໂຄງການທີ່ໄດ້ສະເໜີ ຈະປັບປຸງເງື່ອນໄຂທາງດ້ານສຸຂະອານະໄມ, ການສຶກສາ, ການຂົນສົ່ງ ແລະ ການຄົມມະນາຄົມ ຂອງຊົນນະບົດ. ນອກຈາກນັ້ນຄ້າຍໆກັບໂຄງການອື່ນໆຂອງບ້ານລິເລີ່ມ ໃນການພັດທະນາກະສິກຳໃນເຂດພື້ນ ທີ່ຊົນນະບົດຫ່າງໄກ, ການສ້າງທາງໃຫ້ຊົນນະບົດ ຈະເລັ່ງກິດຈະກຳການສ້າງລາຍຮັບ ໃນເຂດພື້ນທີ່ຊົນນະບົດຫ່າງໄກ. ຍິ່ງໄປກ່ວານັ້ນການໃຫ້ພະລັງແກ່ຊາວບ້ານ ແລະ ຊຸມຊົນບ້ານຄາດໄວ້ໃນ ໃນດ້ານການນຳໃຊ້ ແລະ ສ້ອມແປງໂຄງລ່າງສິ່ງອຳນວຍຄວາມສະດວກ.

6.11 **ຊົນລະປະທານ.**

(1) **ຈຸດປະສົງການພັດທະນາ.**

ບົນພື້ນຖານ "ຍຸດທະສາດວິໄສທັດ", ຈຸດປະສົງສຳລັບການພັດທະນາ ແລະ ການຄຸ້ມຄອງ ໄດ້ຈັດໄດ້ດັ່ງນີ້:

1). ເພື່ອຮັບປະກັນສະບຽງອາຫານ ໂດຍປັບປຸງຜະລິດຕະພາບ ພາຍໃຕ້ລະບົບຊົນລະກະເສດ.

2). ຫຼຸດຜ່ອນຄວາມທຸກຈົນໃນເຂດພື້ນທີ່ຫ່າງໄກສອກຫຼີກ ໂດຍສ້າງລາຍຮັບດ້ວຍການສົ່ງເສີມການປູກພືດປະສົມປະສານພາຍໃຕ້ຊົນລະປະທານ.

3). ຍຸດຕິການຖາງປ່າເຮັດໄຮ່ ແລະ ປ້ອງກັນແຫຼ່ງນ້ຳ.

4). ເພື່ອຊ່ວຍສະມາຄົມຜູ້ນຳໃຊ້ນ້ຳ (WUA) ດ້ວຍການຝຶກອົບຮົມ, ປັບປຸງການຈັດຕັ້ງໃຫ້ເຂັ້ມແຂງ ແລະ ສ້າງຕັ້ງສະຖາບັນພາຍໃຕ້ຂະບວນການການມອບໂອນການຄຸ້ມຄອງຊົນລະປະທານ.

(2) ຍຸດທະສາດພັດທະນາ.

ນັບແຕ່ອອກດຳລັດນາຍົກລັດຖະມົນຕີ" ໂຄງການມອບໂອນຊົນລະປະທານແກ່ການຈັດຕັ້ງຊຸມຊົນຢ່າງເຕັມສ່ວນ" ໃນປີ 1998, ລັດຖະບານໄດ້ພະຍາຍາມປັບນະໂຍບາຍ ການມອບໂອນການຄຸ້ມຄອງຊົນລະປະທານໃນທົ່ວປະເທດສຳລັບລະບົບຊົນລະປະທານທັງໝົດໃຫ້ເປັນເຈົ້າຂອງກໍ່ຄືທັງຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດຂອງຊາວນາ ເພື່ອຫຼຸດຜ່ອນການຊົດເຊີຍໃຫ້ຂະແໜງຊົນລະປະທານຈະລົດລົງ. ເຖິງຢ່າງໃດກໍ່ຕາມ ຍ້ອນການຂາດໄຊມຂອງຊົນລະປະທານທີ່ມີຢູ່ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ພົວພັນອື່ນໆ ແລະ ການຂາດກະຕຸກຊຸກຍູ້ຂອງຊາວນາຍ້ອນລາຄາເຂົ້າ ຫຼື ພືດຕ່າງໆໃນຕະຫຼາດຕ່ຳ ແລະ ຕະຫຼາດທີ່ມີ ໂດຍສະເພາະພື້ນທີ່ຊົນນະບົດ, ການເຮັດກະເສດສຸມ ໃນລະດູແລ້ງໃນເຂດຊົນລະປະທານຂ້ອນຂ້າງຕ່ຳ. ຍ້ອນແນວນັ້ນການຟື້ນຟູລະບົບທີ່ມີຄຽງຄູ່ໄປກັບການປັບປຸງສາມາຄົມຜູ້ນຳໃຊ້ນ້ຳໃຫ້ເຂັ້ມແຂງເພື່ອໃຫ້ກຳໄດ້ ແລະ ຍົກລະດັບໜ້າທີ່ຂອງເຂົາເຈົ້າ ແລະ ສິ່ງສຳຄັນທັງໝົດກ່ອນການມອບໂອນການຄຸ້ມຄອງຊົນລະປະທານຕົວຈິງ.

ອີງຕາມຍຸດທະສາດຂອງລັດຖະບານ, ອີກດ້ານນຶ່ງເນື້ອທີ່ຊົນລະປະທານຕ້ອງໄດ້ຮັບການສືບຕໍ່ຂະຫຍາຍ ຢ່າງເອົາຈິງເອົາຈັງ ໃນຕໍ່ໜ້າ ເພື່ອໃຫ້ບັນລຸເປົ້າໝາຍ ເນື້ອທີ່ຮັບນ້ຳ 800,000 ເຮັກຕາໃນລະດູຝົນ ແລະ 400,000 ເຮັກຕາ ໃນລະດູແລ້ງໃນ 2020. ເຖິງຢ່າງໃດກໍ່ຕາມການຄາດຄະເນພື້ນຖານ ການດຸ່ນດ່ຽງເຂົ້າສຳລັບປີ 2010 ແລະ 2020 ໃນຕາຕະລາງ 3.15 ສະແດງໃຫ້ເຫັນວ່າການກຸ້ມເຂົ້າກິນສາມາດເຮັດໄດ້ໂດຍພື້ນຖານດ້ວຍການປັບປຸງຜະລິດຕະພາບ ໃນລະບົບຊົນລະປະທານທີ່ມີໃນປັດຈຸບັນ. ກໍ່ຄືກິດຈະກຳຂອງຊົນລະປະທານເຫຼົ່ານີ້ຈະຕ້ອງດຳເນີນພາຍໃຕ້ການມອບໂອນການຄຸ້ມຄອງຊົນລະປະທານດັ່ງກ່າວຂ້າງເທິງ. ບົນພື້ນຖານດັ່ງກ່າວນີ້, ການປັບປຸງ, ການຍົກລະດັບ ແລະ ການສ້າງຄວາມເຂັ້ມແຂງ ລະບົບຊົນລະປະທານທີ່ມີໃນປັດຈຸບັນແນະນຳໃຫ້ປະຕິບັດກ່ອນການພັດທະນາລະບົບຊົນລະປະທານໃໝ່ຂະໜາດໃຫຍ່. ເຖິງຢ່າງໃດກໍ່ຕາມພ້ອມດຽວກັນນັ້ນຕ້ອງໄດ້ພິຈາລະນາວ່າເນື້ອທີ່ ທີ່ເປັນທ່າແຮງກໍ່ຄືຊັບພະຍາກອນ, ເປັນຕົ້ນຊັບພະຍາກອນແຫຼ່ງນ້ຳ ທີ່ຈະຂຸດຄົ້ນຈາກຂະແໜງການອື່ນຄວນໃຫ້ນຳໃຊ້ຢ່າງມີປະສິດທິຜົນສຳລັບຂະແໜງການກະສິກຳ.

ຍ້ອນແນວນັ້ນເນື້ອທີ່ເຫຼົ່ານີ້ ຈະຕ້ອງໄດ້ພິຈາລະນາເໝືອນກັນສຳລັບການພັດທະນາໃນອານາຄົດ, ຂະນະທີ່ສະຖານະພາບໃກ້ຄຽງຕະຫຼາດບໍ່ພຽງແຕ່ໃນລາວ ແຕ່ກໍ່ຄືຕະຫຼາດປະເທດໃກ້ຄຽງອື່ນໆໃນອະນາຄົດບໍ່ສົດໃສ ແລະ ຍ້ອນແນວນັ້ນອາດຈະຈຳເປັນເພື່ອເພີ່ມການຜະລິດສະບຽງອາຫານພຽງພໍຢ່າງ ແຂງແຮງ.

ນອກຈາກການເນັ້ນໜັກ ຈະຕ້ອງເປັນໄປຕາມສະພາບ ທີ່ບໍ່ແມ່ນການຜະລິດກະສິກຳ ຂະໜາດນ້ອຍ, ທົ່ງນາ ແລະ ຊັບສິນບັດຕ່າງໆທີ່ພົວພັນກັນ ຮວມທັງລະບົບຊົນລະປະທານແມ່ນໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມຈາກລະດູຝົນ ຢູ່ພື້ນທີ່ຫຼຸບນ້ຳລຽບຕາມສາຂາແມ່ນ້ຳຂອງ ໃນວຽງຈັນ ແລະ ແຂວງພາກກາງ - ພາກໃຕ້, ຍ້ອນແນວນັ້ນ ມາດຕະການຫຼີກເວັ້ນຄວາມເສຍຫາຍຈະຕ້ອງເປັນວຽກດ່ວນ ພາຍໃຕ້ຂະແໜງການຍ່ອຍຊົນລະປະທານ ເພື່ອຮັບປະກັນການຜະລິດອາຫານພາຍປະເທດ.

ແຜນປະຕິບັດການສະລັບຂະແໜງການຍ່ອຍຊົນລະປະທານໄດ້ສ້າງຂຶ້ນ ຕາມແນວຄິດດັ່ງລຸ່ມນີ້:

*1). ການຟື້ນຟູແລະ ຂະຫຍາຍລະບົບຊົນລະປະທານມີດ່ ງຽງຄູ່ກັບຄວາມຕ້ອງການ ໃນການຊຸກຍູ້ສະມາຄົມຜູ້ນຳໃຊ້ນ້ຳຈະຕ້ອງໄດ້ດຳເນີນ ເພື່ອປັບປຸງຜະລິດຕະພາບພາຍໃຕ້ຂະບວນການມອບໂອນການຄຸ້ມຄອງຊົນລະປະທານ.*
*2). ນຳໃຊ້ຊັບພະຍາກອນແຫຼ່ງນ້ຳຢ່າງມີປະສິດທິຜົນ ດ້ວຍການແນະນຳ ແລະ ສົ່ງເສີມການປູກພືດທີ່ມີລາຄາສູງ ເພື່ອສ້າງລາຍຮັບຊາວນາຈະຕ້ອງໄດ້ພິຈາລະນາ.*
*3). ປ້ອງກັນການຜະລິດກະສິກຳ ແລະ ຊັບສິນບັດຕ່າງໆຮວມທັງລະບົບຊົນລະປະທານຢູ່ເຂດເນື້ອທີ່ໜອງນ້ຳລຽບຕາມສາຂາແມ່ນ້ຳຂອງຈະຕ້ອງໄດ້ຈັດຕັ້ງປະຕິບັດຢ່າງຮີບດ່ວນ.*

ບົນພື້ນຖານແນວຄິດດັ່ງກ່າວ, ອົງປະກອບຍ່ອຍຕົ້ນຕໍໄດ້ສະເໜີດັ່ງນີ້:

1). ພັດທະນາລະບົບຊົນລະປະທານຂະໜາດນ້ອຍ ແລະ ຄຸ້ມຄອງດ້ວຍການຊຸກຍູ້ການມອບໂອນການຄຸ້ມຄອງຊົນລະປະທານ (IMT) (ການຈັດຕັ້ງປະຕິບັດ).

ເພື່ອໃຫ້ໄດ້ຮັບຜົນສຳເລັດໃນການຈັດຕັ້ງປະຕິບັດຂອງ IMT, ວຽກຟື້ນຟູຊົນລະປະທານກັບການສ້າງຄວາມເຂັ້ມແຂງແກ່ສະມາຄົມຜູ້ນຳໃຊ້ນ້ຳ, ສ້າງຕັ້ງສະຖາບັນ ຈະຕ້ອງສືບຕໍ່ເຮັດໃຫ້ດີຂຶ້ນຢ່າງເອົາຈິ່ງເອົາຈັງ ແລະ ຍົກລະດັບໜ້າທີ່ຕາມລະບົບຊົນລະປະທານຕ່າງໆທີ່